# ໂຄງການພຸດທະສາສໜາເພື່ອການພັດທະນາ

# ແບບບົດສອນ ສິນທ້າ

## ສຳລັບນັກຮຽນຂັ້ນປະຖົມສຶກສາ

(ສະບັບທົດລອງ)

**ພິມຄັ້ງທີສອງ ຈຳນວນ: 300 ສະບັບ**



ໜ່ວຍງານທັມມະສັນຈອນ

*<u>ຮ່ວມກັບ</u>*

ສູນອົບຮົມຮ່ວມພັດທະນາ

2008

**ຄວາມເປັນມາ:**

ພຣະສົງໃນໜ່ວຍງານທັມມະສັນຈອນ ໄດ້ສອນສີລະທັມແກ່ເດັກຂັ້ນປະຖົມ 5 ປີມານີ້ ເຫັນວ່າເດັກບ່ອນທີ່ໄປສອນ ມີພຶດຕິກຳປ່ຽນແປງໃນທາງດີຂື້ນ. ການສອນສີລະທັມໃນໂຮງຮຽນ ເປັນສິ່ງຈຳເປັນໃນການສ້າງຊັບພະຍາກອນມະນຸດ ເພື່ອຕອບສະໜອງກັບການພັດທະນາປະເທດຊາດ. ແຕ່ພຣະສົງໃນໜ່ວຍງານຍັງສະໜອງບໍ່ທົ່ວເຖີງ ກັບຄວາມຕ້ອງການຂອງຊຸມຊົນ ກໍຄືໂຮງຮຽນຕ່າງໆ.

ດັ່ງນັ້ນ ຈິ່ງໄດ້ຮິບໂຮມ ເບນຈະສິນ-ເບນຈະທັມ (**ສິນຫ້າ**)ສ້າງເປັນປື້ມຄູ່ມືເພື່ອເສີມທັກສະ ແລະຄວາມຮູ້ໃນການສອນຂອງຄູຕື່ມອີກ.

**ຈຸດປະສົງ:**

- ເພື່ອເປັນຄູ່ມືໃຫ້ກັບຄູຜູ້ສອນສີລະທັມ.
- ເພື່ອໃຫ້ເດັກຈື່ຈຳຂໍ້ສິນຫ້າປະການ ທີ່ທຸກຄົນຕ້ອງປະຕິບັດ.
- ເພື່ອໃຫ້ເດັກຮັກຕົນເອງ,ຮັກຜູ້ອື່ນ,ຮັກທັມມະຊາດ,ມີຄວາມສາມັກຄີ ກັບຜູ້ອື່ນ
- ເພື່ອໃຫ້ເດັກມີສະຕິໃນການເຕືອນຕົນເອງໄດ້.

**ເນື້ອໃນ:**

- ການສຶກສາຄວາມໝາຍຂອງສິນ.
- ການສຶກສາຂໍ້ຂອງສິນ.
- ການຮຽນຮູ້ທັມມະຊາດທີ່ຢູ່ໃກ້ຕົວ.
- ການທ່ອງກາບກອນ ກ່ຽວກັບຂໍ້ຂອງສິນ.
- ການຟັງນິທານ ປູກຝັງຈິດສຳນຶກ.

**ວິທີການ:**

- ເລົ່ານິທານ.
- ຫຼີ້ນເກມ.
- ນຳພາເດັກ ສຳຜັດຊີວິດສັດທີ່ຢູ່ໃກ້ຕົວ.
- ແບ່ງກຸ່ມຄົ້ນຄວ້າ ນຳສະເໜີ.
- ຈົດກ່າຍຂໍ້ສິນ ເພື່ອທ່ອງຈຳໃຫ້ໄດ້.

**ສະຖານທີ່:** ໃນໂຮງຮຽນທົດລອງຄຸນນະພາບຂັ້ນປະຖົມ ທົ່ວນະຄອນຫຼວງວຽງຈັນ.

**ກຸ່ມເປົ້າໝາຍ:** ຄູສອນສີລະທັມ ແລະເດັກຂັ້ນປະຖົມ.

**ຜົນຄາດຈະໄດ້ຮັບ:**

- ເດັກສາມາດຮູ້ຈັກ ຂໍ້ສິນຫ້າປະການແລ້ວສາມາດນຳໄປປະຕິບັດໃນຊີວິດປະຈຳວັນ.
- ເດັກສາມາດຄວບຄຸມພຶດຕິກຳຕົນເອງ ດ້ວຍຈິດສຳນຶກທີ່ຖືກຕ້ອງ.
- ເດັກມີຄວາມສາມັກຄີ ບໍ່ແຂງກະດ້າງຮຸນແຮງ ຮູ້ຮັກທັມມະຊາດຫລາຍຂື້ນ.

# <u>ຄຳປາລົບ</u>

ສິນທັມນຳຄວາມຮູ້ ເຊີດຊູສັງຄົມ ໃຫ້ອຸດົມດ້ວຍຄວາມສຸກກາຍສະບາຍໃຈ ໃນການດຳລົງຊີວິດຢູ່ຮ່ວມກັນເປັນສັງຄົມຊຸມຊົນ ຄົນເຮົາທີ່ຢູ່ຮ່ວມກັນເປັນໝູ່ຄະນະ ບໍ່ວ່າຊຸມຊົນນ້ອຍ ຫຼືຊຸມຊົນໃຫຍ່ໄປຈົນເຖິງລະດັບປະເທດຊາດ ຂາດບໍ່ໄດ້ໃນການບໍລິຫານ ການປົກຄອງຂອງຄົນເຮົາທີ່ຈະບໍ່ມີກົດກະຕິກາຂອງສັງຄົມມາຮອງຮັບ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຄວນມີຄວນໄດ້ທີ່ເປັນໄປໃນທາງສິນທັມຂອງບຸກຄົນ ກົດກະຕິກາອັນນັ້ນກໍຄືກົດໝາຍທີ່ຊາວບ້ານເຂົ້າໃຈກັນຢ່າງກວ້າງຂວາງ ສຳຫຼັບໃນທາງພຸດທະສາສະໜາ ປະກອບກັບຮີດຄອງປະເພນີ ແລະວັດທະນະທຳຂອງລາວເຮົາ ກໍຍ່ອມມີກົດກະຕິກາທີ່ມີມາຕັ້ງແຕ່ດັ້ງເດີມແລ້ວ ກ່ອນຈະເກີດມີຄຳວ່າ ກົດໝາຍເສຍອີກ ຊຶ່ງອົງສົມເດັດພຣະສັມມາສັມພຸດທະເຈົ້າຂອງເຮົາໄດ້ບັນຍັດໄວ້ໃຫ້ປະຊາຊົນນຳມາສຶກສາປະພຶດປະຕິບັດໃນການດຳເນີນຊີວິດ ເພື່ອຊີວິດອັນສະຫງ່າງາມ ນັ້ນກໍຄື ເບນຈະສິນ-ເບນຈະທັມ.

ໜ່ວຍງານທັມມະສັນຈອນ ເປັນໜ່ວຍງານໜຶ່ງທີ່ຂຶ້ນກັບໂຄງການພຸດທະສາສະໜາເພື່ອການພັດທະນາ (ຄພພ) ເຊິ່ງໄດ້ຮວບຮວມ ເຝິກອົບຮົມເອົາພຣະສົງອາສາສະໝັກເຂົ້າມາເປັນສະມາ-ຊິກສອນສິລະທັມໃຫ້ລູກຫຼານເຍົາວະຊົນ-ຊາວໜຸ່ມໃນໂຮງຮຽນ. ນອກນັ້ນກໍຍັງໄດ້ເຄື່ອນໄຫວລົງບັນຍາຍທັມຕາມຊຸມຊົນ, ຕາມສະຖາບັນການສຶກສາໃນລະດັບອຸດົມສຶກສາ ສົນທະນາທັມອອກອາກາດທາງໂທລະພາບ ເປັນຕົ້ນ.

ໃນການສອນສິນທັມໃນໂຮງຮຽນນັ້ນ ກໍມີຫຼາຍວິຊາເຊັ່ນ: ສາສະນະພິທີ ແລະວັດທະນະທຳລາວ, ທັມມະປະຍຸກ, ພຸດທະປະຫວັດເບື້ອງຕົ້ນ, ເບນຈະສິນ-ເບນຈະທັມ, ຈິດຕະພາວະນາ ຂັ້ນພື້ນຖານ, ສູດສາລະພັນປູກຈິດສຳນຶກ ຊຶ້ງທັງໝົດນີ້ອາດຈະເອີ້ນຮວມຄວາມໄດ້ວ່າ: **ທັກສະຊີ ວິດທາງພຸດທະສາສະໜາ** (Buddhist Life Skill) ກໍວ່າໄດ້.

ວິຊາເບນຈະສິນ-ເບນຈະທັມ ເປັນວິຊາໜຶ່ງທີ່ສຳຄັນໃນການນຳເຂົ້າໄປສອນເຍົາວະຊົນໃນໂຮງຮຽນ ອັດຕະມາ ໃນນາມໜ່ວຍງານພຣະທັມມະສັນຈອນ ຈຶ່ງໄດ້ຈັດສັນຫາຂໍ້ມູນທາງດ້ານຫຼັກເບນຈະສິນ-ເບນຈະທັມ ໃຫ້ທ່ານອາຈານຄຳສິງ ວົງສະຫວ່າງ ແລະທ້າວບຸນປັນ ເຊິ່ງເປັນພະນັກງານສູນອົບຮົມຮ່ວມພັດທະນາ (ສຮພ) ໃນຖານະຜູ້ປະສານງານພຣະທັມມະສັນຈອນ ໄດ້ນຳເອົາໄປປະກອບກິດຈະກຳອື່ນໆ ເຊັ່ນ: ນິທານພື້ນບ້ານ ແລະນິທານຈາກແຫຼ່ງຂໍ້ມູນອື່ນໆ, ບົດສູດສາລະພັນ, ບົດເພັງທັມມະ ທີ່ເຫັນວ່າມັນສອດຄ່ອງກັບເບນຈະສິນ-ເບນຈະທັມແຕ່ລະຂໍ້ ເພື່ອສ້າງຄວາມສົນອົກສົນໃຈໃຫ້ລູກຫຼານເຍົາວະຊົນ ຮູ້ສຶກວ່າຮຽນສິລະທັມກໍເປັນເລື່ອງໜ້າຍິນດີ ຄວນແກ່ການນຳໄປປະພຶດປະຕິບັດໃນຊີວິດປະຈຳວັນ ບໍ່ເປັນສິ່ງທີ່ໜ້າເບື່ອ ແລະບໍ່ເປັນເລື່ອງທີ່ລ້າສະໄໝສາມາດເຂົ້າໄດ້ກັບທຸກຍຸກທຸກສະໄໝ; ອີກປະການໜຶ່ງກໍແມ່ນເພື່ອເປັນແນວທາງໃນການສອນສິລະທັມຂອງພຣະອາສາສະໝັກ ພ້ອມດ້ວຍຄູ-ອາຈານໃນໂຮງຮຽນຕ່າງໆທີ່ມີຄວາມສົນໃຈນຳໄປສິດສອນນັກຮຽນຂອງຕົນເອງ ເພາະວ່າບາງໂຮງຮຽນກໍຍັງບໍ່ທັນມີພຣະອາສາສະໝັກເຂົ້າໄປສິດ

ສອນສິລະທັມໃຫ້ເລີຍ ຍ້ອນພຣະອາສາສະໝັກຍັງບໍ່ພຽງພໍຕໍ່ຄວາມຕ້ອງການຂອງໂຮງຮຽນທີ່ໄດ້ ສະເໜີເຂົ້າມາໃຫ້ພຣະໄປສອນສິລະທັມໃນໂຮງຮຽນຂອງທ່ານ. ດັ່ງນັ້ນປຶ້ມເຫຼັ້ມນີ້ຄົງຈະເປັນແນວ ທາງທີ່ດີອັນໜຶ່ງໃນການສອນສິນທັມ. ຫວັງວ່າຄົງຈະເປັນປະໂຫຍດບໍ່ໜ້ອຍເລີຍ ຖ້າຫາກພວກ ເຮົາຊ່ວຍກັນຂົນຂວາຍນຳເອົາໄປອົບຮົມລູກຫຼານ ຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ ສັນສ້າງ ບຸກຄະລາກອນທີ່ດີມີຄຸນນະພາບໃຫ້ແກ່ສັງຄົມປະເທດຊາດ.

ຂໍຂອບອົກຂອບໃຈ ນຳທາງສູນອົບຮົມຮ່ວມພັດທະນາ ທີ່ໄດ້ຊ່ວຍອຸປະຖຳສ້າງປຶ້ມຄູ່ມືເບນ ຈະສິນເບນຈະທັມເຫຼັ້ມນີ້ເພື່ອໃຫ້ປະໂຫຍດແກ່ສັງຄົມລາວເຮົາ ຂໍໃຫ້ຜູ້ອຳນວຍການສູນພ້ອມດ້ວຍຄະ ນະບໍລິຫານພະນັກງານ ອາສາສະໝັກທຸກໆທ່ານມີແຕ່ຄວາມສຸກຄວາມຈະເລີນຕະຫຼອດໄປ ກ້າວໄກ ໃນໜ້າທີ່ການງານທີ່ໄດ້ຮ່ວມກັນສ້າງທັມມະເປັນວິທະຍາທານ ດັ່ງບາລີພຸດທະພົດເພິ່ນໄດ້ກ່າວບອກໄວ້ ແລ້ວວ່າ: **ສັພພະ ທານັງ ທັມມະ ທານັງ ຊິນາຕິ** ການໃຫ້ທັມເປັນ ທານ ຊະນະການໃຫ້ທັງປວງ.

ວຽງຈັນ ວັນທີ..25../.09.../..ຄ.ສ 2007, ພ.ສ..2550.......<br>
ທີ່ວັດສະພານທອງເໜືອ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.<br>
ອະທິປະໄຕ ໄມຕຣີຈິດ (ສະປັນໂຍ ພິກຂຸ)

# <u>ຄຳນຳ</u>

ຄວາມປະພຶດປະຕິບັດຂອງຄົນເຮົາໃນຊີວິດປະຈຳວັນນັ້ນ ຍ່ອມມີທັງສ່ວນ ທີ່ດີ ແລະສ່ວນທີ່ບໍ່ດີ, ມີທັງຂໍ້ຜິດພາດບົກຜ່ອງ ແລະຂໍ້ພາກພູມໃຈທີ່ທຸກຄົນເຮົາສາມາດເຮັດໄດ້ ແລະສຳເລັດຜົນຕາມຄວາມປາຖະໜາ ແລະຕັ້ງໃຈເອົາໄວ້ ແຕ່ນັ້ນ ກໍບໍ່ໝາຍຄວາມວ່າ: ທຸກຄົນຈະເຮັດໄດ້ ແລະຖືກຕ້ອງສະເໝີໄປ ດັ່ງນັ້ນ ການທີ່ພວກເຮົາຈະຮູ້ໄດ້ເຖິງຄວາມຖືກຕ້ອງ ແລະຄວາມຜິດພາດ, ຮູ້ໄດ້ເຖິງຂໍ້ດີ ແລະຂໍ້ເສຍ, ຮູ້ໄດ້ເຖິງສິ່ງທີ່ຄວນເຮັດ ຄວນເວົ້າ ແລະສິ່ງທີ່ບໍ່ຄວນເຮັດ ບໍ່ຄວນເວົ້າແລ້ວສາມາດປະພຶດປະຕິບັດໄດ້ຢ່າງຖືກຕ້ອງ ບໍ່ຜິດພາດບົກຜ່ອງໃນການດຳເນີນຊີ ວິດປະຈຳວັນ ຍ່ອມຕ້ອງມີກະຕິກາ ກົດລະບຽບ ແບບແຜນ ທີ່ທຸກຄົນໃນຊຸມຊົນສັງຄົມ ປະຊາຊົນທັງຊາດ ຮ່ວມກັນປະ ຕິບັດ ເພື່ອຄວາມຢູ່ເຢັນເປັນສຸກຂອງທຸກຄົນ ທາງດ້ານອຸປາສົກ-ອຸປາສິກາ ກໍຄືກົດໝາຍ, ແຕ່ກົດໝາຍນັ້ນ ແມ່ນປັບໂທດແກ່ຜູ້ ກະທຳຄວາມຜິດພຽງແຕ່ທາງດ້ານນິຕິໄນເທົ່ານັ້ນ ສຳຫຼັບພຸດທະສາສະໜາແລ້ວ ພຣະພຸດທະເຈົ້າໄດ້ຄົ້ນພົບ ແລ້ວນຳມາບັນຍັດໄວ້ໃຫ້ທຸກຄົນໃນສັງຄົມຊຸມຊົນ (ອຸ ປາສົກ-ອຸປາສິກາ) ໄດ້ຮ່ວມກັນປະພຶດປະຕິບັດນັ້ນ ກໍຄືໃຫ້ສຶກສາເອົາຫຼັກການ ຂອງຂໍ້ເບນຈະສິນ-ເບນຈະທັມ ເຊິ່ງມີຄວາມແຕກຕ່າງຈາກກົດໝາຍ ກໍເພາະວ່າ ເບນຈະສິນນັ້ນແມ່ນປັບໂທດແກ່ຜູ້ກະທຳຄວາມຜິດທັງທາງດ້ານນິຕິໄນ ແລະພຶດຕິໄນ ເຖິງແມ່ນວ່າຈະບໍ່ມີໃຜຮູ້ເຫັນຜູ້ກ່ຽວກະທຳ ຄວາມຜິດກໍຕາມ ແຕ່ບຸກຄົນນັ້ນຍ່ອມມີຄວາມເສົ້າໝອງຕິດແປດຢູ່ໃນຈິດສຳນຶກຂອງເຂົາຢູ່ຕະຫຼອດໄປ.

ດັ່ງນັ້ນ ໃນປື້ມຄູ່ມືສະບັບນີ້ ແມ່ນໄດ້ຍົກເອົາຂໍ້ສຶກສາເບນຈະສິນ-ເບນຈະທັມ ທັງ 5 ປະການມາອະທິບາຍ ຂະຫຍາຍຄວາມຢ່າງລະອຽດພໍສົມຄວນ ເພື່ອໃຫ້ທ່ານຜູ້ອ່ານ ຜູ້ໄຝ່ສຶກສາໃນສີລະທັມໃຫ້ເຂົ້າໃຈເລື່ອງສິນ 5 ໄດ້ຢ່າງແຈ່ມແຈ້ງ ແລ້ວນຳໄປໃຊ້ໃຫ້ເກີດປະໂຫຍດແກ່ຕົນເອງ ໃນການດຳລົງຊີວິດປະຈຳວັນ.

*ອະທິປະໄຕ ໄມຕຣີຈິດ (ສະປັນໂຍ ພິກຂຸ)*

## **ສາລະບານ**


| | ຫົວບົດ | ໜ້າທີ: |
|---|---|---|
| **ບົດທີ 1: ຄຳນຳ** | | 04 |
| | ບົດສະເໜີ | 06 |
| ບົດທີ2 | **ເບນຈະສິນສຶກຂາບົດທີ່** 1 | 07 |
| | ລັກສະນະຂໍ້ຫ້າມ ແລະອາການກະທຳ | 08 |
| | ການຂ້າ | 08 |
| | ການຂ້າສັດເດຍລະສານ | 09 |
| | ການທຳຮ້າຍຮ່າງກາຍ | 10 |
| | ບົດປະກອບ(ເພງ-ກາບກອນ)ຊີວິດມີຄ່າ | 11 |
| | ກາບ ຢ່າຂ້າແທ້ເນີ | 12 |
| | ນິທານ ລີງນ້ອຍຜູ້ອາພັບ | 13 |
| | ກິດຈະກຳສຳຜັດຊີວິດສັດ | 16 |
| | **ເບນຈະສິນສຶກຂາບົດທີ່** 2 | 17 |
| | ລັກສະນະຂໍ້ຫ້າມ ແລະການກະທຳ. ໂຈຣະກຳ | 17 |
| | ຫຼັກວິນິໄສອະທິນາທານ | 19 |
| | ກອນອ່ານ"ສິນອະທິນາປົກປ້ອງ" | 19 |
| | ນິທານ"ກຳຂາຍໜ້າ" | 21 |
| | **ເບນຈະສິນສຶກຂາບົດທີ່** 3 | 23 |
| | ໂທດຂອງກາເມສຸມິດສາຈານ | 25 |
| | ກາບ "ກາເມ" | 26 |
| | ເພງປະກອບ ຮັກດຽວໃຈດຽວ | 27 |
| | ນິທານ"ລີສີຕາໄຟ" | 28 |
| | ເກມ" ຄົນຕາບອດ " | 29 |
| | **ເບນຈະສິນສຶກຂາບົດທີ່** 4 | 30 |
| | ໂທດຂອງມຸສາວາດ | 32 |
| | ກາບ ມຸສາວາດ | 33 |
| | ເພງ" ຢາກຂໍເປັນແຟນ " | 34 |
| | **ເບນຈະສິນສຶກຂາບົດທີ່** 5 | 36 |
| | ໂທດຂອງການດື່ມນ້ຳເມົາ | 37 |
| | ກອນອ່ານ" ສຸຣາພາເຊ " | 38 |
| | ນິທານ" ອຳນາດສຸຣາ " | 40 |
| | ເກມ" ຂີ້ເມົາລອດຮົ້ວ " | 42 |
| | ຜູ້ຖືສິນບໍ່ປະຕິບັດຕົນຕາມປະຕິຍານ | 43 |
| ບົດທີ3 | ວິຣັດ ແລະກັນລະຍານະທັມ | 44 |
| | ການທຽບຄູ່ເບນຈະສິນ ກັບເບນຈະທັມ | 45 |
| | ຕົວຢ່າງແຜນການສອນ | 46-47 |

# ບົດທີ 1: ບົດສະເໜີ

## 1. ສາລະສຳຄັນ

1.1. ສິນ ເປັນຂໍ້ປະຕິບັດສຳຫຼັບການລະເວັ້ນເຮັດຄວາມຊົ່ວທັງປວງ.

1.2. **ເບນຈະສິນ** ເປັນຫຼັກພື້ນຖານສຳຫຼັບບຸກຄົນທົ່ວໄປໃນການກະທຳຄວາມດີລະເວັ້ນ ຈາກຄວາມຊົ່ວທັງຫຼາຍ.

## 2. ຄວາມໝາຍ:

ຄຳວ່າ: "**ສີລະ**" (ຂຽນເປັນພາສາບາລີ); **ສິນ** (ຂຽນເປັນພາສາລາວ); ແປວ່າ: ປົກກະຕິ ຄືປົກກະຕິ ທາງກາຍ ແລະວາຈາ (rules of morality).

ຄຳວ່າ: **ສິນ** ໝາຍເຖິງການຮັກສາກາຍ ແລະວາຈາ ໃຫ້ປົກກະຕິຮຽບຮ້ອຍ.

ຄຳວ່າ: **"ເບນຈະສີລະ"** ແປວ່າ: ສິນຫ້າໝາຍເຖິງຂໍ້ປະພຶດປະຕິບັດສຳຫລັບການຮັກສາກາຍ ແລະ ວາຈາໃຫ້ປົກກະຕິຮຽບຮ້ອຍ.

ຄຳວ່າ: **"ເບນຈະທັມ"** ຫຼື **"ເບນຈະກັນລະຍານະທັມ"** ແປວ່າ: ທັມ 5 ປະການ ທັມອັນດີງາມ 5 ຢ່າງ.

ຄຸນນະທັມ 5 ປະການ ໝາຍເຖິງເປັນຫຼັກປະຕິບັດໃນເບື້ອງຕົ້ນ ສຳຫຼັບການເຮັດຄວາມດີງາມຂອງ ບຸກຄົນທົ່ວໄປ ເພື່ອຄວາມສະຫງົບສຸກຂອງຕົນ ແລະສັງຄົມ ເປັນທັມເກື້ອກູນແກ່ການຮັກສາສິນຫ້າ.

## 3. ອັນດັບຂໍ້ຂອງສິນປະເພດຕ່າງໆ.

ສິນໃນທາງພຣະພຸດທະສາດສະໜາ ມີການຈັດອັນດັບຂໍ້ດັ່ງຕໍ່ໄປນີ້....

1. ສິນ 5 ຂໍ້ ສຳຫຼັບປະຊາຊົນທົ່ວໄປ ມີຊື່ຮຽກວ່າ: **ນິດຈະສິນ**, **ປົກກະຕິສິນ**, **ເບນຈະສິນ**..
2. ສິນ 8 ຂໍ້ ສຳຫຼັບອຸປາສົກອຸປາສິກາ ມີຊື່ຮຽກວ່າ: **ຄະທັດຖະສິນ**, **ອຸໂປສົດສິນ**, **ອັດຖະສິນ**.
3. ສິນ 10 ຂໍ້ ສຳຫຼັບສາມະເນນ,ສາມະເນນຣີ ມີຊື່ຮຽກວ່າ: **ອະນຸປະສຳບັນນະສິນ**, **ທະສະສິນ**.
4. ສິນ 227 ຂໍ້ ສຳຫຼັບພຣະພິກຂຸ ມີຊື່ຮຽກວ່າ: **ພິກຂຸສິນ**.
5. ສິນ 311 ຂໍ້ ສຳຫຼັບພຣະພິກຂຸນີ ມີຊື່ຮຽກວ່າ: **ພິກຂຸນີສິນ**.

## 4. ສາລະໜ້າຮູ້:

(1) ເປັນຂໍ້ປະຕິບັດໃນການເວັ້ນຈາກຄວາມຊົ່ວ ປະພຶດແຕ່ຄວາມດີງາມ ເພາະສິນເຮັດໃຫ້ຄົນງາມ, ສິນເຮັດໃຫ້ຄົນຮັ່ງມີ ແລະສິນເຮັດໃຫ້ຄົນເປັນມະນຸດຄື ເປັນຜູ້ມີຈິດໃຈສູງ ຄວາມດີທັງຫຼາຍຈະເກີດຂຶ້ນໄດ້ກໍ ເພາະມີສິນເປັນພື້ນຖານ.

(2) ປ້ອງກັນຕົນບໍ່ໃຫ້ເສຍຫາຍ ຄວາມເສຍຫາຍທັງຫຼາຍເກີດຂຶ້ນເພາະຄົນເຮົາປະພຶດຜິດສິນ ສັງຄົມວຸ້ນວາຍດ້ວຍບັນຫາຕ່າງໆ ເນື່ອງມາຈາກຄົນໃນສັງຄົມ ເຮັດຜິດສິນທັ້ງສິ້ນ ສິນຈິ່ງໄດ້ຊື່ວ່າ: **ເປັນ ເຄື່ອງປ້ອງກັນຄວາມເສຍຫາຍ** ບໍ່ເຮັດໃຫ້ຕົນ ແລະຜູ້ອື່ນໄດ້ຮັບຄວາມເດືອດຮ້ອນ..

(3) ເປັນພື້ນຖານສຳຄັນທີ່ຈະນຳໄປສູ່ການບຳເພັນສະມາທິ - ປັນຍາໃຫ້ໄດ້ຜົນດີ ຜູ້ທີ່ມີສິນຍ່ອມມີໃຈສະຫງົບເຢັນ ບໍ່ເດືອດຮ້ອນວຸ້ນວາຍ ຍ່ອມເຮັດໃຫ້ເກີດສະມາທິໄດ້ໄວ ແລະເປັນພື້ນຖານກໍ່ໃຫ້ເກີດປັນຍາຕາມມາ ດັ່ງນັ້ນ ພຣະພຸດທະເຈົ້າຈິ່ງຊົງສອນໃຫ້ຊຳລະສິນໃຫ້ບໍລິສຸດ..

**5. ຄຳອາຣາທະນາສິນຫ້າ.**

**ມະຍັງ ພັນເຕ ວິສຸງ ວິສຸງ ຣັກຂະນັດຖາຍະ ຕິສະຣະເນນະ ສະຫະ ປັນຈະສີລານິ ຍາຈາມະ ຯ**

**ທຸຕິຍັມປິ ມະຍັງ ພັນເຕ ວິສຸງ ວິສຸງ ຣັກຂະນັດຖາຍະ ຕິສະຣະເນນະ ສະຫະ ປັນຈະສີລານິ ຍາຈາມະ ຯ**

**ຕະຕິຍັມປິ ມະຍັງ ພັນເຕ ວິສຸງ ວິສຸງ ຣັກຂະນັດຖາຍະ ຕິສະຣະເນນະ ສະຫະ ປັນຈະສີລານິ ຍາຈາມະ ຯ** (ທ່ອງຈຳ)

**<u>ຄຳແປ:</u>**

ຂ້າແຕ່ພຣະສົງຜູ້ຈະເລີນ ພວກຂະນ້ອຍທັງຫຼາຍ ຂໍສິນຫ້າຂໍ້ ພ້ອມພຣະສະຣະນະຄົມສາມປະການ ເພື່ອແຍກຮັກສາເປັນຂໍ້ໆ.

ຂ້າແຕ່ພຣະສົງຜູ້ຈະເລີນ ພວກຂະນ້ອຍທັງຫຼາຍ ຂໍສິນຫ້າຂໍ້ ພ້ອມພຣະສະຣະນະຄົມສາມ ປະການ ເພື່ອແຍກຮັກສາເປັນຂໍ້ໆ, ແມ່ນແຕ່ເທື່ອທີ 2.

ຂ້າແຕ່ພຣະສົງຜູ້ຈະເລີນ ພວກຂະນ້ອຍທັງຫຼາຍ ຂໍສິນຫ້າຂໍ້ ພ້ອມພຣະ ສະຣະນະຄົມສາມ ປະການ ເພື່ອແຍກຮັກສາເປັນຂໍ້ໆ, ແມ່ນແຕ່ເທື່ອທີ 3.

# ບົດທີ 2: ເບນຈະສິນ

## <u>ເບນຈະສິນ ສິກຂາບົດທີ 1:</u>

**ປານາຕິປາຕາ ເວຣະມະນີ ສິກຂາປະທັງ ສະມາທິຍາມິ.**

**= ຂ້າພະເຈົ້າ ຂໍຮັບເອົາຂໍ້ສິນ ຄືເວັ້ນຈາກການຂ້າສັດ.**

**1. <u>ສາລະສຳຄັນ</u>**

ການບັນຍັດສິນຂໍ້ນີ້ ມຸ່ງໃຫ້ມະນຸດປູກເມດຕາຈິດໃນສັດໂລກທຸກຈຳພວກ ຫຼືແມ່ນແຕ່ໃນມະນຸດດ້ວຍກັນ ເພາະເມດຕາຈິດເປັນຄວາມດີ ມີທົ່ວໄປທັງໃນມະນຸດ ແລະສັດເດຍລະສານ.

**2. <u>ຄວາມໝາຍ</u>**

ຄຳວ່າ: **"ສັດ"** ໃນທີ່ນີ້ ໝາຍເຖິງສັດທີ່ມີຊີວິດທຸກຊະນິດ ທັງມະນຸດ ແລະສັດເດຍລະສານ ຫຼືຮຽກວ່າ: ສັດຕະວະໂລກ ທີ່ວ່າມີຊີວິດນັ້ນ ນັບຕັ້ງແຕ່ສັດນັ້ນມີລົມຫາຍໃຈ ຕັ້ງແຕ່ຢູ່ໃນທ້ອງແມ່ ຫຼືຢູ່ໃນໄຂ່ ຈົນກະທັ້ງສິ້ນລົມຫາຍໃຈ ຄື ຕາຍ.

ສັດທຸກຊະນິດ ຍ່ອມມີສິດໂດຍຊອບທຳ ໃນການມີຊີວິດຂອງຕົນໄປຈົນຕາຍ ຜູ້ໃດເຮັດໃຫ້ເຂົາເສຍຊີວິດໂດຍເຈຕະນາ ສິນຂອງຜູ້ນັ້ນກໍຂາດ ເມື່ອເພັ່ງເຈຕະນາຈິດເປັນໃຫຍ່ ໃນສິນຂໍ້ນີ້ມີຂໍ້ຫ້າມ 3 ຢ່າງ ຄື: ການຂ້າ, ການທຳຮ້າຍຮ່າງກາຍ, ການທໍລະມານ (ຜູ້ອື່ນຕາຍ ໄດ້ທຸກ ຍ້ອນນ້ຳມືຜູ້ຂາດສິນ)

## 3. <u>ລັກສະນະຂໍ້ຫ້າມ ແລະອາການກະທຳ</u>

### 3.1. ການຂ້າ

ການຂ້າ ໄດ້ແກ່ ການເຮັດໃຫ້ຕາຍ ເຖິງແກ່ຊີວິດຂອງສັດມີ 2 ປະເພດ ຄື: ຂ້າມະນຸດ, ຂ້າສັດເດຍລະສານ; ວັດຖຸທີ່ໃຊ້ຂ້າ ມີ 2 ຢ່າງ ຄື:

(1) ສາດຕຣາ ປະເພດວັດຖຸມີຄົມເປັນເຄື່ອງຟັນແທງ ເຊັ່ນ: ຫອກ, ດາບ ເປັນຕົ້ນ

(2) ອາວຸດ ປະເພດວັດຖຸບໍ່ມີຄົມ ແລະບາງຢ່າງໃຊ້ຍິງ ເຊັ່ນ: ໄມ້ຄ້ອນ, ປືນ, ກ້ອນດິນ , ນ້ຳ, ອາກາດ, ໄຟ.

### 3.2. ການຂ້າມະນຸດ

ການຂ້າມະນຸດມີໂທດໜັກໂດຍວັດຖຸ ຝ່າຍພຸດທະຈັກປັບໂທດພຣະພິກຂຸຜູ້ກະທຳ ຜິດປານາຕິບາດເປັນປາຣາຊິກ(ໃຫ້ສິກ) ແລະປັບອາຍາຂອງຝ່າຍບ້ານເມືອງ, ຝ່າຍອານາຈັກ ກໍປັບໂທດແກ່ຜູ້ກະທຳຜິດຂໍ້ນີ້ ຢ່າງສູງສຸດເຖິງຂັ້ນປະຫານຊີວິດ ຫຼືຈຳຄຸກຕະຫຼອດຊີວິດ ຈະເບົາລົງກໍໂດຍເຈຕະນາການຂ້າ ມີຢູ່ 2 ປະເພດ ຄື: ຂ້າໂດຍຈິງໃຈ ແລະຂ້າໂດຍບໍ່ຈິງໃຈ.

**(1) ຂ້າໂດຍຈິງໃຈ** ໄດ້ແກ່ ຄິດໄວ້ມາກ່ອນວ່າຈະຂ້າ ເພາະເຫດຄື:

- ຕົກຢູ່ໃນຖານະແຫ່ງຄວາມໂລບ ເຊັ່ນ: ເປັນໂຈນປຸ້ນບ້ານ ແລ້ວຂ້າເຈົ້າຂອງຊັບຕາຍ.
- ຕົກຢູ່ໃນຖານະແຫ່ງຄວາມພະຍາບາດ ເຊັ່ນ: ລອບຂ້າຄົນທີ່ມີເວນຕໍ່ກັນ.
- ເພາະສາຍເຫດຢ່າງອື່ນນອກຈາກທີ່ກ່າວມາແລ້ວ ໂດຍພະຍາຍາມໃຊ້ເຄື່ອງມື ຫຼືອຸບາຍຢ່າງໃດຢ່າງໜຶ່ງເຮັດໃຫ້ເຂົາຕາຍ.

**(2) ຂ້າໂດຍບໍ່ຈິງໃຈ** ໄດ້ແກ່ ບໍ່ໄດ້ຄິດໄວ້ກ່ອນ ແຕ່ເພາະເຫດເຫຼົ່ານີ້ ຄື:

- ບັງເອີນເປັນ ໂດຍມີເຫດບັງຄັບໃຫ້ກະທຳ ເຊັ່ນ: ເຈຕະນາຢ່າງອື່ນ ແຕ່ເຮັດພາດໄປ.
- ເພາະບັນດານໂທສະ ເຊັ່ນ: ຜິດຖຽງກັນ ຈົນເຖິງຂັ້ນລົງໄມ້ລົງມືຂ້າກັນຕາຍ.
- ປະສົງຈະປ້ອງກັນຕົວ ເຊັ່ນ: ຕໍ່ສູ້ກັນກັບຜູ້ທີ່ມາທຳຮ້າຍຕົນ ແລະຂ້າເຂົາຕາຍ.
- ເພາະບໍ່ໄດ້ກັນແກ້ງ ເຊັ່ນ: ຫວັງຈະຕີພໍໃຫ້ຫຼາບຈຳ ແຕ່ຖືກບ່ອນສຳຄັນ ແລະເຖິງແກ່ຊີວິດຂອງຜູ້ຖືກຕີ.

**<u>ການຂ້ານັ້ນສຳເລັດດ້ວຍປະໂຫຍດ 2 ຢ່າງ ຄື:</u>**

(1) ການລົງມືຂ້າເອງ.

(2) ໃຊ້ຜູ້ອື່ນຂ້າ.

ສິນຂໍ້ນີ້ ຂາດທັງ 2 ຢ່າງ ການໃຊ້ໃຫ້ຜູ້ອື່ນຂ້ານັ້ນ ມີວັດຖຸເປັນເຄື່ອງວິນິດໃສວ່າຈະຜິດສິນ ຫຼືບໍ່ກຳນົດມີ 6 ຂໍ້ ຄື:

- ວັດຖຸທີ່ຖືກຂ້າ ເຊັ່ນ:  ມະນຸດ  ແລະສັດເດຍລະສານ ເປັນຕົ້ນ.
- ກຳນົດເວລາໃຊ້ຂ້າ ເຊັ່ນ: ເຊົ້າ, ສວາຍ, ບ່າຍ, ແລງ ເປັນຕົ້ນ.
- ກຳນົດສະຖານທີ່  ເຊັ່ນ: ໃນປ່າ, ໃນບ້ານ ເປັນຕົ້ນ.
- ໝາຍເອົາເຄື່ອງປະຫານ  ເຊັ່ນ: ສາດຕຣາ,  ອາວຸດ ເປັນຕົ້ນ.
- ໝາຍເອົາອິຣິຍາບົດ  ເຊັ່ນ: ຢືນ, ຍ່າງ, ນັ່ງ, ນອນ ເປັນຕົ້ນ.
- ໝາຍເອົາວິທີໃຊ້ຂ້າ  ເຊັ່ນ: ທຸບຕີ, ຟັນ, ແທງ, ຍິງ ເປັນຕົ້ນ.

ໃນການກຳນົດຂ້າທັງ 6 ປະການນີ້ ເມື່ອສັ່ງໃຫ້ເຂົາກະທຳແລ້ວ  ຖ້າເຂົາກະທຳຖືກຕ້ອງຕາມທີ່ສັ່ງໄວ້ຂ້າງເທິງນັ້ນ ຈຶ່ງຊື່ວ່າ: ໄດ້ຜິດສິນ  ແຕ່ຖ້າເຂົາກະທຳຜິດໄປຈາກສິ່ງກຳນົດ  ທີ່ຖືກສັ່ງໄປນັ້ນ ບໍ່ຖືວ່າ: ຜິດສິນ.

<u>**ເມື່ອກ່າວໂດຍຄວາມເປັນກຳສະໜອງ ມີໂທດໜັກເປັນຂັ້ນຕ່າງໆ ກັນໄປ ແບ່ງເປັນ 3 ຢ່າງຄື:**</u>

**1)** ໂດຍວັດຖຸ:  ໝາຍເຖິງ ສິ່ງທີ່ມີຕົວຕົນ  ແຍກເປັນ 3 ປະເພດ ຄື:

1.1 ຂ້າມະນຸດຜູ້ຫາຄວາມຜິດບໍ່ໄດ້  ຄືຜູ້ບໍ່ໄດ້ປະທຸສະຮ້າຍຕົນເອງ ແລະຜູ້ອື່ນ ມີໂທດໜັກ  ເພາະເວັ້ນຈາກເຫດຈຳເປັນ (ຍ້ອນບໍ່ມີຄວາມຈຳເປັນ).

1.2 ຂ້າມະນຸດຜູ້ມີອຸປະກາລະຄຸນຫຼາຍ ເຊັ່ນ: ບິດາ, ມານດາ, ຄູອາຈານ ມີໂທດໜັກ ເພາະຕັດປະໂຫຍດສຸກຂອງຜູ້ອື່ນ.

1.3 ຂ້າມະນຸດຜູ້ມີຄຸນຄວາມດີ ມີໂທດໜັກ  ເພາະບໍ່ເປັນພຽງແຕ່ ຜານຊີວິດຊື່ໆ ແຕ່ຍັງທຳລາຍລ້າງຄຸນທີ່ເປັນຕົວຢ່າງໃຫ້ຜູ້ອື່ນປະພຶດຕາມອີກດ້ວຍ.

**2)** ໂດຍເຈຕະນາ:   ໝາຍເຖິງ ຄວາມຄິດອ່ານ ຄວາມຕັ້ງໃຈ  ຈັດເປັນ 3 ປະເພດຄື:

2.1 ຂ້າໂດຍບໍ່ມີສາເຫດ  ເຊັ່ນ:   ຜູ້ນັ້ນບໍ່ມີໂທດຜິດເຖິງຕາຍຕາມກົດໝາຍ ບ້ານເມືອງ ຫຼືບໍ່ໄດ້ກະທຳຮ້າຍແກ່ຕົນ (ມີໂທດຫຼາຍ).

2.2ຂ້າດ້ວຍກຳລັງກິເລດກ້າ  ເຊັ່ນ: ຮັບຈ້າງຂ້າເຂົາ  (ມີໂທດຫຼາຍ).

2.3 ຂ້າດ້ວຍຄວາມພະຍາບາດ  ຈ່ອງເວນອັນຮ້າຍກາດ   ລ້າງຜານເຂົາໃຫ້ເຖິງຄວາມພິນາດ (ມີໂທດຫຼາຍ).

**3)** ໂດຍປະເພດ:  ໝາຍເຖິງ ອາການສຳຫຼັບປະກອບການກະທຳ ໄດ້ແກ່ ຂ້າໃຫ້ລຳບາກ  ເຊັ່ນ: ທຸບຕີໃຫ້ເຈັບກ່ອນຈະຕາຍ  ມີໂທດຫຼາຍ  ເພາະຜູ້ຖືກຂ້າ  ສະເຫວີຍທຸກເວທະນາ ແສນສາຫັດ     ການຂ້າຕົວເອງຕາຍນັ້ນ ກໍຖືກຫ້າມ  ເພາະເປັນກຳເໝືອນກັນ  ທັງເປັນຄົນສິ້ນຄິດດ້ວຍ.

## 3.3.  ການຂ້າສັດເດຍລະສານ

ການຂ້າສັດເດຍລະສານນັ້ນ  ມີໂທດເບົາລົງຈາກການຂ້າມະນຸດ  ຝ່າຍພຸດທະຈັກ ປັບໂທດແກ່ພິກຂຸຜູ້ກະທຳພຽງອາບັດປາຈິດຕີ  ຝ່າຍອານາຈັກມີຈຳກັດໂທດແຕ່ສະເພາະສັດບາງເຫຼົ່າທີ່ຫວງຫ້າມ.
ເມື່ອກ່າວໂດຍຄວາມເປັນກຳ  ການຂ້າສັດເດຍລັດສານ  ມີໂທດໜັກເປັນຂັ້ນ ໂດຍເຈຕະນາ.

**1)** ໂດຍວັດຖຸ: ຈັດເປັນ 5 ຢ່າງ ຄື:

- ຂ້າສັດທີ່ມີເຈົ້າຂອງຫວງແຫນ.
- ຂ້າສັດທີ່ມີຄຸນ.
- ຂ້າສັດໃຫຍ່ອັນຈະໃຊ້ປະໂຫຍດໄດ້ຫຼາຍ.
- ຂ້າສັດຂອງໂຕເອງ.
- ຂ້າສັດອັນຫາເຈົ້າຂອງບໍ່ໄດ້.

**2)** ໂດຍເຈຕະນາ: ຈັດເປັນ 3 ຢ່າງ ຄື:

- ຂ້າໂດຍຫາສາເຫດບໍ່ໄດ້.
- ຂ້າດ້ວຍກຳລັງກິເລດ (ສະພາບຈິດທີ່ເສົ້າໝອງ) ກ້າຫານຂ້າ.
- ຂ້າດ້ວຍຄວາມພະຍາບາດ (ໃຈຮ້າຍໃຫ້ສັດ..)

**3**) ໂດຍປະເພດ: ໄດ້ແກ່ ຂ້າໃຫ້ລຳບາກ ຫຼືໜ້າສົມເພດ ເຊັ່ນ: ວາງຢາໃນໜອງນ້ຳ ເບື່ອໃຫ້ປາເມົາຕາຍ, ຊັອດໄຟຟ້າໃສ່ນ້ຳ, ວາງດິນລະເບີດ ແລະອື່ນໆ.

## 3.4. ການທຳຮ້າຍຮ່າງກາຍ

ຂໍ້ນີ້ ໝາຍເອົາສະເພາະການກະທຳແກ່ມະນຸດ ແຍກເປັນ 3 ປະເພດ ຄື:

- **ເຮັດໃຫ້ພິການ** ຄື: ເຮັດໃຫ້ເສຍອະໄວຍະວະ ເຊັ່ນ: ເຮັດໃຫ້ເສຍດວງຕາ, ເສຍແຂນ, ເສຍຂາເປັນຕົ້ນ.
- **ເຮັດໃຫ້ເສຍໂສມ** ຄື: ເຮັດໃຫ້ຮ່າງກາຍເສຍຮູບ ເສຍງາມ ບໍ່ເຖິງຂັ້ນ ພິການ.
- **ເຮັດໃຫ້ເຈັບລຳບາກ** ຄື: ບໍ່ເຮັດໃຫ້ເສຍໂສມ ແຕ່ເຮັດໃຫ້ເສຍຄວາມສຸກສະບາຍ.

## 3.5. ການທໍລະກຳ

ການທໍລະກຳນີ້ ໄດ້ແກ່ ການປະພຶດຫຍາບໂຫດ ບໍ່ມີຄວາມກະລຸນາປານີ ແກ່ສັດເດຍລະສານ ຂໍ້ນີ້ໂດຍສ່ວນຫຼາຍໃຊ້ກັບສັດເດຍລະສານ ແຕ່ບາງກໍລະນີກໍເກີດຂຶ້ນກັບຄົນໄດ້ເຊັ່ນກັນ ດັ່ງນີ້:

- **ໃຊ້**ວຽກໄດ້ແກ່ : ການໃຊ້ວຽກເກີນກຳລັງ ບໍ່ປານີ ປ່ອຍໃຫ້ອຶດກິນອຶດຢາກຈົນຈ່ອຍ ບໍ່ໃຫ້ຢຸດພັກຜ່ອນຕາມເວລາ ຂະນະໃຊ້ວຽກກໍຂ້ຽນຕີ.
- **ກັກຂັງ** ໄດ້ແກ່: ກັກຂັງໃນບ່ອນຄັບແຄບ ຈົນປ່ຽນອິຣິຍາບົດບໍ່ໄດ້.
- **ນຳເອົາໄປ** ໄດ້ແກ່: ນຳເອົາສັດໄປໂດຍວິທີທໍລະມານ ເຊັ່ນ: ລາກໄປ, ຜູກມັດໄປ, ຫິ້ວ ຫາມເອົາຫົວຢ່ອນລົງ.
- ຫຼິ້ນສະໜຸກ ເຊັ່ນ: ເອົາກະໂພກຜູກໃສ່ຫາງໝາ ແລ້ວເອົາໄຟຈຸດ ເປັນ ຕົ້ນ.
- **ເອົາສັດຕໍ່ສູ້ກັນ** ເຊັ່ນ: ກັດປາ, ຊົນຄວາຍ, ຊົນງົວ, ຕີໄກ່, ກັດຈີ້ຫຼໍ່ ເປັນຕົ້ນ.

## 4. <u>ຫຼັກວິນິດໃສປານາຕິບາດມີອົງ 5 ຄື:</u>

- ສັດມີຊີວິດ.
- ຕົນຮູ້ວ່າສັດມີຊີວິດ.
- ຈິດຄິດຈະຂ້າໃຫ້ຕາຍ.
- ໃຊ້ຄວາມພະຍາຍາມຂ້າ.
- ສັດຕາຍດ້ວຍຄວາມພະຍາຍາມນັ້ນ.

*ສິນຂໍ້ນີ້ຈະຂາດ ກໍຕໍ່ເມື່ອກະທຳ ຄົບອົງທັງ 5 ຂໍ້ນີ້.*

### ບົດປະກອບ (ເພງ-ກາບກອນ).

<u>**ຊີວິດມີຄ່າ**</u> (ປະເພດລຳເດີນ)

ຊີວິດ ເປັນຂອງມີຄ່າ ຜູ້ໃດເກີດມາ ຢາກຢູ່ຍືນຍົງ
ແຕ່ຊີວິດ ບໍ່ເຄີຍໝັ້ນຄົງ ຢາກໃຫ້ຍືນຍົງ ບໍ່ຕ້ອງຕາຍຟົງ
ຕາຍດີ ໃຫ້ມີເຍື້ອໃຍ ໝົດອາຍຸໄຂ ຕາຍໄປກໍຊ່າງມັນ
ສິ່ງສຳຄັນ ຢ່າໃຫ້ລຳບາກ ເຂົານັ້ນຕາຍພາກ ຍ້ອນນ້ຳມືເຮົາ
ມະຈຸລາດ ຈະນຳມາເອົາ ຖ້າມີຂອງເຮົາ ເປື້ອນໂລຫິດຕັງ
ຊີວິດຍັງ ນັບວ່າເປັນສຸກ ໃຜຄິດວ່າທຸກ ກໍເພາະຄວາມໂລພາ
ເປັນມະນຸດ ຢ່າມີບັນຫາ ໃຫ້ຄວາມໂລພາ ຄອບງຳຈິດໃຈ
ໃຈດີນັບວ່າ ເປັນໜຶ່ງ ເຮົາຄິດໃຫ້ເຖິງ ບາບກຳນຳທັນ
ຂ້າຜູ້ອື່ນ ມີໂທດມະຫັນ ຖ້າເຮົາຄິດທັນ ງົດເວັ້ນບໍ່ທຳ
-ກຳເວນນີ້ ບໍ່ມີໜີກັນງ່າຍ (ໆ) ຕາຍໄປໃນຊາດໜ້າ ຍັງຖ້າຕໍ່ກັນ
ດ້ວຍເຫດນັ້ນ ອົງພະມູນີ ຈິ່ງໃຫ້ທຳຄວາມດີ ຢ່າ ໄດ້ມີວາງເວັ້ນ.

### ກາບ: " ຢ່າຂ້າແທ້ເນີ !

ການຂ້າ ແມ່ນຕັດຊີວິດ
ຜູ້ທຳຜິດ ຍ່ອມມີໂທດກັມ
ແຕ່ຈະນຳ ມາໄວຫຼືຊ້າ
ບ້າງຊາດໜ້າ ຊາດນີ້ກໍມີ
ທາງທີ່ດີ ຄະລຳໄວ້ກ່ອນ
ໃຫ້ເປັນບ່ອນ ຕັ້ງຈິດຕັ້ງໃຈ
ເພື່ອຈະໄປ ເອົາບຸນທາງໜ້າ
ຢ່າໄດ້ກ້າ ຂ້າເຈົ້າເອົາຂອງ

ຜິດທຳນອງ    ສິນທັມກ່າວໄວ້
ໃຫ້ເຮົາໄດ້    ປະພຶດຕິດໂຕ
ເອົາທັມໂມ    ຂອງອົງພະເຈົ້າ
ນຳມາເຂົ້າ    ກັບມັນສະໝອງ
ເພື່ອນຳຄອງ    ຊີວິດໃຫ້ຊື່ນ
ບໍ່ໄດ້ລື່ນ    ທັມມະຄຳສອນ
ໃຫ້ສັງວອນ    ບາບບຸນຄຸນໂທດ
ຜູ້ສາໂຫດ    ບໍ່ເຫັນຄອງທັມ
ເພິ່ນຄະລຳ    ໂຕຊ້ຳພັດແກ້ງ
ກ່າວໂຕ້ແຍ່ງ    ບາບບໍ່ມີຜົນ
ຊ່າງເປັນຄົນ    ໃຈໜາສາໂຫດ
ພຣະເພິ່ນໂຜດ    ໃຫ້ເຫັນສະຫວັນ
ອັດສະຈັນ    ໃຈຜູ້ຕ່ຳຊ້າ
ວ່າຊາດໜ້າ    ບໍ່ມີຄວາມຈິງ
ຝູງເປັນລີງ    ກໍເຄີຍມາເກີດ
ສັດປະເສີດ    ເປັນຄົນຄືກັນ
ແຕ່ພວກມັນ    ຖືຄວາມປະໝາດ
ຕາຍຫຼາຍຊາດ    ເລີຍເກີດເປັນລີງ
ອັນທີ່ຈິງ    ກັມເກົ່າສ້າງໄວ້
ພວກມັນໄດ້    ຮັບຜົນຂອງກັມ
ຂໍໃຫ້ຈຳ    ຈື່ເອົາໄປໜ້າ
ຢ່າໄດ້ຂ້າ    ສິ່ງມີຊີວິດ
ເຮັດໃຫ້ຈິດ    ຂອງເຮົາຕ່ຳຕ້ອຍ
ເປັນເດັກນ້ອຍ    **ຢ່າຂ້າແທ້ເນີ!** ຯ

( ໂດຍ:ສ. ດາວທຽມນ້ອຍ )

## ນິທານ: " ລີງນ້ອຍຜູ້ອາພັບ ".

ຕັ້ງແຕ່ກີ້ແຕ່ກ່ອນ ມີນາຍພານຄົນໜຶ່ງອາຊີບຂອງລາວແມ່ນລ່າສັດປ່າຂາຍ ດ້ວຍການຍິງໜ້າທະນູ ສັດບາງໂຕກໍຕາຍ ໂຕບໍ່ຕາຍລາວຈັບເອົາຂັງໄວ້ແລ້ວນໍາໄປຂາຍເອົາເງິນ ມື້ໜຶ່ງນາຍພານໄດ້ອອກລ່າສັດຕາມເຄີຍ ລາວໄດ້ປະເມຍ ແລະລູກຊາຍນ້ອຍອາຍຸ 5 ປີຄົນໜຶ່ງໄວ້ທີ່ເຮືອນ.

ໃນປ່າດົງແຫ່ງນັ້ນມີລີງຝູງໜຶ່ງອາໄສຢູ່ ພວກເຂົາຫາກິນໝາກໄມ້ຕາມທໍາມະຊາດທີ່ອຸດົມສົມບູນ ບໍ່ເຄີຍກໍ່ຄວາມເດືອດຮ້ອນໃຫ້ກັບມະນຸດ ແລະສັດອື່ນໆ ເລີຍ ໃນຝູງລີງນີ້ ຍັງມີແມ່ລີງຫຼາຍໂຕທີ່ມີລູກນ້ອຍແຂວນແອວ ພວກເຂົາລ້ຽງລູກນ້ອຍດ້ວຍນໍ້ານົມ ແລະໝາກໄມ້ທີ່ຫອມຫວານ ລີງນ້ອຍບາງໂຕຍັງບໍ່ສາມາດຫາກິນດ້ວຍຕົນເອງໄດ້ ຈຶ່ງອາໄສແຕ່ແມ່ຄອຍປ້ອນອາຫານໃຫ້ ຍາມກິນອີ່ມແລ້ວພວກເຂົາກໍພັກຜ່ອນ ສ່ວນລີງນ້ອຍກໍໄລ່ຢອກກັນຕາມພາສາເດັກທີ່ມີຄວາມສຸກ ເບິ່ງແລ້ວຄ້າຍກັບຊີວິດຄົນເຮົາ.

ເມື່ອນາຍພານເຫັນຝູງລີງກໍຈອບເຂົ້າໄປໃກ້ໆ ແລ້ວຈັບລູກທະນູທີ່ອາບຢາພິດຂຶ້ນມາກຽມຈະຍິງ ລາວຄິດວ່າ ຖ້າຍິງໂຕເຖິກ (ຜູ້) ກໍຈະໄດ້ແຕ່ໂຕດຽວ ຖ້າຍິງໂຕແມ່ລູກອ່ອນ ກໍຈະໄດ້ທັງແມ່ທັງລູກ ລາວຍິງລີງຕົວໜຶ່ງທີ່ກໍາລັງເອົາໝາກໄມ້ໃຫ້ລູກກິນ ລູກຂອງມັນຍັງກອດແອວແມ່ຢູ່ ນາຍພານຍິງລູກທະນູໄປສຽບເຂົ້າຫວ່າງເອິກລີງແມ່ ເຮັດໃຫ້ມັນຮ້ອງຂຶ້ນໝົດແຮງ "ໂອ໊ຍ!" ມືເບື້ອງໜຶ່ງເກາະງ່າໄມ້ ສ່ວນອີກເບື້ອງໜຶ່ງກອດເອົາລູກ ບັນດາລີງໃນຝູງເຫັນວ່າສັດຕູມາທໍາຮ້າຍ ກໍແຕກຕື່ນໜີເອົາໂຕລອດ ແມ່ລີງເຈັບປວດຫຼາຍ ນໍ້າຕາໄຫຼ ເອົາຕີນຈັບດຶງລູກທະນູ ມີເລືອດໄຫຼອອກຊຶດໆ! ແມ່ລີງຮູ້ສຶກຕົວວ່າຕ້ອງຕາຍ! ຈຶ່ງຄວາເອົາລູກມາກອດຫອມແກ້ມແລ້ວປ່ອຍໃຫ້ລູກໜີໄປ ແຕ່ລີງນ້ອຍບໍ່ສາມາດປະແມ່ໄປໄດ້ ຈຶ່ງກອດແມ່ຢ່າງແໜ້ນ ກ່ອນແມ່ລີງຈະຂາດໃຈຕາຍ ໄດ້ເວົ້າກັບລູກດ້ວຍສຽງສັ່ນເຄືອວ່າ:

" ລູກເອີຍ　ແມ່ນີ້ເກີດມາຕັ້ງແຕ່ນ້ອຍ　ບໍ່ໄດ້ກໍ່ກັມຫຍັງ
ແຕ່ວ່າມີມານເຮັດ　ໃຫ້ແມ່ມໍລະນາມ້ວຍ
ເຖິງຄາວຊວຍພາກຫຼ້າ　ທາລະກາລູກແມ່ ແລ້ວນໍ!
ຂໍໃຫ້ລູກຕໍ່ສູ້　ພໍມົ້ມໝູ່ມານ ແມ່ທ້ອນ!
ການທີ່ມາທາງໜ້າ　ເອົາຊີວາໃຫ້ຢູ່ລອດ
ຄວາມປອດໄພຫໍ່ນັ້ນ　ຊິພາເຈົ້າໃຫຍ່ສູງ
ໃຫ້ເອົາຍູງຍາງໄມ້　ດົງຫຼວງເປັນບ່ອນຢູ່
ສັກກູນາໝູ່ເນື້ອ　ເປັນແກ້ວເພື່ອນແພງ ລູກເອີຍ!
ຍາມເມື່ອແລງລົງຄ້ອຍ　ຕາເວັນແດງລັບປ່າ
ທາລະກາລູກນ້ອຍ　ຊິຫັນໜ້າເພິ່ງຜູ້ໃດ
ອາໃສນົມໃນເຕົ້າ　ທັງສອງແມ່ໄດ້ພາກ
ການຈາກກັນເທື່ອນີ້　ມັນເປັນໜ້າເວດທະນາ ລູກເອີຍ!.

ລີງນ້ອຍຮູ້ວ່າແມ່ເຈັບປວດໃກ້ຈະສິ້ນໃຈຕາຍ ບໍ່ຮູ້ຈະເຮັດແນວໃດມີແຕ່ກອດແມ່ແລ້ວຮ້ອງແກ໊ກໆ ນໍ້າຕາໄຫຼອາບແກ້ມເວົ້າກັບແມ່ວ່າ:

" ແມ່ເອີຍ! ຫາກແມ່ຕາຍໄປແລ້ວ ລູກຊິຢູ່ນຳໃຜ?
ອາໄສໝູ່ໃນຝູງ ກໍແຕກໜີຄືນກ້ຳ
ກັນເວນຕ້ອງ ໃນຄືງແມ່ຊິຂາດໃຈແລ້ວ
ລູກຂໍຕາຍຮ່ວມແກ້ວ ຄຽງຂ້າງແມ່ບໍ່ວາງ ດອກນາ!
ຊາດທີ່ເປັນສັດນີ້ ກໍມີໃຈພັນຜູກ
ລູກຮັກແມ່ທໍ່ຟ້າ ຄືນຊິຂ້າກໍບໍ່ໜີ
ເປັນຜີຂໍຕາຍພ້ອມ ຍອມຖວາຍຄີງຮ່ວມ
ຄວາມສຸກໝົດທໍ່ນີ້ ໃຜຂ້າກໍຊ່າງມັນ ແມ່ເອີຍ!

ແມ່ ແລະລູກລີງບໍ່ມີໂອກາດໄດ້ເວົ້ານຳກັນອີກແລ້ວ ເພາະນາຍພານໄດ້ເອົາໄມ້ຄ້ອນແກວ່ງໃສ່ລີງທີ່ຖືກລູກທະນູກໍາລັງຈະຕາຍ ລີງແມ່ຖືກໄມ້ຄ້ອນຕື່ມກໍໝົດສະຕິ! ມືຫລູດຈາກງ່າໄມ້ຕົກລົງດິນພ້ອມດ້ວຍລູກນ້ອຍ ນາຍພານໄດ້ຈັບເອົາລີງນ້ອຍມັດສອກແປ້ຫຼັງ ສ່ວນແມ່ລີງກໍຈັບມັດຕີນມັດມືຈຸ້ມໃສ່ກັນ ແລ້ວເອົາໄມ້ສອດໃສ່ຍົກຂຶ້ນບ່າ ຄອນກັບເມືອເຮືອນຂອງຕົນ.

ຝ່າຍເມຍ ແລະລູກນ້ອຍຂອງນາຍພານ ຢູ່ທາງເຮືອນກໍດັງໄຟຕົ້ມນ້ຳຮ້ອນລໍຖ້າ ເມື່ອນາຍພານກັບມາຮອດເຮືອນ ໄດ້ເອົາເຊືອກມັດລີງນ້ອຍໄວ້ກັບເສົາເຮືອນ ສ່ວນແມ່ລີງເອົາໃຫ້ເມຍໄປລວກນ້ຳຮ້ອນຂູດຂົນອອກ ລີງນ້ອຍເຫັນສະພາບຮ່າງຄີງຂອງແມ່ຖືກລວກນ້ຳຮ້ອນ ຈຶ່ງມີແຕ່ຮ້ອງໄຫ້ຈົນບໍ່ເປັນສຽງລີງ ເມື່ອລວກຂົນອອກໝົດແລ້ວຈຶ່ງເອົາໄປລົນໄຟ ແລະກໍຄົວສັບຫົວ ສັບຂາ ປາດເປັນຕ່ອນເລັກຕ່ອນນ້ອຍ ເພື່ອນຳເອົາຊີ້ນໄປຂາຍ ຝ່າຍລີງນ້ອຍໄດ້ແຕ່ຮ້ອງໄຫ້ອະທິຖານໃຫ້ແມ່ໄດ້ກັບຄືນມາ ແລະຈ່ອງເວນໃຫ້ນາຍພານໄດ້ພົ້ກັບຄວາມທຸກເໝືອນດັ່ງຕົນ.

ຫຼາຍມື້ຜ່ານໄປລີງນ້ອຍຖືກມັດແອວລ່າມເຊືອກຢູ່ຢ່າງນັ້ນ ມີໝາກກ້ວຍ ແລະເຂົ້າທີ່ນາຍພານເອົາໃຫ້ກິນ ແຕ່ລີງນ້ອຍກິນບໍ່ໄດ້ເພາະມັນໂສກເສົ້າທີ່ຂາດແມ່ໄປ

ມື້ໜຶ່ງນາຍພານນອນກາງຄືນຝັນວ່າ: ພະຍາລີງໂຕໃຫຍ່ມາຈັບເອົາລູກຊາຍ ແລະວ່າຈະເອົາໄປລ້ຽງແທນແມ່ລີງທີ່ຕາຍໄປຍ້ອນນາຍພານຍິງ ນາຍພານໄດ້ຕໍ່ສູ້ແນວໃດກໍບໍ່ແພ້ພະຍາລີງ ຈຶ່ງໄດ້ແຕ່ນັ່ງໄຫ້....ເມື່ອຕື່ນຂຶ້ນມາຈຶ່ງເລົ່າໃຫ້ເມຍຟັງ ແລະເມຍກໍເວົ້າວ່າ: " ຖ້າຢ້ານເຫດຮ້າຍ ເຮົາກໍລະວັງເອົາ! " ນາຍພານຄຶດຢ້ານຄວາມຝັນຈະເປັນຈິງຂຶ້ນມາ ເວລາລາວໄປລ່າສັດຈຶ່ງເອົາລູກ ແລະເມຍໄປນຳບໍ່ປະໄວ້ເຮືອນແຕ່ລຳພັງ

ເມື່ອຮອດກາງປ່ານາຍພານກໍຈອບຍິງສັດປ່າຕາມເຄີຍ ສ່ວນເມຍ ແລະລູກຫາເກັບຜັກຫັກໜໍ່ໄປນຳ ເມື່ອເຖິງເວລາກິນເຂົ້າງາຍ ພວກເຂົາກໍດັງໄຟກຽມຕົ້ມແກງອາຫານ ສ່ວນລູກຊາຍກໍຍ່າງເລາະໄປມາຕາມພາສາເດັກນ້ອຍຢາກຮູ້ຢາກເຫັນ ຈຶ່ງຫຼົງເຂົ້າໄປໃນດົງໜາປ່າຕຶບ ພັດພາກຈາກພໍ່ແມ່ໄປ.

ຝ່າຍນາຍພານ ແລະເມຍຮ້ອງຫາລູກແນວໃດກໍບໍ່ເຫັນ ບໍ່ໄດ້ຍິນສຽງລູກເລີຍ ຈົນຄ່ຳມືດແລ້ວຍັງບໍ່ພົບລູກໄດ້ແຕ່ນັ່ງໄຫ້...ນາຍພານຄຶດເສຍໃຈຫຼາຍທີ່ເອົາລູກ ແລະເມຍໄປນຳ ແທນທີ່ຈະຮັກສາໄດ້ຊ້ຳພັດຫຼົງເຂົ້າປ່າເລິກຊ້ຳ ເມື່ອເດິກດື່ນແລ້ວຍັງບໍ່ເຫັນລູກຈຶ່ງພາກັນກັບເມືອເຮືອນ ມາເຫັນລີງນ້ອຍທີ່ມັດຢູ່ ນາຍພານຄຶດໃສ່ຄວາມຝັນແລ້ວຢ້ານຕາຍ ຈຶ່ງໄປໃຫ້ໝໍມໍ ທຳນາຍທາຍທັກເບິ່ງວ່າ ລູກຕາຍແລ້ວຫຼືຍັງ?

ໝໍມໍ " ເລົ່າມາໃຫ້ຟັງເບິ່ງ? ເຈົ້າເຮັດຫຍັງມາແດ່? " ນາຍພານຈຶ່ງເວົ້າຕົ້ນປາຍສາຍເຫດໃຫ້ພໍ່ໝໍຟັງ.
ໝໍມໍ " ໂອ໋! ດຽວນີ້ລູກຂອງເຈົ້າຖືກຜີປ່າລັກໄປ ຍັງບໍ່ທັນຕາຍເດີ ! "
ນາຍພານ " ແລ້ວຈະເຮັດແນວໃດຈຶ່ງຈະໄດ້ລູກຄືນ ?
ໝໍມໍ " ໂອ໋! ເຈົ້າຕ້ອງເຮັດບຸນເດີ ! "
ນາຍພານ " ເຮັດແນວໃດບຸນຂ້ອຍບໍ່ຮູ້ ? "
ໝໍມໍ " ເອີ..! ເລື່ອງນີ້ໃຫ້ໄປຖາມຍາພໍ່ຢູ່ວັດເດີ ! " ແລ້ວນາຍພານກໍໄປຫາຍາພໍ່ຢູ່ວັດເລົ່າຕົ້ນປາຍສາຍເຫດສູ່ຍາພໍ່ຟັງ.
ຍາພໍ່ " ພໍ່ອອກເອີຍ! ການເຮັດບຸນມັນບໍ່ຍາກດອກ ! ວ່າແຕ່ພໍ່ອອກພ້ອມຫຼືຍັງ? "
ນາຍພານ " ເຮັດແນວໃດຂະນ້ອຍກໍຈະຍອມຂໍໃຫ້ໄດ້ລູກຄືນມາຄືເກົ່າ "
ຍາພໍ່ " ໃຫ້ພໍ່ອອກຢຸດຕິການຂ້າ! ກັກຂັງ, ຜູກມັດ,ຈຳກັດຂອບເຂດ ສັດທຸກໆ ຊະນິດ! ເຮັດໄດ້ບໍ່ ? "
ນາຍພານ " ເຮັດໄດ້ຂະນ້ອຍ "
ຍາພໍ່ " ການສ້າງບຸນໃຫ້ເລີ່ມແຕ່ດຽວນີ້ໂລດ! ດ້ວຍການແຕ່ງພາເຂົ້າບູຊາເພື່ອຂໍຂະມາຕໍ່ເຈົ້າປ່າເຈົ້າດົງ ຈຶ່ງຈະໄດ້ຜົນ! "

ນາຍພານກັບຮອດເຮືອນ ຈຶ່ງແຕ່ງເອົາເຂົ້າອາຫານຫວານຄາວຕ່າງໆ ຍັດໃສ່ຖົງ ຈັບເອົາລີງນ້ອຍແກ້ເຊືອກອອກ ແລ້ວເຂົ້າໄປໃນດົງໃຫຍ່ທີ່ຕຶບໜາ ເມື່ອໄປຮອດແລ້ວກໍໄດ້ແຕ່ງພາເຂົ້າ ເອີ້ນຫາເຈົ້າປ່າເຈົ້າດົງວ່າ: " ທ່ານຜູ້ສັກສິດທັງຫຼາຍ ! ຂໍຈົ່ງມາເປັນພິຍານໃຫ້ກັບຂະນ້ອຍ! ນັບແຕ່ນີ້ໄປຂະນ້ອຍຈະບໍ່ຂ້າສັດທຸກໆ ຊະນິດອີກ! ຂໍດວງວິນຍານຂອງສັດທີ່ຕາຍໄປຍ້ອນນ້ຳມືຂອງຜູ້ຂ້າ ຈົ່ງມາຮັບເອົາພາເຂົ້ານີ້ເທີ້ນ! " ແລ້ວນາຍພານກໍໄດ້ປ່ອຍລີງນ້ອຍໄປ ແຕ່ລີງນ້ອຍບໍ່ສາມາດໄປທາງໃດໄດ້ ເພາະຍັງບໍ່ແຂງແຮງ ມີແຕ່ເລາະລຽບຢູ່ອ້ອມພາເຂົ້າທີ່ນາຍພານ ແລະເມຍແຕ່ງໄວ້ນັ້ນ ສ່ວນນາຍພານເມື່ອກັບຮອດເຮືອນແລ້ວ ມີແຕ່ໂສກເສົ້າຮ່ຳໄຮເຖິງລູກ.

ລູກຊາຍນາຍພານເມື່ອຫຼົງທາງແລ້ວ ລາວຮ້ອງໄຫ້ຫາພໍ່ ແລະແມ່ທັງເວັນທັງຄືນຍ່າງເລາະລຽບໄປມາເຫັນແຕ່ປ່າດົງທີ່ຕຶບໜາ ທັງຫິວເຂົ້າເມື່ອຍອິດອ່ອນ ລາວໄດ້ຍິນສຽງລີງນ້ອຍຮ້ອງ ແກ໋ກໆ !. ຈຶ່ງຄ່ອຍຍ່າງເຂົ້າໄປຫາ ໄດ້ເຫັນພາເຂົ້າ ແລະອາຫານການກິນເຕັມພາ ! ຈຶ່ງຟ້າວແລ່ນເຂົ້າໃສ່ ແລະກິນໆເພື່ອໃຫ້ອີ່ມທ້ອງ.

ນາຍພານອຸກໃຈຫຼາຍຄຶດໃສ່ລີງນ້ອຍທີ່ໄຮ້ດຽງສາ ເມື່ອບໍ່ມີແມ່ແລ້ວມັນຈະຢູ່ແນວໃດ ມັນບໍ່ຕ່າງຫຍັງກັບລູກຂອງເຮົາ ທີ່ບໍ່ມີພໍ່ແມ່ ເມື່ອນາຍພານຄຶດໄດ້ ຈະເອົາລີງນ້ອຍມາລ້ຽງໃຫ້ໃຫຍ່ພໍຫາກິນໄດ້ຈຶ່ງຈະປ່ອຍໄປ ລາວຟ້າວແລ່ນໄປໃນດົງໜາປ່າຕຶບບ່ອນລີງນ້ອຍຢູ່ ໄດ້ໄປເຫັນລູກ ແລະລີງນ້ອຍນອນກອດກັນຢູ່ໃກ້ພາເຂົ້ານັ້ນ ຈຶ່ງຟ້າວອູ້ມເອົາທັງສອງກັບມາເຮືອນ.

ຫຼາຍເດືອນຜ່ານໄປ ລີງນ້ອຍໃຫຍ່ແດ່ແລ້ວ ນາຍພານຈຶ່ງເອົາໄປປ່ອຍໃສ່ຝູງລີງທີ່ຫາກິນຢູ່ໃນປ່າດົງທີ່ຕຶບໜານັ້ນ ແລ້ວລີງກໍໄດ້ຕໍ່ສູ້ພະຈົນໄພໄປກັບຝູງລີງຈຳນວນຫຼາຍນັ້ນຕະຫຼອດໄປ. (ຈົບ)

***ນິທານເລື່ອງນີ້*** : ສອນໃຫ້ຮູ້ວ່າ ການເຮັດໃຫ້ເພິ່ນມີຄວາມທຸກ ຫຼືຕາຍພັດພາກັນ ຍ້ອນຄວາມຢາກທີ່ເຫັນແກ່ໂຕຂອງຕົນນັ້ນ ແມ່ນເປັນບາບ ມີກັມຕາມສະໜອງໃນວັນໃດວັນໜຶ່ງຂ້າງໜ້າ.

(ໂດຍ: ສ.ດາວທຽມນ້ອຍ)

## <u>ກິດຈະກຳ: ສຳຜັດຊີວິດສັດ</u>

ແນະນຳນັກຮຽນໄປສຳພັດກັບຊີວິດສັດຕົວຈິງ ໃນສວນຫຼືເດີ່ນບ່ອນທີ່ມີສັດເລັກສັດນ້ອຍເຊັ່ນ: ຕັກແຕນ, ມົດ, ບົ້ງ, ປາ, ແມງມູມ ແລະສັດອື່ນໆ ໂດຍໃຫ້ນັກຮຽນບັນທຶກອາການຂອງສັດ ທີ່ຕົນເອງສຳຜັດວ່າ ມັນສະແດງອາການແນວໃດ ເມື່ອພົບກັບອັນຕະລາຍມາເຖິງໂຕ? ຄູເປັນຜູ້ຕິດຕາມຊ່ວຍບອກຊື່ຂອງສັດ ແລະຄວາມອັນຕະລາຍຈາກມັນ ເມື່ອມັນຂົບຫຼືຕອດ ແຕ່ລະຄົນແຕ້ມຮູບຂອງສັດທີ່ຕົນເອງສຳຜັດນັ້ນພ້ອມບັນທຶກການຕໍ່ສູ້ ຫຼືຫຼົບໜີເອົາໂຕລອດຂອງມັນ ໃຫ້ເວລາແກ່ນັກຮຽນ 25 ນາທີ ແລ້ວກັບເຂົ້າຫ້ອງ ຈັດເປັນ 3 ຄົນຕໍ່ກຸ່ມ ຂຶ້ນສະເໜີຊື່ ແລະຮູບຂອງສັດທີ່ຕົນເອງສຳຜັດມາ ເວົ້າເຖິງອາການຂອງມັນເມື່ອພົ້ອັນຕະລາຍ(ໃຫ້ກຸ່ມລະ 1 ນາທີ ) ແລ້ວສະເໜີຫົວໜ້າຫ້ອງສະຫຼຸບວ່າ: **ສັດຮັກຊີວິດຂອງມັນ ຫຼື ບໍ່ຮັກ**?ໃຫ້ຟັງສຽງສ່ວນຫຼາຍທີ່ໄດ້ສຳພັດມາກັບມື.

**ຄູໃຫ້ບົດຮຽນວ່າ**: " ທຸກຊີວິດມີຄ່າເທົ່າທຽມກັນຄື ມີສິດທີ ທີ່ຈະຢູ່ໃນໂລກນີ້ຈົນກວ່າຈະໝົດອາຍຸ ແຕ່ຖ້າເຈັບເປັນ ຫຼືຕາຍຍ້ອນຜູ້ອື່ນກະທຳຈະເສຍໃຈທີ່ສຸດ ຖ້າເປັນຄົນກໍຈະສາບແຊ່ງຈ່ອງເວນ ດັ່ງນັ້ນຈຶ່ງມີຂໍ້ຫ້າມບໍ່ໃຫ້ຂ້າສັດຕັດຊີວິດທັງຕົນເອງ ແລະຜູ້ອື່ນ ເອີ້ນວ່າສິນ: ***ປານາຕິບາດ ຫ້າມບໍ່ໃຫ້ຂ້າສັດ*** "

## <u>ເກມ: ນາຍພານໄລ່ເນື້ອ</u>

ເກມນີ້ຄືກັບການຫຼິ້ນໝາກເສືອໄລ່ໝູ ປ່ຽນຊື່ເສືອໃຫ້ເປັນຊື່ນາຍພານ ເພື່ອໃຫ້ເຂົ້າກັບບົດ ***ປານາຕິບາດ*** ຄື ໃຫ້ນັກຮຽນໜຶ່ງຄົນເປັນນາຍພານ ສີ່ຫາຫ້າຄົນ ເປັນກວາງ ນອກນັ້ນເປັນຮົ້ວລ້ອມໂດຍເຮັດເປັນວົງມົນແຕ່ລະຄົນຈັບແຂນຕໍ່ກັນ ເນື້ອທີ່ທາງໃນມີຝູງກວາງກິນຫຍ້າຢູ່ຢ່າງມີຄວາມສຸກ ສ່ວນນາຍພານຍ່າງເລາະລຽບຫາທາງລອດຮົ້ວເຂົ້າໄປ ຮົ້ວກໍເປັນຄົນຍົກແຂນຂຶ້ນລົງຢູ່ຕະຫຼອດເວລາ ນາຍພານກໍພະຍາຍາມລອດຮົ້ວໂດຍບໍ່ໃຫ້ຊູນໃຜ ຖ້າຊູນຜູ້ໃດໃຫ້ຜູ້ນັ້ນເປັນນາຍພານແທນ ນາຍພານເກົ່າເປັນຮົ້ວແທນ.

ເມື່ອນາຍພານລອດຮົ້ວເຂົ້າໄປໄດ້ ກໍໄລ່ຈັບກວາງ ສ່ວນກວາງກໍແຕກຕື່ນຫາທາງຫຼົບໜີລອດຮົ້ວອອກ ຜູ້ໃດຊູນຮົ້ວຜູ້ນັ້ນເສຍເກມ ນາຍພານຕ້ອນຈັບເອົາກວາງຕົວໃດຕົວໜຶ່ງ ຖ້າໄດ້ໃຫ້ກະດິກສ້ວງ ຖ້າບໍ່ໄດ້ຮົ້ວແລ່ນເຂົ້າໄປໜີບນາຍພານ ນາຍພານແລ່ນອອກໃຫ້ທັນ ຖ້າບໍ່ມີທາງອອກໃຫ້ຮ້ອງວ່າ " ຍອມແລ້ວ " (ຈົບເກມ).

**ຄູຖາມນັກຮຽນວ່າ**: ເປັນຫຍັງກວາງຈຶ່ງແລ່ນໜີນາຍພານ ? *(ຟັງນັກຮຽນເວົ້າອອກມາ).*

**ຄູແນະນຳ**: ເກມນີ້ສັດ ແລະຄົນໃຜກໍຢ້ານຕາຍຫາທາງເອົາໂຕລອດ ຜູ້ມີຈິດໃຈສູງຈຶ່ງບໍ່ທຳຮ້າຍກັນເລີຍ! (ເໝາະສຳລັບ ປໍ 4-5 ແຕ່ມັນຈະຍືດເກີນໄປ ຖ້າມີເວລາພໍຈຶ່ງເຮັດ).

(*ໂດຍ: ສ.ດາວທຽມນ້ອຍ* ).

## ເບນຈະສິນ ສິກຂາບົດທີ 2:

**ອະທິນນາທານາ ເວຣະມະນີ ສິກຂາປະທັງ ສະມາທິຍາມິ.**

**= ຂ້າພະເຈົ້າ ຂໍຮັບເອົາຂໍ້ສິນ ຄືເວັ້ນຈາກການລັກຊັບ.**

### 1. ສາລະສຳຄັນ

ການບັນຍັດສິນຂໍ້ນີ້ ເພື່ອປ້ອງກັນການທຳລາຍກຳມະສິດ ໃນຊັບສິນບັດຂອງກັນແລະກັນ ໂດຍຫວັງຈະໃຫ້ລ້ຽງຊີບໃນທາງທີ່ຖືກຕ້ອງເປັນທັມ.

### 2. ຄວາມໝາຍ

ຂໍ້ນີ້ໝາຍເຖິງ ການເວັ້ນຈາກການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ຄືຖືເອົາດ້ວຍອາການເປັນໂຈນ ສິ່ງຂອງທີ່ເຈົ້າຂອງເຂົາບໍ່ໄດ້ໃຫ້ ກຳນົດໄດ້ດັ່ງນີ້:

2.1. ສິ່ງຂອງທີ່ມີເຈົ້າຂອງ ທັງທີ່ເປັນຊັບທີ່ມີວິນຍານ ແລະຊັບທີ່ບໍ່ມີວິນຍານ ອັນເຈົ້າຂອງ ບໍ່ໄດ້ຍົກໃຫ້ເປັນສິດຂາດ.

2.2. ສິ່ງຂອງທີ່ບໍ່ແມ່ນຂອງໃຜ ແຕ່ມີຜູ້ຮັກສາຫວງແຫນ ໄດ້ແກ່ສິ່ງຂອງເຂົາອຸທິດບູຊາປູຊະນິຍະວັດຖຸໃນສາດສະໜານັ້ນໆ.

2.3. ສິ່ງຂອງທີ່ເປັນຂອງລວມໝູ່ອັນບໍ່ໄດ້ແບ່ງກັນ ໄດ້ແກ່ ຂອງສົງ ແລະຂອງມະຫາຊົນໃນສະໂມສອນສະຖານນັ້ນໆ.

### 3. ລັກສະນະຂໍ້ຫ້າມ ແລະອາການກະທຳ

ເມື່ອກ່າວເຖິງຄວາມປະພຶດອັນຊອບທັມ ໃນຊັບສິນບັດຂອງຜູ້ອື່ນເປັນສຳຄັນ ຄວນຮູ້ຂໍ້ຫ້າມໃນສິກຂາບົດນີ້ ມີ 3 ປະການ ຄື: ໂຈຣະກຳ ປະພຶດເປັນໂຈນ, ຄວາມລ້ຽງຊີບອະນຸໂລມໂຈຣະກຳ, ກິຣິຍາເປັນສາຍາໂຈຣະກຳ.

### 3.1. ໂຈຣະກຳ

ການຖືເອົາສິ່ງຂອງທີ່ບໍ່ມີຜູ້ໃຫ້ ດ້ວຍການກະທຳເໝືອນໂຈນທຸກຢ່າງ ຈັດເປັນໂຈຣະກຳ ໃນທາງສິນທັມ ທ່ານລວມໄວ້ 15 ວິທີ ດັ່ງນີ້:

(1) ການລັກເອົາຊັບຂອງຄົນອື່ນທີ່ເຈົ້າຂອງເຂົາບໍ່ເຫັນ ເຊັ່ນ: ໃນເວລາງຽບເຈົ້າຂອງຊັບບໍ່ຢູ່ ຈັບເອົາຂອງເຂົາໄປ ເວລາສະຫງັດຄືນ ຍ່ອງເຂົ້າໄປໃນເຮືອນ ຈັບເອົາຂອງເຂົາໄປ ງັດ ຫຼືເຈາະປະຕູ ຫຼືບ່ອນຕ່າງໆ ທີ່ມີຊັບ (**ລັກ**).

(2) ການຖືເອົາຂອງໃນເວລາເຈົ້າຂອງຊັບເຜີ ເຊັ່ນ: ດຶງເອົາສ້ອຍໃນຄໍແລ້ວແລ່ນໜີໄປ ຕີເຈົ້າຂອງຊັບໃຫ້ເຈັບ ຫຼືສະຫຼົບ ແລ້ວຖືເອົາຂອງໜີໄປ (**ຊີກ**).

(3) ສະແດງອຳນາດ ຫຼືໃຊ້ອາວຸດຂົ່ມຂູ່ ຫຼືຈີ້ ໃຫ້ເຂົາຢ້ານແລ້ວໃຫ້ຊັບໄປ (**ກັນໂຊກ**)ຫຼື(**ຈີກຫໍ່**).

(4) ລວມພວກພ້ອງກັນຫຼາຍຄົນ ມີສາດຕາວຸດເຂົ້າຄຸມພື້ນທີ່ເຈົ້າຂອງຊັບ ດ້ວຍອຳນາດແລ້ວເກັບເອົາຊັບໄປ (**ປຸ້ນ**).

(5) ອ້າງກຳມະສິດ ຢືນຢັນເອົາຂອງຄົນອື່ນມາເປັນຂອງຕົນ (**ຕູ່**).

(6) ກິລິຍາທີ່ຖືເອົາຊັບຂອງຜູ້ອື່ນ ເຊັ່ນ: ຈັບເອົາຂອງແລ້ວໂກງເອົາເລີຍ ອ້າງວ່າເປັນຂອງ ຂອງຕົນເອງ (**ສໍ້**).

(7) ກິລິຍາທີ່ເວົ້າຕົວະ ເພື່ອຖືເອົາຂອງຜູ້ອື່ນ (**ຫຼອກ**).

(8) ອາການທີ່ຖືເອົາຂອງຜູ້ອື່ນ ດ້ວຍສະແດງຂອງຢ່າງໃດຢ່າງໜຶ່ງໃຫ້ເຂົ້າໃຈຜິດ ແລະການໂກງຕາຊັ່ງຕາຊີງຕ່າງໆ (**ລວງ**).

(9) ອາການທີ່ເຮັດຂອງປອມໃຫ້ຄົນອື່ນເຫັນ ແລະເຊື່ອວ່າເປັນຂອງແທ້ ແລ້ວແລກປ່ຽນເອົາຊັບໄປ ຫຼື ພະຍາຍາມປອມເອກະສານລາຍເຊັນ(**ປອມ,ແປງ**).

(10) ອາການທີ່ຢືມເອົາຂອງຄົນອື່ນໄປໃຊ້ ແລ້ວເອົາເລີຍ ເຊັ່ນ: ຢືມຂອງແລ້ວບໍ່ສົ່ງຄືນ ກູ້ເງິນເຂົາແລ້ວບ່ຽງບໍ່ສົ່ງທັງຕົ້ນທັງດອກ (**ຕະບັດ ຫຼື ບ່ຽງ**).

(11) ກິລິຍາທີ່ຖືເອົາເສດ ເຊັ່ນ: ຫົວໜ້າໃຊ້ໃຫ້ໄປເກັບເງິນຄ່າປະຕັງຕາມຮ້ານຄ້າ ຄ່າເຊົ່າເຮືອນໄດ້ມາຫຼາຍແຕ່ໃຫ້ ຫຼືແຈ້ງວ່າໄດ້ໜ້ອຍ (**ບຽດບັງ**).

(12) ອາການທີ່ເອົາຂອງຕ້ອງຫ້າມ ຫຼົບໜີພາສີ ເຊັ່ນ: ສິນຄ້າເຖື່ອນ (**ລັກລອບ**).

(13) ກິລິຍາທີ່ເຂົ້າ-ອອກປະເທດທີ່ບໍ່ແຈ້ງ ຫຼືໄປຜ່ານດ່ານໃຫ້ຖືກຕ້ອງຕາມກົດລະບຽບຂອງ ບ້ານເມືອງ (**ຫຼົບຫຼີກ**).

(14) ອາການທີ່ຖືເອົາຂອງ ຂອງຕົນທີ່ບໍ່ດີໄປໄວ້ແທນ ແລ້ວຖືເອົາສິ່ງຂອງທີ່ດີຂອງຜູ້ອື່ນໄປເປັນຂອງຕົນ (**ສັບປ່ຽນ**).

(15) ກິລິຍາທີ່ໂກງບັນຊີເງິນ ຫຼືວິທີໂກງຢ່າງໃດຢ່າງໜຶ່ງ ຂອງໜ່ວຍງານທີ່ຕົນສັງກັດຢູ່ ຫຼືຂອງໜ່ວຍງານອື່ນກໍຕາມ (**ຍັກຍອກ**).

## 3.2. ຄວາມລ້ຽງຊີບອະນຸໂລມໂຈຣະກຳ.

ຄວາມລ້ຽງຊີບອະນຸໂລມໂຈຣະກຳນີ້ ຄື: ການສະແຫວງຫາຊັບພັດສະດຸໃນທາງບໍ່ບໍລິສຸດ ແຕ່ບໍ່ນັບເຂົ້າໃນອາການເປັນໂຈນ ມີປະເພດດັ່ງນີ້:

(1) ການກະທຳອຸດໜູນໂຈຣະກຳ ເຊັ່ນ: ຮັບຊື້ຂອງໂຈນ, ຮູ້ເຫັນເປັນໃຈ (**ສົມໂຈນ**).

(2) ການຄົບຄົນດ້ວຍອາການບໍ່ຊື່ສັດໂດຍຫວັງເອົາຊັບຂອງເຂົາຝ່າຍດຽວ ເມື່ອເຂົາສິ້ນເນື້ອປະດາຕົວ ຕົກທຸກໄດ້ຍາກ ກໍຖິ້ມປະໄປ (**ປອກລອກ**).

(3) ການຖືເອົາຊັບພັດສະດຸທີ່ເຂົາໃຫ້ ເພື່ອຊ່ວຍເຮັດທຸລະໃຫ້ເຂົາໃນທາງທີ່ຜິດ ເຊັ່ນ:ຂ້າລັດຖະການຮັບເງິນສິນຈ້າງຈາກປະຊາຊົນຜູ້ກະທຳຜິດ (**ຮັບສິນບົນ**).

### 3.3. ກິລິຍາເປັນສາຍາໂຈຣະກຳ

ຂໍ້ນີ້ ໄດ້ແກ່ ການເຮັດວັດຖຸຂອງຜູ້ອື່ນໃຫ້ສູນເສຍ ຫຼືໄດ້ຮັບຄວາມເສຍຫາຍ ມີປະເພດດັ່ງນີ້:

(1) ກິລິຍາທີ່ເຮັດຄວາມເສຍຫາຍ ແກ່ຊັບພັດສະດຸຂອງຄົນອື່ນ ເຊັ່ນ: ຈູດ ເຜົາເຮືອນ, ຟັນ ງົວ ຟັນຄວາຍ ເປັນຕົ້ນ (**ຜານ**).

(2) ອາການຖືເອົາຊັບພັດສະດຸຂອງຜູ້ອື່ນດ້ວຍຄວາມມັກງ່າຍ ບໍ່ບອກເຈົ້າຂອງ ຄິດເອົາເອງວ່າ ເຈົ້າຂອງບໍ່ຫວງຫ້າມ **(ສວຍໂອກາດ)**.

" ການກະທຳໃນຂໍ້ 3.1. ແມ່ນສິນຂາດ ໃນຂໍ້ 3.2. ແລະ 3.3. ຄວນຕັດສິນດ້ວຍເຈຕະນາ ຖ້າຫວັງທຳລາຍກຳມະສິດໃນຊັບສິນຂອງຜູ້ອື່ນ ແມ່ນສິນຂາດ ແຕ່ຖ້າບໍ່ມີເຈຕະນາ ສິນດ່າງພ້ອຍ ".

4. ຫຼັກວິນິດໄສອະທິນນາທານ

4.1. ຂອງນັ້ນມີເຈົ້າຂອງຫວງແຫນ.

4.2. ຕົນກໍຮູ້ວ່າຂອງນັ້ນມີເຈົ້າຂອງຫວງແຫນ.

4.3. ຈິດຄິດຈະລັກ.

4.4. ພະຍາຍາມເພື່ອຈະລັກ.

4.5. ນຳເອົາຂອງນັ້ນມາດ້ວຍຄວາມພະຍາຍາມນັ້ນ.

ສິນຂໍ້ນີ້ຈະຂາດ ກໍຕໍ່ເມື່ອການກະທຳຄົບອົງທັງ 5 ປະການຂ້າງເທິງນີ້.

ò **ການວິນິດໃສຊັບປະເພດຕ່າງໆ.........**

(1) ຊັບພັດສະດຸທີ່ມີວິນຍານຄອງ ໄດ້ແກ່ສັດຕ່າງໆ ເຊັ່ນ: ຊ້າງ, ມ້າ, ງົວ, ຄວາຍ ເປັນຕົ້ນ (ວິນຍານະກະຊັບ).

(2) ຊັບພັດສະດຸທີ່ບໍ່ມີວິນຍານຄອງ ເຊັ່ນ: ເຮືອນ, ເງິນ, ຄຳ ເປັນຕົ້ນ (ອະວິນຍານະກະຊັບ).

(3) ຊັບພັດສະດຸທີ່ເຄື່ອນທີ່ໄດ້ ບາງຢ່າງກໍມີຊີວິດ ບາງຢ່າງກໍບໍ່ມີຊີວິດ ເຊັ່ນ: ສັດລ້ຽງ, ຕຽງ, ຕັ່ງ, ຖ້ວຍ, ລົດຍົນ ເປັນຕົ້ນ (ສັງຫາຣິມະຊັບ).

(4) ຊັບພັດສະດຸທີ່ເຄື່ອນທີ່ບໍ່ໄດ້ໄດ້ແກ່ ທີ່ດິນ ແລະຊັບທີ່ຕິດຢູ່ກັບທີ່ດິນ ເຊັ່ນ: ຕຶກ, ເຮືອນ, ຮ້ານຄ້າ ເປັນຕົ້ນ (ອະສັງຫາຣິມະຊັບ).

## ບົດປະກອບ ກາບ-ກອນ

**ກອນອ່ານ : " ສິນ ອະທິນາປົກປ້ອງ "**

| | |
|---|---|
| ຂອງຫວງຫ້າມ | ຫຼາຍອັນມີຄ່າ |
| ຜູ້ຮັກສາເກັບໄວ້ | ຫວັງໄດ້ເພິ່ງມັນ |
| ດ້ວຍເຫດນັ້ນ | ຂອງຮັກຄືຫວງ |
| ທັງຂອງຫຼວງ | ຂອງຕົນ ຄືຄົນເປັນເຈົ້າ |
| ຍາມເຮົາເອົາມາໃຊ້ | ອັນໃດກໍໄດ້ງ່າຍ |
| ແຕ່ຄົນລັກໄປຂາຍ | ເກີນວ່າຢາກຮ້າຍ |
| ໃຫ້ຜີປ້ອຍ | ດ່າປະຈານ |
| ຍົມພິບານເຝົ້າໝັ້ | ດັງໄຟຂຶ້ນຕື່ມ ແດ່ເນີ |
| ເອົາຄົນຂີ້ລັກນັ້ນ | ໄປຖິ້ມໃສ່ໄຟ ແດ່ທ້ອນ ! |

ຍ້ອນຍາກຮ້າຍ ແປປ່ວນໃນຈິດ
ຄິດບໍ່ເປັນມຸງຄຸນ ຢາກປາດໂຈນໜັງຊີ້ນ
ເອົາໂຍນໃຫ້ ໝາກິນທັງກະດູກ ເບິ່ງເດ໋!
ຄືຊິສົມນໍ້າໜ້າ ໝາແຫ້ນດູກເອັນ
ເປັນທີ່ເຮົາຮັບຮູ້ ໝູ່ໂຈນໃຈບາບ
ແມ່ນໃຜໆ ກໍປ້ອຍ ໃຫ້ເວນຕ້ອງບາບທັນ
ດ້ວຍເຫດນັ້ນ ໃຫ້ຕັ້ງຕໍ່ຍັງສິນ
ເພື່ອກໍາຈັດມົນທິນ ຢ່າໃຫ້ມີມາຕ້ອງ
**ສິນອະທິນາປົກປ້ອງ** ຄົນເຮົາໃຫ້ສະອາດ
ບໍ່ຍາດເອົາເຄື່ອງໃຊ້ ຊາວບ້ານອື່ນເຂົາ
ບໍ່ເອົາຕົນໄປເຂົ້າ ວົງໂຈນໃຫ້ດໍາດ່າງ
ນໍ້າບໍ່ມີໃຫ້ລ້າງ ຫາກໃຜເປື້ອນໝູ່ໂຈນ
ຫາທາງໜີໃຫ້ພົ້ນ ຕົ້ນແຫ່ງຄວາມທຸກ
ອຸກຍ້ອນໂຈນໃນໃຈ ກໍປານໄຟສຸມທ້ອງ
ບໍ່ຈັກທອງຄໍາແກ້ວ ແນວເງິນທີ່ເຮົາຢາກ
ຫາກວ່າສິນບໍ່ຄໍ້າ ຊິເອົາສັ່ງງຄູ່ສູ່ອັນ ພຸ້ນແລ້ວ!
**ອະທິນາ**ຄອຍປົກປ້ອງ ແນວຄິດອະກຸສົນ
ກາຍເປັນຄົນເໜືອຄົນ ກໍຍ້ອນສິນພາຂຶ້ນ
ບໍ່ແມ່ນເງິນຄໍາແກ້ວ ຊິພາຄົນສູງສົ່ງ
ອານິສົງສົ່ງໃຫ້ ເມື່ອສິນນັ້ນຢູ່ນໍາ ນັ້ນແລ້ວ!.
(ໂດຍ: ສ. ວົງສະຫວ່າງ)

**ກາບ: " ອະທິນາ "**

ອະທິນາ ເຂົາວ່າບໍ່ລັກ
ເບິ່ງຄັກໆ ຂອງເພິ່ນຂອງໂຕ
ບໍ່ຄຶດໂສ ຫາທາງແຕ່ໄດ້
ບໍ່ເຂົ້າໃກ້ ຂອງມີລາຄາ
ມັນຊິພາ ໃຈວີ່ໃຈວອນ
ຄຶດອອນຊອນ ນໍາວັດຖຸເຜດ
ເປັນສາເຫດ ຄົນຕົກອະບາຍ
ບໍ່ທັນຕາຍ ຕິດຄຸກຊ່ອມຊໍ່
ເບິ່ງມໍ່ໆ ຄົນລັກຂອງເຂົາ

ຕຳຫລວດເອົາ		ໃສ່ໂນງສອງເບື້ອງ (ກັບມື)
ຍ້ອນວ່າເລື່ອງ		ງັດແງະຊຸມຊົນ
ເຮົາເປັນຄົນ		ຮັກຄວາມສະອາດ
ໝົດທັງຊາດ		ຖືສິນບໍ່ເອົາ
ທັງບໍ່ເມົາ		ລັກໂລບຂອງໝູ່
ໃຫ້ເຮົາຢູ່		ແບບກຸ້ມຕົນເອງ
ບໍ່ຊ່ວງເສັງ		ຮັ່ງມີທາງລັດ
ໜ້ອຍລະງັດ		ຈີ້ເຈົ້າເອົາຂອງ
ເຂົ້າທຳນອງ		ມືໄວໃຈກ້າ
ບໍ່ຊາດໜ້າ		ຊາດນີ້ລະ!ເຫັນ
ຢ່າໄດ້ເປັນ		ດັ່ງຄຳເພິ່ນເວົ້າ
ວັດບໍ່ເຂົ້າ		ພຣະເຈົ້າບໍ່ຢຳ
ບໍ່ຄະລຳ		ຂອງຫຼວງຂອງລັດ
ເອົາເງິນຍັດ		ຊື້ຈ້າງຈອບອອຍ
ຈົນວ່າຖອຍ		ສິນທັມບໍ່ຈີ່
ເຮັດຊືໆ		ຫູໜວກກິນຟານ
ຕົກລູກຫຼານ		ບາບກັມນຳຕ້ອງ
ໃຜບໍ່ຍ້ອງ		ຜີເຜດມັນຫິວ
ເປັນຊະຄິວ		ເຫັນເງິນໜ້າມືດ
ໃຊ້ຄວາມຄຶດ		ພີປ້ອງເອົາຂອງ
ຢ່າໄດ້ລອງ		ລູກຫຼານຍັງນ້ອຍ
ແກ້ມປ໋ອຍລ່ອຍ		ຮັກສາສິນເປັນ
ນ້ອງນັ້ນເຫັນ		ສິນທັມກັບທີ່
ຢ່າມິດໝີ່		ອອກຕ້ານພວກໂຈນ
ເຮົາເປັນຄົນ		ຮຸ່ນໃໝ່ໃຈກ້າ
ເອົາສິນຫ້າ		ວາງໄວ້ທີ່ໃຈ ແທ້ເນີ!

(ໂດຍ.ສ.ດາວຫຼຸມນ້ອຍ)

## ນິທານ :" ກຳຂາຍໜ້າ ".

ແຕ່ກີ້ແຕ່ກ່ອນ ມີຍິງຄົນໜຶ່ງລາວເປັນຄົນຂີ້ລັກມັກໄດ້ ໄປທາງໃດມີແນວຢາກໄດ້ກໍພີປອງລັກເອົາຢູ່ສະເໝີ ຄົນທັງຫລາຍຈິ່ງໃສ່ຊື່ວ່າ ***ແມ່ໄກ່*** ມື້ໜຶ່ງຄົນຂາຍເຄື່ອງໄດ້ຫາບເອົາໝາກໄມ້ ແລະໄຂ່ໄກ່ໄປເລາະຂາຍ ຕາມບ້ານຕ່າງໆ ຜ່ານໄປຍັງເຮືອນຂອງລາວ ຈຶ່ງໄດ້ຮ້ອງໃສ່

**ຄົນຂາຍ**: " ຊື້ໝາກໄມ້ ໄຂ່ໄກ່ເດີ! ລາຄາຖືກໆ! " ຊາວບ້ານກໍມາຫຸ້ມລ້ອມ ບາງຄົນກໍຊື້ ບາງຄົນກໍບໍ່ຊື້ ແມ່ຄ້າກໍຂາຍດີເປັນພິເສດຈົນເຄື່ອງເກືອບໝົດ ສ່ວນແມ່ໄກ່ຄຶດຢາກໄດ້ໄຂ່ໄກ່ລ້າໆ ຈຶ່ງວາງແຜນນຸ່ງເສື້ອຫຼົມໆເຮັດໂຕ່ງເຕ່ງ! ນຸ່ງສິ້ນຮັດຕີນເສື້ອໄວ້ ແລ້ວຍ່າງໄປຫາຄົນຂາຍເຄື່ອງ ແລະເວົ້າວ່າ:

**ແມ່ໄກ່**: " ໄຂ່ໄກ່ນີ້ເບື່ອກິນແລ້ວ ! ໝາກໄມ້ນີ້ໄດແດ່! ກິໂລລະທໍ່ໃດ? "

**ຄົນຂາຍ**: " ກິໂລລະສາມຮ້ອຍກີບ "

**ແມ່ໄກ່**: " ເອົາໃຫ້ຂ້ອຍແດ່ໜຶ່ງກິໂລ! ເລືອກເອົາແຕ່ໜ່ວຍງາມໆ ເດີ ! " ແລ້ວລາວກໍຫຍັບເຂົ້າໄປນັ່ງໃກ້ໆກະຕ່າໄຂ່ໄກ່ ມືຊີ້ໄປພຸ້ນໄປພີ້ ເພື່ອໃຫ້ຜູ້ຂາຍເຄື່ອງເຜີຼງວເບິ່ງນຳມືທີ່ແມ່ໄກ່ເວົ້າ ແລະຊີ້ໄປ ບາງເທື່ອລາວກໍວ່າ ໂອ໊! ພຣະມາທາງພຸ້ນສາມອົງ!; ໂອ້! ມື້ນີ້ເດືອນອອກກາງເວັນ!...ແລະອື່ນໆ ສ່ວນມືເບື້ອງໜຶ່ງກໍຈັບເອົາໄຂ່ໄກ່ຍັດໃສ່ໃນເສື້ອຈົນເປັນອຸ້ງປຸ້ງ! ເມື່ອຜູ້ຂາຍເຄື່ອງເອົາໝາກໄມ້ຍື່ນໃຫ້ ແມ່ໄກ່ຈຶ່ງຄ້ວາຫາເງິນໃນຖົງ ຮູ້ວ່າເງິນເໜັບຢູ່ຫົວສິ້ນລາວຈຶ່ງລຸກຂຶ້ນຢືນ ແລະດຶງຫົວສິ້ນອອກ ເຮັດໃຫ້ໄຂ່ໄກ່ຢູ່ໃນພົກເສື້ອທີ່ລາວລັກໄວ້ຫລູດລົງດິນແຕກຊະ!; ຫຼາຍຄົນທີເຫັນພຶດຕິກຳພາກັນເວົ້າວ່າ: " ເຈົ້າລັກໄຂ່ໄກ່ໄດ໋ຫັ້ນ! "

**ແມ່ໄກ່**: " ບໍ່ແມ່ນ! ອັນນີ້ໄຂ່ຂ້ອຍ "

**ຄົນຂາຍ**: " ເຈົ້າແມ່ນຄົນ! ກໍໄຂ່ເປັນຢູ່ບໍ່? " ແມ່ໄກ່ບໍ່ຮູ້ແນວເວົ້າເມື່ອຈົນຕາແຈ ດັ່ງນັ້ນ ຈຶ່ງເວົ້າແກ້ເກື້ອວ່າ:

**ແມ່ໄກ່**: " ອ້າວ! ໃຜບໍ່ຮູ້ບໍຂ້ອຍຊື່ແມ່ໄກ່ ມີລູກກໍແມ່ນໄຂ່ໄກ່ລະບໍ່ ! ຈະເປັນໝູຫວະ! "

**ຄົນຂາຍ**: " ໃສເຈົ້າວ່າເບື່ອໄຂ່ໄກ່ແລ້ວ? ຄືລັກຂອງຂ້ອຍ? "

**ແມ່ໄກ່**: " ຂ້ອຍເບື່ອໄຂ່ໄກ່! ແຕ່ບໍ່ໝາຍຄວາມວ່າຂ້ອຍບໍ່ລັກຂອງເຈົ້າ! " ຫຼາຍຄົນພາກັນທ້ວງ ແລະຈັບແມ່ໄກ່ໄປໃຫ້ຕຳຫຼວດໃສ່ຄຸກເພື່ອໃຫ້ຫຼາບຈີ່(ຈົບ).

**ນິທານເລື່ອງນີ້** ສອນໃຫ້ຮູ້ວ່າ: ຢ່າຄຶດເຮັດ ແລະທົດລອງລັກ ເພາະຜິດສິນບໍ່ມີຜູ້ປົກປ້ອງເຮົາໃນທີ່ສຸດ ດັ່ງແມ່ໄກ່ນັ້ນແລ.ຯ.

## <u>ກິດຈະກຳ</u>

ແບ່ງນັກຮຽນໃຫ້ເປັນກຸ່ມໆ ລະຫ້າຄົນ ຄົ້ນຄ້ວາຄຳວ່າ" **ອະທິນນາ** " ມີລັກສະນະສະແດງອອກຄືແນວໃດ?:

1) ລັກ : ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.
2) ໂລບ : ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ
3) ຮັບສິນບົນ: ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.
4) ຫຼົບຫຼີກ: ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.
5) ປຸ້ນ,ຈີ້ : ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.
6) ປອມແປງ : ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.
7) ຫຼອກລວງ : ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.
8) ບັງວ : ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.
9) ສໍ້ລາດບັງຫຼວງ : ແມ່ນເຮັດແນວໃດ? ໃຫ້ຍົກຕົວຢ່າງ.

ຖ້າມີຫຼາຍກຸ່ມໃຫ້ເອົາກຸ່ມລະ 1 ຫຼື 2 ຂໍ້ ຂຶ້ນສະເໜີ ໃຫ້ເວລາຄົ້ນຄວ້າ 10 ນາທີ ຂຶ້ນສະເໜີກຸ່ມລະ 1ນາທີ ຫຼືຈະຫຼິ້ນລະຄອນແທນກໍໄດ້ ໃນການຍົກຕົວຢ່າງ.

**ຄູສາຫຼຸບວ່າ**: ອາການດັ່ງກ່າວແມ່ນຜິດຈາກປົກກະຕິ ຄືບໍ່ຢູ່ໃນຄວາມເປັນຄົນ ກາຍເປັນໂຈນມີຈິດໃຈຕໍ່າຊ້າ ຜິດສິນຂໍ້ສອງຄື " **ອະທິນາ.** ບໍ່ໃຫ້ລັກ ".

## ເກມ:" **ລັກໄຂ່ເຕົ່າ** ".

ຄູແບ່ງນັກຮຽນໃຫ້ເປັນກຸ່ມໆ ລະ 6 ຄົນ. ໃຫ້ແຕ່ລະກຸ່ມຫຼິ້ນເກມລັກໄຂ່ເຕົ່າ.

- ໃຫ້ຜູ້ໜຶ່ງໃນກຸ່ມເປັນເຕົ່າຮັກສາໄຂ່ ຢູ່ໃນທ່າກົ້ມມືທັງສອງຈຸດິນເຮັດຄືຄວາຍຢືນ ແລ້ວເອົາແພຫຼືເຈ້ຍກໍໄດ້ ເຮັດຄືໜ່ວຍໄຂ່ເອົາໄວ້ຢູ່ກ້ອງທ້ອງເຕົ່າ ສ່ວນເຫລືອ 5 ຄົນນັ້ນ ໃຫ້ເປັນຜູ້ເຂົ້າໄປຍາດຊີງເອົາໄຂ່ເຕົ່າ ໂດຍທີ່ເຕົ່າກໍປົກປ້ອງໄຂ່ຂອງຕົນ ແກວ່ງຕີນໄປມາເຕະຜູ້ມາລັກໄຂ່ຂອງຕົນ ຖ້າເຕະຖືກຜູ້ໃດ ໃຫ້ຜູ້ນັ້ນເປັນເຕົ່າແທນ ຖ້າຜູ້ໃດລັກໄຂ່ໄດ້ໂດຍບໍ່ຊູນໂຕເຕົ່າ ຜູ້ນັ້ນຈະໄດ້ຂີ່ຫຼັງເຕົ່າ 4 ວິນາທີ (ຈົບເກມ).

**ຄູສາຫລຸບ**: ເປັນຫຍັງເຕົ່າຈຶ່ງຫວງໄຂ່ ທັ້ງທີ່ໄປບໍ່ໄວ ແລະບໍ່ມີອາວຸດສູ້ສັດຕູອີກ! ໃຜຕອບໄດ້ຍົກມືຂຶ້ນ! (ຄູໃຫ້ໂອກາດແກ່ຜູ້ຂຶ້ນອະທິບາຍ 1 ນາທີ) ຄູສາຫຼຸບວ່າ:  ສົມບັດຂອງໃຜຜູ້ນັ້ນກໍຫວງ ແມ່ນແຕ່ສັດກໍຍັງຫວງໄຂ່ ຄົນຜູ້ມີຈິດໃຈສູງບໍ່ຄວນລັກ ເພາະຜິດສິນ **ອະທິນນາ ບໍ່ໃຫລັກ**.

(*ເກມນີ້ເໝາະສໍາລັບປໍ 4-5 ແຕ່ມັນຈະຢືດເກີນໄປ ຖ້າມີເວລາພໍຈຶ່ງຫຼິ້ນ*).

## <u>ເບນຈະສີນ ສິກຂາບົດທີ3:</u>

### ກາເມສຸ ມິດສາຈາຣາ ເວຣະມະນີ ສິກຂາປະທັງ ສະມາທິຍາມິ.

**= ຂ້າພະເຈົ້າ ຂໍຮັບເອົາຂໍ້ສິນ ຄືເວັ້ນຈາກການປະພຶດຜິດໃນກາມທັງ ຫຼາຍ.**

### 1. <u>ສາລະສໍາຄັນ</u>

ການບັນຍັດສິນຂໍ້ນີ້ ດ້ວຍຫວັງປູກຄວາມສາມັກຄີ ສ້າງຄວາມເປັນປຶກແຜ່ນ ປ້ອງກັນຄວາມແຕກແຍກໃນໝູ່ມະນຸດ ແລະເຮັດໃຫ້ໄວ້ວາງໃຈກັນ ແລະກັນ ໂດຍສະເພາະໃນສະຖາບັນຄອບຄົວ.

### 2. <u>ຄວາມໝາຍ</u>

ຄໍາວ່າ "ກາມທັງຫຼາຍ" ໃນທີ່ນີ້ໄດ້ແກ່ ກິລິຍາທີ່ຮັກໃຄ່ກັນໃນທາງປະເວນີ ໝາຍເຖິງ ເມຖຸນ ຫຼືການສ້ອງເສບກາມລະຫວ່າງຊາຍ-ຍິງ ການຜິດໃນກາມ ໝາຍເຖິງ ການເສບເມຖຸນກັບຄົນທີ່ຕ້ອງຫ້າມ ຜູ້ໃດເສບເມຖຸນກັບຄົນທີ່ຕ້ອງຫ້າມ ຜູ້ນັ້ນກະທໍາຜິດປະເວນີ ສິນຂໍ້ນີ້ຂາດ.

### 3. <u>ລັກສະນະຊາຍ ຫຼືຍິງທີ່ຕ້ອງຫ້າມ</u>

ເມື່ອເພັ່ງຄວາມປະພຶດບໍ່ໃຫ້ຜິດສິນເປັນໃຫຍ່ ສໍາຫຼັບຊາຍ ແລະຍິງມີດັ່ງນີ້:

## 3.1. ສຳລັບຊາຍ:

**# ຜູ້ຍິງທີ່ຕ້ອງຫ້າມສຳຫຼັບຊາຍ** ມີ 3 ປະເພດ ...........

(1) ຍິງມີສາມີ ທີ່ຮຽກວ່າ: ພັນລະຍາທ່ານ **(ສັດສາມິກາ)** ໄດ້ແກ່ ຍິງ 4 ຈຳພວກ ຄື:

- ຍິງທີ່ແຕ່ງງານກັບຊາຍແລ້ວ.
- ຍິງທີ່ບໍ່ໄດ້ແຕ່ງງານ ແຕ່ຢູ່ກິນກັບຊາຍຢ່າງເປີດເຜີຍ.
- ຍິງທີ່ຮັບສິ່ງຂອງ ຂອງຜູ້ຊາຍແລ້ວຍອມຢູ່ກິນກັບເຂົາ.
- ຍິງທີ່ຊາຍລ້ຽງເປັນພັນລະຍາ.

(2) ຍິງທີ່ຍາດຮັກສາ ຄືມີຜູ້ປົກຄອງ ບໍ່ເປັນອິດສະຫລະແກ່ຕົນ ທີ່ຮຽກວ່າ ຍິງຢູ່ໃນພິທັກຮັກ ສາຂອງທ່ານ ຍິງທີ່ມານດາບິດາຮັກສາ ຫຼືຍາດພີ່ນ້ອງຮັກສາ (ຍາຕິຮັກຂິຕາ).

(3) ຍິງທີ່ຈາຣີດຮັກສາ ຫຼື ຈາຣີດຫ້າມ (ທັມມະຮັກຂິຕາ) ໄດ້ແກ່........

<u>ເທື້ອກເຖົາ</u> ຄື ຍິງຜູ້ເປັນຍາດພີ່ນ້ອງຜູ້ໃຫຍ່ ນັບຍ້ອນຂຶ້ນໄປ 3 ຊັ້ນ ມີ ຍ່າທວດ, ເຖົ້າ-ທວດ, ແມ່ຍ່າ, ແມ່ເຖົ້າ, ແມ່.<u>ເຫຼົ່າກໍ</u> ຄື ຍິງຜູ້ສືບເຊື້ອສາຍຈາກຕົນລົງໄປ 3 ຊັ້ນມີ ລູກ, ຫຼານ, ເຫຼັນ.

<u>ຍິງທີ່ຢູ່ໃຕ້ພຣະບັນຍັດໃນພຣະສາດສະໜາ</u> ເຊັ່ນ: ພິກຂຸນີ, ແມ່ຂາວ, ຍິງຜູ້ຖືສິນອຸໂປສົດ (ສິນ 8). ລັກສະນະຜູ້ຍິງທັງ 3 ຈຳພວກນີ້ ຈະມີສັນທະຮ່ວມກັນ ຫຼືບໍ່ຮ່ວມກັນ ຖ້າຜູ້ຊາຍໄປຮ່ວມສັງວາດດ້ວຍກໍເປັນກາເມສຸມິດສາຈານ.

**# ຜູ້ຍິງທີ່ເປັນວັດຖຸຕ້ອງຫ້າມຂອງຊາຍໃນກາເມສຸມິດສາຈານ ໂດຍພິສະດານ** ມີ 20 ຈຳ ພວກ ຄື:

(1) ຍິງທີ່ມານດາຮັກສາ.

(2) ຍິງທີ່ບິດາຮັກສາ.

(3) ຍິງທີ່ມານດາບິດາຮັກສາ.

(4) ຍິງທີ່ອ້າຍຫຼືນ້ອງຊາຍຮັກສາ.

(5) ຍິງທີ່ເອື້ອຍຫຼືນ້ອງສາວຮັກສາ.

(6) ຍິງທີ່ຍາດພີ່ນ້ອງຮັກສາ.

(7) ຍິງທີ່ມີໂຄດຫຼືຕະກູນຮັກສາ.

(8) ຍິງທີ່ມີທັມຮັກສາ.

(9) ຍິງທີ່ມີສາມີຮັກສາ.

(10) ຍິງທີ່ມີສິນໄໝຫຼືພຣະ ຣາຊາຊົງຮັກສາ.

(11) ຍິງທີ່ຊາຍໄຖ່ຫຼືຊື້ມາດ້ວຍຊັບເພື່ອເປັນພັນລະຍາ.

(12) ຍິງທີ່ຢູ່ກັບຊາຍດ້ວຍຄວາມຮັກໃຄ່ພໍໃຈກັບເອງ.

(13) ຍິງທີ່ຢູ່ເປັນພັນລະຍາຊາຍດ້ວຍໂພຄະຊັບ.

(14) ຍິງທີ່ເຂັນໃຈ ພໍອາໃສຢູ່ໄດ້ເຄື່ອງນຸ່ງຂອງຖືແລ້ວຢູ່ເປັນເມຍ.

(15) ຍິງທີ່ຊາຍຂໍເປັນພັນລະຍາມີຜູ້ໃຫຍ່ຈັດການໃຫ້.

(16) ຍິງທີ່ຊາຍຊ່ວຍເຫຼືອເປັນພາລະ  ໃນຍາມມີອຸປະສັກອັນໜັກໃຫ້ແລ້ວ  ຍອມເປັນພັນລະຍາ.

(17) ຍິງທີ່ເປັນທາສີຢູ່ກ່ອນແລ້ວຊາຍເອົາມາເປັນພັນລະຍາ.

(18) ຍິງທີ່ເປັນຄົນຮັບຈ້າງແລ້ວຊາຍເອົາມາເປັນພັນລະຍາ.

(19) ຍິງທີ່ຊາຍລົບຂ້າເສິກໄດ້ເປັນຊະເລີຍແລ້ວເອົາມາເປັນພັນລະຍາ.

(20) ຍິງທີ່ຊາຍຢູ່ນຳໃນຊ່ວງເວລາໜຶ່ງ  ແລະຍິງຜູ້ນັ້ນກໍເຂົ້າໃຈວ່າຊາຍນັ້ນເປັນສາມີຂອງຕົນ.

**# ຍິງທີ່ບໍ່ເປັນວັດຖຸການເມສຸມິດສາຈານຂອງຊາຍ** ມີ 4 ຢ່າງ ຄື:

(1)  ຍິງທີ່ບໍ່ມີສາມີ.

(2)  ຍິງທີ່ບໍ່ຢູ່ໃນພິທັກຮັກສາຂອງຄົນອື່ນ.

(3)  ຍິງທີ່ຈາຣີດບໍ່ຫ້າມ.

(4)  ຍິງທີ່ເປັນພັນລະຍາຂອງຕົນ.

## 3.2.  ສຳລັບຍິງ

**# ຊາຍຕ້ອງຫ້າມສຳລັບຍິງ** ມີຢູ່ 2 ປະເພດ ຄື:

(1)  ຊາຍອື່ນນອກຈາກສາມີ  ເປັນສິ່ງຕ້ອງຫ້າມສຳລັບຍິງທີ່ມີສາມີແລ້ວ.

(2)  ຊາຍທີ່ຈາຣີດຮັກສາ ຫຼືຈາຣີດຫ້າມ  ເປັນສິ່ງຕ້ອງຫ້າມສຳລັບຍິງທັງປວງ ມີ 3 ຈຳພວກ:

-  ຊາຍທີ່ຢູ່ໃນພິທັກຮັກສາຂອງຕະກູນ  ເຊັ່ນ: ທວດ, ປູ່, ພໍ່ເຖົ້າ, ພໍ່.
-  ຊາຍທີ່ຢູ່ໃນພິທັກຮັກສາຂອງທຳນຽມ  ເຊັ່ນ: ນັກພົດ, ນັກບວດ.
-  ຊາຍທີ່ກົດໝາຍບ້ານເມືອງຫ້າມ ແລະຊາຍທີ່ຢູ່ໃຕ້ບັນຍັດໃນພຣະສາດສະໜາ  ເຊັ່ນ: ພຣະພິກຂຸ,  ສາມະເນນ,  ພໍ່ຂາວ,  ຊາຍບຳເພັນສິນອຸໂປສົດ (ສິນ 8).

**# ຊາຍທີ່ບໍ່ເປັນວັດຖຸແຫ່ງການເມສຸມິດສາຈານຂອງຍິງ** ມີ 4 ຢ່າງ ຄື:

(1)  ຊາຍທີ່ບໍ່ມີພັນລະຍາ.

(2)  ຊາຍທີ່ຈາຣີດບໍ່ຫ້າມ.

(3)  ຊາຍທີ່ເປັນສາມີຂອງຕົນ.

(4)  ຊາຍທີ່ເຮັດໂດຍພະລະການພົ້ນອຳນາດຂອງຍິງ  (ຊາຍທີ່ຂົ່ມຂູ່ ຫຼືຂົ່ມຂືນ).

# 4.  <u>ໂທດຂອງການເມສຸມິດສາຈານ</u>

ການເມສຸມິດສາຈານນີ້  ເປັນຄວາມປະພຶດທີ່ຊົ່ວຮ້າຍ    ເພາະສາມາດທຳ ລາຍຄວາມສຳພັນຂອງສະຖາບັນຕ່າງໆ  ເຊັ່ນ:  ສະຖາບັນຄອບຄົວ,  ສະຖານບັນການສຶກສາ,  ໜ່ວຍງານຕ່າງໆ ຫຼືລະຫວ່າງບຸກຄົນກັບບຸກຄົນ ໂດຍມີໂທດທັງທາງໂລກ ແລະທາງທັມ.  ຝ່າຍອານາຈັກມີກົດໝາຍລົງໂທດຜູ້ປະພຶດຜິດ  ຝ່າຍພຸດທະຈັກກໍຈັດເປັນບາບ ແລະຜິດສິນແກ່ຜູ້ກະທຳຜິດ  ເມື່ອກ່າວໂດຍຄວາມເປັນກັມ  ຈັດວ່າມີໂທດໜັກເປັນຊັ້ນກັນໂດຍ  ວັດຖຸ, ເຈຕະນາ ແລະ ປະເພດ.

4.1.  ໂດຍວັດຖຸ   ຖ້າອາການກະທຳເປັນຊາຍຊູ້ ຫຼືຍິງຊູ້  ມີໂທດຫຼາຍ.

4.2.  ໂດຍເຈຕະນາ   ຖ້າເປັນໄປດ້ວຍກຳລັງລາຄະກ້າ  ມີໂທດຫຼາຍ.

4.3. ໂດຍປະເພດ. ຖ້າເປັນໄປໂດຍພະລະການ ມີໂທດຫຼາຍ.

## 5. ຫຼັກວິນິໃສກາເມສຸມິດສາຈານ

**ກາເມສຸມິດສາຈານ** ມີອົງ 4 ຄື:

5.1. ສິ່ງທີ່ບໍ່ຄວນເສບ(ບໍ່ຄວນເຮັດ) ເຊັ່ນ: ຮູປັດສາວະ, ຮູທະວານໜັກ, ຮູປາກ. (ອະຄະມະ ນີຍະວັດຖຸ).

5.2. ຈິດຄິດທີ່ຈະເສບໃນສິ່ງອັນບໍ່ຄວນເສບ (ຕັດສະນິງ ເສວະນະຈິດຕັງ).

5.3. ກະທຳຄວາມພະຍາຍາມໃນອັນທີ່ຈະເສບ (ເສວະນັປປະໂຍໂຄ).

5.4. ກະທຳຮູຕໍ່ຮູເຖິງກັນ (ມັກເຄນະ ມັກຄັບປະຕິປັດຕິ).

ໃນເລື່ອງກາເມສຸມິດສາຈານນີ້ ຜູ້ທີ່ກະທຳການເສບເອງເທົ່ານັ້ນ ຈຶ່ງໄດ້ຊື່ວ່າ ເປັນການກະທຳຜິດສິນຂໍ້ນີ້ ສ່ວນການໃຊ້ຄົນອື່ນໃຫ້ກະທຳແກ່ຄົນອື່ນ ແທນຕົນເອງ ໂດຍບໍ່ເປັນການຂືນໃຈທັງຜູ້ກະທຳ ແລະ ຜູ້ທີ່ຖືກກະທຳນັ້ນ ໄດ້ຊື່ວ່າ ບໍ່ເປັນການຜິດສິນຂໍ້ນີ້ ແຕ່ການໃຊ້ໃຫ້ຄົນອື່ນກະທຳກາເມສຸມິດສາຈານໃຫ້ແກ່ຕົນ ອັນຢູ່ໃນສິ່ງຕ້ອງຫ້າມທີ່ໄດ້ກ່າວມາແລ້ວໃນຂໍ້ 3 ນັ້ນ ຊື່ວ່າ ເປັນການ ກະທຳຜິດໃນກາເມສຸມິດສາຈານແທ້.

### ກາບ: " ກາເມ "

| | |
|---|---|
| ສິນຂໍ້ສາມ | ນາມວ່າ **ກາເມ** |
| ໃຈຄົນເພ | ລັກລອບຫຼິ້ນຊູ້ |
| ຄວາມຄິດປູ້ | ໃນເລື່ອງຕັນຫາ |
| ທຳມະດາ | ສັດໂລກກໍ່ເກີດ |
| ເອົາກຳເນີດ | ໃນການເສບສົມ |
| ແຕ່ອາລົມ | ເອົາໄວ້ຕ່າງຫາກ |
| ຢ່າໄດ້ຢາກ | ລັກເສບຂອງຫວງ |
| ຄົນທັງປວງ | ຮັກດຽວເດັດດ່ຽວ |
| ໃຜມັກຄຽວ | ຜິດສິນກາເມ |
| ຄອບຄົວເພ | ຍ້ອນມັກຫຼິ້ນຊູ້ |
| ໃຫ້ເຮົາຮູ້ | ຄຸ້ມຄອງອາລົມ |
| ບໍ່ແມ່ນງົມ | ໄປໝົດທຸກຢ່າງ |
| ຖ້າເຮົາຊ່າງ | ບໍ່ຄຶດນຳມັນ |
| ສິ່ງສຳຄັນ | ໃຫ້ເຮົາຄຶດອອກ |
| ຢ່າໄດ້ລອກ | ວ່າແມ່ນຂອງດີ |
| ໃຜມັກມີ | ຕັນຫາຕ່ຳຕ້ອຍ |
| ເປັນເດັກນ້ອຍ | ຄຶດໃສ່ການຮຽນ |

ຄວາມພາກພຽນ　　　ພາໃຫ້ຄົນຮັ່ງ
ລອງມານັ່ງ　　　ພິຈາລະນາ
ແກ້ບັນຫາ　　　ຕົ້ນປາຍສາຍເຫດ
ພຣະເພິ່ນເທດ　　　ເຮົາໄດ້ນັ່ງຟັງ
ອະນິຈັງ　　　ຕັນຫາຕາມືດ
ໃຜຮຽນຝືດ　　　ຍ້ອນຄຶດນຳການ
ເຮົາລອງຖາມ　　　ຕົນເອງຄັກໆ
ວ່າເຮົາມັກ　　　ຄຶດນຳອິຫຍັງ?
ຖ້າເຮົາຍັງ　　　ຄຶດນຳແຕ່ຊູ້
ເປັນຄວາຍຕູ້　　　ແບກແຕ່ຄັນໄຖ
ຜູ້ເພິ່ນໄປ　　　ຮຽນດີຮຽນເກັ່ງ
ຍ້ອນເພິ່ນເລັ່ງ　　　ໃສ່ແຕ່ການຮຽນ
ເຮົາຄວນພຽນ　　　ໄວ້ແຕ່ຍັງນ້ອຍ
ບໍ່ປະປ່ອຍ　　　ໂອກາດອັນດີ
ຄວາມຮູ້ມີ　　　ຄືຊັບປະເສີດ　ແທ້ເນີ !.

(ໂດຍ.ສ.ດາວທຸງມນ້ອຍ)

## **ເພງປະກອບ**: " **ຮັກດຽວໃຈດຽວ** ".

\- ຮັກໆໆ　　　ຂ້ອຍນັ້ນຮັກແທ້ !
ບໍ່ໄດ້ແປ　　　ໄປເປັນຢ່າງອື່ນ
ບໍ່ມີຮັກໃດ　　　ຈະມາລົ້ນລື່ນ
ທັງມື້ທັງຄືນ　　　ຮັກໆໆແທ້
\- ຮັກໆໆ　　　ຮັກແທ້
ບໍ່ໄດ້ອໍ້ແອ້　　　ຮັກແທ້ຮັກວ່າ
ຮັກຈົນຕາຍ　　　ນ້ຳລາຍຟູມປາກ
ຍ້ອນຂ້ອຍຢາກ　　　ຮັກເຈົ້າຜູ້ດຽວ
\- ຮັກໆ ດິນ　　　ຫຼືວ່າຮັກຟ້າ
ຕົ້ນໄມ້ພູຜາ　　　ຮັກຄົນລະຢ່າງ
ຮັກພໍ່ແມ່　　　ເຖົ້າແກລຸງຕາ
ຮັກໄປຮັກມາ　　　ບໍ່ມີຈືດຈາງ
\- ຮັກເຈົ້ານັ້ນ　　　ເທົ່າຊີວາ

ບໍ່ໃຫ້ໃຜມາ ຮັກຊ້ອນນອນຂີ່
ມີແຕ່ຂ້ອຍ ຮັກເຈົ້າອີຫຼີ
ຂໍເຈົ້າຢ່າມີ ຮັກອື່ນມືນແສນ
\- ຮັກດຽວໃຈດຽວ ຮັກແທ້
ຈະມີໃຜແດ່ ເຂົ້າມາກ່ຽວຂ້ອງ
ຮັກບໍ່ລືມ ທັງອ້າຍແລະນ້ອງ
ເວົ້າກັນຖືກຕ້ອງ ຮັກດຽວໃຈດຽວ (ຊໍ້າ).

(ຈົບ): ໂດຍ: ສ.ວົງສະຫວ່າງ.

## ນິທານ:" ລືສີຕາໄຟ "

ຕັ້ງແຕ່ກີ້ແຕ່ກ່ອນມີລືສີຕົນໜຶ່ງ ມີອິດທິລິດເຫາະເຫີນເດີນອາກາດໄດ້ ທັງເທດສະໜາທັມກໍເກັ່ງ ລືສີຕັ້ງຈິດໃຈບໍາເພັນພຽນມາເປັນເວລາຍາວນານ ຈຶ່ງສາມາດເຫາະໄດ້ ມື້ນີ້ໜຶ່ງລືສີເຫາະໄປໃນເມືອງເພື່ອເທດສະໜາທັມໂຜດປະຊາຊົນ ພະຍາຢູ່ໃນເມືອງເຫັນລືສີມີອິດທິລິດ ຈຶ່ງເຫຼື້ອມໃສສັດທາຂໍນິມົນໃຫ້ລືສີຈໍາພັນສາຢູ່ໃນອຸທິຍານ (ສວນ) ຂອງຕົນ ເພື່ອວ່າຈະໄດ້ຮັກສາສິນກິນທານຟັງທັມໄດ້ງ່າຍ ເມື່ອລືສີຮັບນິມົນແລ້ວ ຝ່າຍພະຍາກໍປຸກອາສົມ (ບ່ອນຈໍາສິນ) ໃຫ້.

ແຕ່ລະມື້ລືສີໄດ້ເຫາະໄປທາງອາກາດເພື່ອບິນທະບາດ ໂດຍຜ່ານທາງຫໍປາສາດຂອງເຈົ້າພະຍາໄປລົງທີ່ເດີ່ນຫຼວງ ແລ້ວໃຫ້ປະຊາຊົນເຂົ້າມາຮັກສາສິນກິນທານເປັນປະຈໍາ.

ມື້ນີ້ໜຶ່ງພະຍາມີວຽກຈໍາເປັນຈະໄປໄກ ຈຶ່ງເຂົ້າໄປຄອບລືສີວ່າ ຈະໄປເຮັດວຽກຢູ່ຕ່າງເມືອງປະມານເຈັດວັນຈຶ່ງຈະກັບມາ ຝ່າຍລືສີກໍອວຍພອນໃຫ້ເດີນທາງດ້ວຍຄວາມສະດວກສະບາຍ ເມື່ອພະຍາໄປແລ້ວລືສີກໍປະຕິບັດກິດຈະວັດຕາມປົກກະຕິ ແຕ່ມາໃນຕອນເຊົ້າມື້ໜຶ່ງລືສີເຫາະໄປທາງເບື້ອງປ່ອງຢ້ຽມຫໍປະສາດເຈົ້າພະຍາ ເວລານັ້ນເມຍພະຍາກໍາລັງແຕ່ງຕົວປ່ຽນເຄື່ອງນຸ່ງເພື່ອກຽມຈະໄປໃສ່ບາດ ລືສີຫຼຽວເຫັນເມຍພະຍາແກ້ເສື້ອຜ້າປ່ຽນເຄື່ອງ ຈິດຂອງລືສີໄດ້ຕົກວູບຈາກຊານກັບບ່ອນ! ເຮັດໃຫ້ລືສີເຫາະບໍ່ໄດ້! ໄປເກາະຢູ່ປ່ອງຢ້ຽມຂອງເມຍພະຍາ ເມື່ອເມຍພະຍາຫຼຽວເຫັນລືສີເກາະຢູ່ໃກ້ໆ ຈະຕົກປ່ອງຢ້ຽມຈຶ່ງຟ້າວໄປດຶງເຂົ້າໃນຫໍປາສາດໃນເວລາຍັງບໍ່ທັນນຸ່ງເຄື່ອງຊໍ້າ! ທັງສອງໄດ້ຕົກເຂົ້າໄປສູ່ການເສບເມຖຸນໂດຍບໍ່ຕັ້ງໃຈ ເຮັດໃຫ້ລືສີອອກຈາກປາສາດບໍ່ໄດ້ ທາງເມຍພະຍາກໍທໍາທ່າຄືບໍ່ມີຫຍັງເກີດຂຶ້ນ.

ເມື່ອພະຍາກັບຄືນມາແຕ່ຕ່າງເມືອງ ເຫັນວ່າເມຍມີອາການປ່ຽນໄປ ສັ່ນທົດໆ ທາວໆ! ພະຍາຈຶ່ງຖາມຫາເຫດຜົນວ່າ: " ແມ່ນນ້ອງເປັນພະຍາດຫຍັງແທ້.?" ຝ່າຍເມຍພະຍາ ແລະລືສີເຂົາທັງສອງຮູ້ວ່າໜີຄວາມຜິດບໍ່ພົ້ນ ຈຶ່ງໄດ້ເຂົ້າກົ້ມຂາບຕໍ່ຕີນພະຍາວ່າ ." ພວກຜູ້ຂ້າໄດ້ຕົກເຂົ້າໃສ່ການເສບເມຖຸນຄືຜິດສິນຂໍ້**ກາເມ**ແລ້ວ! ຂໍໃຫ້ພະຍາລົງໂທດຕາມຕ້ອງການເຖີດ! " ເມື່ອພະຍາວິນິດໃສແລ້ວ ຕົນເອງກໍເຄີຍຟັງທັມນໍາລືສີຕົນນີ້ມາ ຈົນຮູ້ອັນຖືກອັນຜິດ ຮູ້ບາບບຸນຄຸນໂທດ ຈຶ່ງນະໂຍບາຍໃຫ້ລືສີ ແລະເມຍຂອງຕົນບໍ່ໃຫ້ຮັບໂທດ ແລະເວົ້າວ່າ: " ນີ້ແຫລະ! ຕັນຫາຕາມືດ ຖ້າບໍ່ມີສະຕິລະວັງ! **ຕາ**, **ຫູ**, **ດັງ**, **ລີ້ນ**, **ກາຍ**, **ໃຈ** ຈະພາໃຫ້ ຕົກຕໍ່າ ມີບາບກັມຕິດຫ້ອຍໃນທຸກພົບທຸກຊາດນັ້ນແລ! ".

ເມື່ອລີສີສຳນຶກໃນຄວາມຜິດ ຈຶ່ງຕັ້ງຈິດອະທິຖານ " ຈະບໍ່ມີນຕາເບິ່ງສິ່ງໃດທັງໝົດໃນໂລກນີ້ອີກ! ທີ່ເປັນທາງເຊື່ອມຂອງຍານ! " ຈຶ່ງເຂົ້າໄປສູ່ອາສົມແລ້ວຫຼັບຕາຕະຫຼອດ ຈົນໄດ້ສຳເລັດຍານອີກ ແຕ່ກໍຍັງມີນຕາບໍ່ໄດ້ ເພາະໄດ້ກາຍເປັນລີສີຕາໄຟໄປເສຍແລ້ວ ຖ້າມີນເບິ່ງອັນໃດໄຟກໍໄໝ້ອັນນັ້ນ ທັ້ນແລ.ຯ(ຈົບ) ນິທານເລື່ອງນີ້ ສອນໃຫ້ຮູ້ວ່າ **ຜູ້ໃດມົວເມົານຳກາມ ຜູ້ນັ້ນມືດບອດທາງປັນຍາ**.

( ກາມ=ໝາຍເຖິງການເສບສົມທາງເພດ). (ໂດຍ:ສ.ວົງສະຫວ່າງ).

## ກິດຈະກຳ

ແບ່ງນັກຮຽນເປັນກຸ່ມໆ ລະ 5 ຄົນ ຄູແຈກເຈ້ຍໃຫ້ກຸ່ມລະໜຶ່ງໃບ ແນະນຳນັກຮຽນຂຽນ ກ່ຽວກັບການລ່ວງລະເມີດສິດທິສ່ວນບຸກຄົນ, **ເຮົາບໍ່ຄວນແຕະຕ້ອງຮ່າງກາຍຂອງຄົນອື່ນ ບ່ອນໃດແດ່**?

ເຊັ່ນ: ຫົວ, ຫູ, ປາກ, ດັງ, ຄໍ, ບ່າໄຫລ່, ຫລັງ, ເອິກ, ມື, ແຂນ, ຂາ, ວ່າງຂາ, ກົ້ນ, ຕີນ, ທ້ອງ, ແກ້ມ

**ຍ້ອນເຫດຜົນຫຍັງຈຶ່ງບໍ່ຄວນແຕະຕ້ອງ**? ໃຫ້ແຕ່ລະກຸ່ມຄົ້ນຄວ້າ ແລະຂຽນ 5 ນາທີ ຂຶ້ນສະເໜີກຸ່ມລະ 1 ນາທີ.

**ຄູໃຫ້ບົດຮຽນ** : ອະໄວຍະວະໃນຮ່າງກາຍ ຖ້າຄົນອື່ນລ່ວງລະເມີດ ຫຼືເຮົາເອງລ່ວງລະເມີດຄົນອື່ນ ໂດຍເຈຕະນາ ແມ່ນຖືກຕຳນິວິຈານຈາກເຈົ້າຂອງເຂົາ ແລະຄົນອື່ນ ດັ່ງນັ້ນ ຈຶ່ງມີສິນຂໍ້ **ກາເມ** ໄວ້ປົກປ້ອງສິດທິອັນຊອບທັມຂອງຕົນເອງ ແລະຄົນອື່ນນຳ ຯ.

## ເກມ: "ຄົນຕາບອດ "

ນາຍຄູຕັດເຈ້ຍເປັນຫລາຍແຜ່ນ ແຕ່ມີສອງສີຄື ຂາວ ແລະແດງ ຫວ່ານລົງພື້ນດິນ ແບ່ງນັກຮຽນເປັນສອງກຸ່ມ ແຕ່ລະກຸ່ມໃຫ້ມີຈຳນວນຄົນເຄິ່ງໜຶ່ງຂອງກຸ່ມ ເອົາແພມັດຕາ.

-ໃນກຸ່ມ 1 ຜູ້ມັດຕາເກັບເອົາເຈ້ຍຂາວ.

-ໃນກຸ່ມ 2 ຜູ້ມັດຕາເກັບເອົາເຈ້ຍແດງ.

ສ່ວນຜູ້ບໍ່ໄດ້ມັດຕາ ມີສິດບອກຜູ້ມັດຕາໃນກຸ່ມຂອງຕົນເກັບເອົາເຈ້ຍ ທີ່ກຸ່ມຕົນເອງເລືອກ ແຕ່ບໍ່ໃຫ້ເກັບຊ່ອຍຜູ້ມັດຕາ ແຂ່ງຂັນກັນແມ່ນກຸ່ມໃດຈະເກັບໄດ້ໄວກວ່າ ໃຫ້ເວລາ 10 ນາທີ.

**ຄູສາຫລຸບວ່າ**: ຜູ້ຢາກໄດ້ແຕ່ບໍ່ເຫັນ ຜູ້ເຫັນພັດເອົາບໍ່ໄດ້ ປຽບເໝືອນຜູ້ມີຕັນຫາຕາມືດ ບໍ່ສາມາດມີປັນຍາໃນການສຶກສາຮ່ຳຮຽນ ບໍ່ສາມາດຄວບຄຸມອາລົມຂອງຕົນເອງໄດ້ດັ່ງນັ້ນ ຈຶ່ງມີສິນຂໍ້ **ກາເມ** ໄວ້ປົກປ້ອງຯ.

*(ເໝາະສຳລັບ ປີ 5 ຂຶ້ນໄປແຕ່ກໍຍັງຍືດຍາວ ຖ້າມີເວລາພໍຈຶ່ງຫຼິ້ນ)*

## ເບນຈະສິນ ສິກຂາບົດທີ 4:

**ມຸສາວາທາ ເວຣະມະນີ ສິກຂາປະທັງ ສະມາທິຍາມິ.**

**= ຂ້າພະເຈົ້າ ຂໍຮັບເອົາຂໍ້ສິນ ຄືເວັ້ນຈາກການເວົ້າຕົວະ.**

### 1. ສາລະສຳຄັນ

ການບັນຍັດສິນຂໍ້ນີ້ ເພື່ອເປັນການປ້ອງກັນການທຳລາຍປະໂຫຍດ ຂອງກັນແລະກັນ ດ້ວຍການເວົ້າຄືຕັດປະໂຫຍດທາງວາຈາ ແລະເປັນການຮັກສາວາຈາຂອງຕົນໃຫ້ເປັນທີ່ເຊື່ອຖືຂອງຄົນອື່ນ.

### 2. ຂໍ້ຫ້າມໃນສິກຂາບົດຂໍ້ນີ້

ເມື່ອຕ້ອງການຄວາມຈະເລີນເປັນໃຫຍ່ ຄວນຮູ້ໃນສິກຂາບົດນີ້ ມີຂໍ້ຫ້າມ ຫຼັກໆ ຢູ່ 3 ປະການ ຄື:

2.1. ມຸສາວາດ.

2.2 ອະນຸໂລມມຸສາ.

2.3. ປະຕິດສະວະ.

ການກະທຳຕາມຂໍ້ 2.1. ສິນຂາດ ການກະທຳຕາມຂໍ້ 2.2. ແລະຂໍ້ 2.3. ສິນດ່າງພ້ອຍ.

### 3. ຄວາມໝາຍ ແລະຂໍ້ຈຳແນກ

### 3.1. ມຸສາວາດ

# ການເວົ້າຕົວະ ໝາຍເຖິງ ການສະແດງອອກດ້ວຍເຈຕະນາບິດເບືອນຄວາມຈິງໃຫ້ຄົນຫຼົງເຊື່ອ ສະແດງອອກໄດ້ 2 ທາງຄື:

(1) ທາງວາຈາ ໄດ້ແກ່ : ການເວົ້າຕົວະແບບເຊິ່ງໆ ໜ້າ.

(2) ທາງກາຍ ເຊັ່ນ: ຂຽນຈົດໝາຍຕົວະ, ເຮັດລາຍງານປອມ, ເຮັດຫຼັກຖານປອມແປງ ຫຼືມີໃຜຖາມຂໍ້ຄວາມທີ່ຄວນຮັບແຕ່ສັ່ນຫົວສະແດງປະຕິເສດ.

**# ເພື່ອຄວາມສະດວກໃນການຮຽນ ແລະການປະຕິບັດ ທ່ານຈຳແນກ ກິລິຍາທີ່ກະທຳຜິດໃນມຸສາວາດໄວ້ 7 ຢ່າງ ຄື:**

(1) ເວົ້າຕົວະແບບເຊິ່ງໆ ໜ້າ ບໍ່ອາໃສມູນເຫດເລີຍ (ເວົ້າປົດ) ເຊັ່ນ: ເຫັນຢູ່ກໍບອກວ່າບໍ່ເຫັນ, ຮູ້ຢູ່ກໍ ບອກວ່າບໍ່ຮູ້ ໂດຍໂວຫານຕ່າງກັນ ຕາມຄວາມມຸ່ງໝາຍຂອງຜູ້ເວົ້າ ທ່ານສະແດງໄວ້ເປັນຕົວຢ່າງ 4 ຂໍ້ ຄື:

- ເວົ້າເພື່ອໃຫ້ເຂົາແຕກກັນ ຮຽກວ່າ: **ສໍ່ສຽດ.**
- ເວົ້າເພື່ອຈະໂກງທ່ານ ຮຽກວ່າ : **ຫຼອກລວງ**.
- ເວົ້າເພື່ອຈະແກ້ງຍົກຍ້ອງ ຮຽກວ່າ : **ຍໍ**
- ເວົ້າໄວ້ແລ້ວບໍ່ຮັບ ຮຽກວ່າ : **ກັບຄຳ**

(2) ກິລິຍາທີ່ຫຼີກລຽງຄວາມຊື່ສັດ ຄືວ່າຈະເວົ້າຕາມຈິງ ແຕ່ໃຈບໍ່ຕັ້ງຈິງຕາມນັ້ນ **(ທົນສາບານ)** ເຊັ່ນ: ເປັນພະຍານທົນສາບານໄວ້ ແລ້ວເບີກຄວາມບໍ່ຈິງ ເປັນຕົ້ນ.

(3) ກິລິຍາທີ່ອວດອ້າງຄວາມສັກສິດອັນບໍ່ມີຈິງໃນຕົນ (ກະທຳເລັກກະເທ) ເຊັ່ນ: ອວດຮູ້ວິຊາຄົງກະພັນ ຟັນບໍ່ເຂົ້າ ຍິງບໍ່ອອກ ເປັນຕົ້ນເຊິ່ງເປັນອຸບາຍຫາລາບໃສ່ຕົນ.

(4) ກິລິຍາທີ່ສະແດງໃຫ້ເຂົາເຫັນຜິດຈາກຄວາມເປັນຈິງ ຫຼືຫຼອກລວງໃຫ້ເຂົ້າໃຈຜິດ (ມານຍາ) ເຊັ່ນ: ເປັນຄົນຜິດສິນກໍເຮັດທ່າທາງໃຫ້ເຂົາເຫັນວ່າມີສິນ ເຈັບນ້ອຍກໍຮ້ອງຄາງຄວນຫຼາຍ ເປັນຕົ້ນ.

(5) ເວົ້າມຸສາຫຼົບສຳນວນ (ກະທຳເລດ) ເຊັ່ນ: ເຫັນຄົນແລ່ນໜີຄວາມຜິດເຂົາມາເມື່ອຜູ້ໄລ່ມາຖາມ ບໍ່ຢາກໃຫ້ເຂົາຈັບຄົນນັ້ນໄດ້ ແຕ່ບໍ່ຕ້ອງການໃຫ້ໃຜປະນາມວ່າເປັນຄົນມຸສາ ຈຶ່ງຍ້າຍໄປຢູ່ບ່ອນອື່ນ ແລ້ວເວົ້າວ່າ: ຕັ້ງແຕ່ມາຢືນຢູ່ບ່ອນນີ້ຍັງບໍ່ເຄີຍເຫັນຜູ້ໃດແລ່ນມາເລີຍ.

(6) ເວົ້າມຸສາ ອາໃສຄວາມເດີມ ແຕ່ເວົ້າເພີ່ມຄວາມໃຫ້ມີຫຼາຍກວ່າທີ່ເປັນຈິງ (ເສີມຄວາມ) ເຊັ່ນ: ພັນລະນາສັບພະຄຸນຂອງຢາປົວພະຍາດ, ນຳເອົາຄວາມໄປສັບສໍ່ໂດຍໃສ່ຄວາມເພີ່ມເສີມແຕ່ງ ແປງຄວາມຂອງຜູ້ໜຶ່ງ ໃຫ້ຜູ້ໜຶ່ງຟັງອີກ.

(7) ເວົ້າມຸສາ ອາໃສມູນເດີມ ແຕ່ຕັດຄວາມທີ່ບໍ່ປະສົງຈະໃຫ້ຮູ້ອອກເສຍ (ອຳຄວາມ) ເຊັ່ນ: ເລື່ອງ ຫຼາຍເວົ້າໃຫ້ເຫຼືອໜ້ອຍ ປິດຄວາມບົກພ່ອງຂອງຕົນ ເປັນຕົ້ນ.

## 3.2. ອະນຸໂລມມຸສາ.

ເລື່ອງເວົ້ານັ້ນບໍ່ຈິງ ແຕ່ຜູ້ເວົ້າບໍ່ໄດ້ມຸ່ງຫວັງຈະໃຫ້ຜູ້ຟັງຫຼົງເຊື່ອ ແຍກປະເພດໄດ້ 2 ຢ່າງ ຄື:

(1) ກິລິຍາທີ່ວ່າ ໃຫ້ຜູ້ອື່ນໄດ້ຮັບຄວາມເຈັບໃຈ ອ້າງເລື່ອງທີ່ບໍ່ເປັນຈິງ ກ່າວຍົກໃຫ້ສູງກວ່າ ພື້ນເພເດີມ (ສຽດແທງ).

(2) ເວົ້າຕິວະດ້ວຍຄວາມຄຶກຄະນອງວາຈາ (ສັບປັບ).

## 3.3. ປະຕິດສະວະ.

ເບື້ອງຕົ້ນຮັບປາກນຳຄົນອື່ນດ້ວຍເຈຕະນາບໍລິສຸດ ແຕ່ພາຍຫຼັງກັບໃຈບໍ່ເຮັດຕາມທີ່ຮັບປາກນັ້ນ ເຖິງແມ່ນບໍ່ເປັນການເວົ້າຕົວະໂດຍກົງ ແຕ່ກໍເປັນການທຳລາຍປະໂຫຍດຂອງຄົນອື່ນໄດ້ມີ 3 ປະເພດ ຄື:

(1) ສອງຝ່າຍທຳສັນຍາກັນວ່າຈະເຮັດຢ່າງນັ້ນໆ ແຕ່ພາຍຫຼັງບໍ່ເຮັດຕາມທີ່ສັນຍາກັນໄວ້ (ຜິດສັນຍາ) ເຊັ່ນ: ເຮັດສັນຍາຈ້າງ ສັນຍາຊື້ຂາຍ ເປັນຕົ້ນ.

(2) ໃຫ້ຄຳໝັ້ນສັນຍາແກ່ທ່ານຝ່າຍດຽວວ່າ ຕົນຈະເຮັດຫຼືບໍ່ເຮັດຢ່າງນັ້ນ ແຕ່ພາຍຫຼັງບໍ່ເຮັດ ຕາມທີ່ສັນຍານັ້ນ (ບໍ່ມີສັດຈະ) ເຊັ່ນ: ລູກໄດ້ໃຫ້ຄຳສັນຍາກັບພໍ່ແມ່ວ່າຈະບໍ່ເຮັດຜິດໃນສິ່ງນັ້ນອີກ ແຕ່ກໍກັບໄປເຮັດຜິດອີກ ນັກຮຽນໃຫ້ຄຳປະຕິຍານກັບຄູ-ອາຈານວ່າ ຈະບໍ່ໜີໂຮງຮຽນໃນເວລາຮຽນ ແຕ່ກໍເຮັດບໍ່ໄດ້ຕາມທີ່ສັນຍາໄວ້ ລັດຖະກອນເຂົ້າສາບານຮັບຕຳແໜ່ງວ່າຈະຊື່ສັດຕໍ່ປະຊາຊົນ ຕໍ່ສຳນັກງານອົງການ ຕໍ່ປະເທດຊາດບ້ານເມືອງ ແຕ່ຫາກເຮັດທຸດຈະລິດ ເປັນຕົ້ນ.

(3) ຮັບປາກວ່າຈະເຮັດສິ່ງນັ້ນໆ ແລ້ວພາຍຫຼັງບໍ່ເຮັດຕາມທີ່ຮັບປາກ (ຕືນຄຳ) ເຊັ່ນ: ຮັບວ່າຈະໃຫ້ສິ່ງນັ້ນໆ ແລ້ວບໍ່ໃຫ້ຕາມທີ່ບອກໄວ້ເປັນຕົ້ນ.

## 4. <u>ໂທດປະການຕ່າງໆ ໃນການເຮັດຜິດສິນຂໍ້ນີ້</u>

### 4.1. ໂທດຂອງມຸສາວາດ

ບຸກຄົນເວົ້າມຸສາ ມີໂທດທັງທາງໂລກ ແລະທາງທັມ ທາງໂລກປັບໂທດ ທາງກົດໝາຍທີ່ທັກປະໂຫຍດຂອງຜູ້ອື່ນ ທາງທັມປັບໂທດຢ່າງໜັກເຖິງຂັ້ນປາຣາຊິກ ຢ່າງເບົາປັບສະເໝີ ອາບັດປາຈິດຕິ ກ່າວໂດຍຄວາມເປັນກັມ ມີໂທດໜັກເປັນຂັ້ນໂດຍວັດຖຸ ເຈຕະນາ ປະເພດ.

(1) **ໂດຍວັດຖຸ** ຖ້າຂໍ້ຄວາມນັ້ນເປັນການທັກລ້າງປະໂຫຍດ ເຊັ່ນ: ທັນສາບານ ເບີກພະຍານປອມ, ກ່າວໃສ່ຄວາມທ່ານ, ຫຼອກລວງເອົາຊັບຂອງທ່ານ ມີໂທດໜັກ ຫຼືກ່າວມຸສາແກ່ຜູ້ມີຄຸນ ເຊັ່ນ: ພໍ່, ແມ່, ຄູ, ອາຈານ, ເຈົ້ານາຍ ແລະທ່ານຜູ້ມີສິນທັມ ມີໂທດໜັກ.

(2) **ໂດຍເຈຕະນາ** ຖ້າຜູ້ເວົ້າຄິດໃຫ້ຮ້າຍແກ່ທ່ານ ເຊັ່ນ: ກ່າວໃສ່ຄວາມແກ່ທ່ານຜູ້ບໍລິສຸດ ມີໂທດໜັກ.

(3) **ໂດຍປະເພດ**. ຖ້າຜູ້ເວົ້າພະຍາຍາມເຮັດໃຫ້ເຂົາເຊື່ອສຳເລັດໄດ້ ມີໂທດໜັກ.

### 4.2. ໂທດຂອງອະນຸໂລມມຸສາ

ມີໂທດທັງທາງໂລກ ແລະທາງທັມ ທາງໂລກຈັດວ່າເປັນກິລິຍາທີ່ຫຍາບຊ້າສາມານ ບໍ່ສົມຄວນປະພຶດ ທາງທັມຈັດວ່າເປັນບາບ ເມື່ອກ່າວໂດຍຄວາມເປັນກັມ ມີໂທດໜັກເປັນຂັ້ນກັນ ໂດຍວັດຖຸ ເຈຕະນາ, ປະເພດ.

(1) **ໂດຍວັດຖຸ** ຖ້າເປັນຂໍ້ຄວາມເປັນເລື່ອງປະທຸດສະຮ້າຍທ່ານ ເຊັ່ນ: ເວົ້າສຽດແທງ ມີໂທດໜັກ ແລະກ່າວຮ້າຍແກ່ທ່ານຜູ້ມີຄຸນມີໂທດໜັກ.

(2) **ໂດຍເຈຕະນາ** ຖ້າເວົ້າໃສ່ຮ້າຍ ຫຼືກ່າວສຽດແທງຜູ້ອື່ນ ຫວັງຈະໃຫ້ທ່ານເຈັບໃຈ ມີໂທດໜັກ.

(3) **ໂດຍປະເພດ** ຖ້າຜູ້ເວົ້າພະຍາຍາມເຮັດຄວາມເສຍຫາຍແກ່ທ່ານສຳເລັດໄດ້ ເຊັ່ນ: ຍຸໃຫ້ທ່ານແຕກກັນ ແລະເຂົາກໍແຕກກັນແທ້ ມີໂທດໜັກ.

### 4.3. ໂທດຂອງປະຕິດສະວະ

ເຮັດໃຫ້ເສຍຊື່ສຽງຕາມຖານ ທີ່ບໍ່ຕັ້ງຢູ່ໃນສັດຈະວາຈາ.

**ຖ້ອຍຄຳທີ່ບໍ່ເປັນມຸສາ:** ມີຄຳເວົ້າອີກປະເພດໜຶ່ງ ທີ່ຜູ້ເວົ້າເວົ້າບໍ່ຈິງ ແຕ່ກໍບໍ່ປະສົງໃຫ້ຜູ້ຟັງເຊື່ອຮຽກວ່າ: <u>ຍະຖາສັນຍາ</u> ຄືເວົ້າຕາມຄວາມສຳຄັນ ຜູ້ເວົ້າບໍ່ຜິດສິນ ແຍກປະເພດເປັນ 4 ຢ່າງ ຄື: ໂວຫານ, ນິຍາຍ, ພັ້ງເຜີ, ສຳຄັນຜິດ.

(1) **ໂວຫານ** ໄດ້ແກ່ ຖ້ອຍຄຳທີ່ໃຊ້ເປັນທຳນຽມ ເພື່ອຄວາມມ່ວນອ້ອນຊ້ອຍທາງພາສາ ເຊັ່ນ: ເຮົາຂຽນຈົດໝາຍລົງທ້າຍດ້ວຍຄວາມນັບຖືຢ່າງສູງ ທັງທີ່ເຮົາບໍ່ໄດ້ນັບຖືເຂົາເລີຍ.

(2) **ນິຍາຍ** ໄດ້ແກ່ ເລື່ອງປຽບທຽບ ເພື່ອໄດ້ໃຈຄວາມເປັນສຸພາສິດ ໂດຍການຜູກຮ້ອຍນິຍາຍຂຶ້ນມາ ເຊັ່ນ: ໝໍລຳເລື່ອງ ລະຄອນເວທີ, ລະຄອນອື່ນໆ.

(3) **ພັ້ງເຜີ (ຫຼົງປາກ)** ໄດ້ແກ່ ຜູ້ເວົ້າຕັ້ງໃຈວ່າຈະເວົ້າຢ່າງໜຶ່ງ ແຕ່ປາກຫຼົງໄຫຼໄປເວົ້າອີກຢ່າງໜຶ່ງ.

(4) **ສຳຄັນຜິດ** ໄດ້ແກ່ ຜູ້ເວົ້າເຂົ້າໃຈຜິດ ເວົ້າໄປຕາມຄວາມເຂົ້າໃຈຂອງຕົນເອງ ເຊັ່ນ: ຈື່ວັນຜິດ ຖ້າຜູ້ໃດຖາມກໍຕອບຕາມທີ່ຮູ້ ແລະເຂົ້າໃຈ.

## 5. <u>ຫຼັກວິນິໃສມຸສາວາດ:</u>

ມຸສາວາດ ມີອົງ 4 ດັ່ງນີ້.........

5.1. ເລື່ອງທີ່ເວົ້າເປັນເລື່ອງບໍ່ຈິງ (ອະພູຕະວັດຖຸ).

5.2. ຈິງໃຈຈະເວົ້າໃຫ້ຜິດ (ວິວາທະນະຈິດຕັງ).

5.3. ພະຍາຍາມເວົ້າຄຳນັ້ນອອກໄປ (ຕັດໂຊ ວາຍາໂມ).

5.4. ຄົນອື່ນເຂົ້າໃຈເນື້ອຄວາມນັ້ນ (ປະຣັດສະ ຕະທັດຖະວິຊານັງ).

### ກາບ: "ມຸສາວາດ"

ເຮົາເປັນຄົນ ເວົ້າແຕ່ຄວາມຈິງ
ບໍ່ຄືລີງ ຕົວະໝາໃຫ້ເຊື່ອ
ໃຜກໍເບື່ອ ຄົນຫຼອກຄົນລວງ
ເຮົາທັງປວງ ຮັກກັນຍ້ອນເວົ້າ
ຂ້ອຍກັບເຈົ້າ ສັດຊື່ຕໍ່ກັນ
ສ້າງສຳພັນ ໃຫ້ເກີດປະໂຫຍດ
ບໍ່ສ້າງໂທດ ເວົ້າແຕ່ຄວາມດີ
ສາມັກຄີ ເກື້ອກູນເຊື້ອຊາດ
ມຸສາວາດ(ສິນ) ຮັກສາຊຸມຊົນ
ໝົດທຸກຄົນ ຖືສິນຖ້ວນໜ້າ
ບໍ່ເວົ້າກ້າ ເວົ້າແຕ່ຄວາມຫວານ
ໃຫ້ລູກຫຼານ ຮຽນເອົາຢ່າຄ້ານ
ເຕືອນຊາວບ້ານ ບໍ່ໃຫ້ມຸສາ
ເຮົາເກີດມາ ເປັນຄົນຍຸກໃໝ່
ເອົາໃຈໃສ່ <u>**ສັດຈະວາຈາ**</u>
ສ້າງສັດທາ ກັບຄົນໃຫ້ໄດ້
ໄກຫຼືໃກ້ ຟັງເຈົ້າຜູ້ດຽວ ແທ້ແລ້ວ.ຯ.

(ສ.ດາວທຽມນ້ອຍ).

## ເພງ: " ຢາກຂໍເປັນແຟນ "

- ຢາກຂໍເປັນແຟນ ເປັນຄູ່ຫອງແທນດວງໃຈ
ຢາກຂໍເປັນຄູ່ຄຽງກາຍ ປອບໃຈເມື່ອຍາມນ້ອງເຫງົາ
ຍາມນ້ອງໝົ່ນໝອງ ຈະຮ້ອງເພງຊ່ວຍແບ່ງເບົາ
ໃຫ້ນ້ອງໄດ້ຫາຍໂສກເສົ້າ ຄ່ຳເຊົ້າຍັງຄອຍເອົາໃຈ
- ຫາກສາວສົນໃຈ ຈົ່ງຍິ້ມມາໄວເຖີດຂວັນຕາ
ຈະຢູ່ເມືອງຫຼວງຫຼືບ້ານປ່າ ກໍປາດຖະໜາໝັ້ນໝາຍ
ຂໍພຽງແຕ່ສາວ ຮັກເຮົາດ້ວຍຄວາມຈິງໃຈ
**<u>ສັດຈະອາຈາຕັ້ງໄວ້</u>** ຝາກໃຈໃຫ້ອ້າຍເປັນແຟນ
- ຄົນໃສ່ເສື້ອລາຍ ງາມຫຼາຍອ້າຍຫຼົງຮັກເຈົ້າ
ຄົນໃສ່ເສື້ອຂາວ ນ້ອງສາວມີບໍ່ນໍ້ແຟນ
ຫາກບໍ່ມີອ້າຍ ຂໍມາລົ້ງແກ່ນ
ຖ້າເວົ້າແປນໆ ຢາກຂໍເປັນແຟນນວນນາງ
- ຈະຂໍບູຊາ ຫາກໄດ້ນ້ອງມາເປັນແຟນ
ຈະຂໍຮັກດຽວ ໝັ້ນແກ່ນຫາກແຟນ ນັ້ນໃຫ້ຄວາມຫວັງ
ເຫັນໃຈເຖີດສາວ ຢ່າຟ້າວແບ່ງ ໃຈໄປຫລາຍທາງ
ຮັກດຽວແຕ່ອ້າຍ ເດີນາງ! ຈະຮັກນາງຈົນສິ້ນລົມຕາຍ! .ຯ

(ໂດຍ.ໄຊພອນ)

## ນິທານ: " ເດັກນ້ອຍຂີ້ຕົວະ! "

ຕັ້ງແຕ່ກີ້ແຕ່ກ່ອນ ຍັງມີເດັກນ້ອຍຢູ່ບ້ານ ໂພນຂີ້ກີ້ງ ແຕ່ລະມື້ພວກເຂົາຈະໄລ່ສັດລ້ຽງຄືແບ້ຂອງພວກເຂົາ ໄປລ້ຽງທີ່ໂຄກ ປ່າໄມ້ຈິກ-ໄມ້ຮັງ ໂຄກບ່ອນນັ້ນເຄີຍມີເສືອມາລັກກິນສັດລ້ຽງ ແຕ່ດົນໆຈຶ່ງໄດ້ຍິນຂ່າວເທື່ອໜຶ່ງ ເທື່ອນີ້ເດັກນ້ອຍບໍ່ມີເສືອມາກິນແບ້ ແຕ່ພວກເຂົາຄຶດມ່ວນໃນໃຈ ຈຶ່ງພາກັນຂຶ້ນຕົ້ນໄມ້ ແລະຮ້ອງວ່າ:

" ຊ່ວຍແດ່ !ເສືອມາກິນແບ້ ! " ເຂົາຮ້ອງຫຼາຍໆ ເທື່ອ ເມື່ອຜູ້ໃຫຍ່ໄດ້ຍິນກໍຈັບເອົາປືນເອົາຫອກພາກັນແລ່ນໄປຫາພວກເດັກນ້ອຍທັນທີ ແຕ່ບໍ່ເຫັນມີເສືອຈັກໂຕ ເດັກນ້ອຍພາກັນຫົວຂວັນວ່າ: " ແຮ່ໆ! ຜູ້ໃຫຍ່ຖືກຕົວະ! ແລ່ນຕາຕີ່ຕາລານມາ! ແຮ່ໆໆ ".

ຕອນຄ້າຍແລງມາມື້ນັ້ນ ມີເສືອຝູງໜຶ່ງຫິວອາຫານ ພວກມັນລົງມາແຕ່ພູ ມາໄລ່ກິນແບ້ ພວກເດັກນ້ອຍຮ້ອງຫາຜູ້ໃຫຍ່ໃຫ້ມາຊ່ອຍ " ຊ່ອຍແດ່ !ເສືອມາກິນແບ້! " ຜູ້ໃຫຍ່ຢູ່ບ້ານໂພນຂີ້ກໍ່ງບໍ່ສົນໃຈ ແລະເວົ້າວ່າ:

" ເດັກນ້ອຍຂີ້ຕົວະ! ຢ່າໄປເຊື່ອເຂົາ! " ໃນທີ່ສຸດເດັກນ້ອຍກໍເສຍແບ້ໄປຕັ້ງຫຼາຍໂຕ ຍ້ອນເສືອກິນ.(ຈົບ)

- **ນິທານ**ເລື່ອງນີ້ ສອນໃຫ້ຮູ້ວ່າ: ຄົນຂີ້ຕົວະ ບໍ່ມີໃຜນັບຖືທັງເດັກນ້ອຍ ແລະຜູ້ໃຫຍ່.

## ເກມ: " ມຸສາວາດ "

ຄູແນະນຳນັກຮຽນຈັບຄູ່ (ເກມນີ້ສອງຄົນຫຼິ້ນ) ໃຫ້ຜູ້ໜຶ່ງຂວ້ຳມືລົງກວມເອົານ້ຳສີທີ່ຢອດລົງໃສ່ເຈ້ຍ ເອົາມືກວມໄວ້ໂດຍບໍ່ໃຫ້ອົ້ງມືແຕະກັບນ້ຳສີທີ່ຢູ່ໃນເຈ້ຍນັ້ນ ຜູ້ທີ່ສອງຕົບຫລັງມືຜູ້ທີ່ໜຶ່ງ ແຕ່ຜູ້ທີ່ໜຶ່ງຕ້ອງຖອດມືອອກໃຫ້ທັນ ຜູ້ທີ່ສອງກໍໂຈ໊ະມືໄວ້ບໍ່ຕົບ ແຕ່ຖ້າໂຈ໊ະບໍ່ທັນກໍຕົບເອົານ້ຳສີ ແຕ່ຖ້າເອົາມືອອກບໍ່ທັນມືກໍແຝ່ບໃສ່ນ້ຳສີຄືກັນ ໃຫ້ຜັດປ່ຽນກັນຕົບຫຼັງມືຜູ້ລະ 5 ເທື່ອ. (ຈົບ)

**ຄູອະທິບາຍວ່າ**: ເກມນີ້ແມ່ນລັກສະນະມຸສາວາດໃນການປະພຶດ ຄືຜູ້ເອົາມືກວມນ້ຳສີຖອດມືອອກກໍເພາະຕ້ອງການໃຫ້ຜູ້ຕົບໆ ນ້ຳສີເອງໂດຍບໍ່ຖືກຝາມືຕົນ ແຕ່ຜູ້ຕົບກໍຫວັງໃຫ້ມື ຜູ້ກວມນ້ຳສີແຝ່ບລົງຖືກສີທີ່ກວມໄວ້ນັ້ນ ໂດຍເຈຕະນາແຕ່ລະຝ່າຍຫວັງໃຫ້ຝ່າຍໜຶ່ງເສຍຫາຍ ຯ.

## ກິດຈະກຳ

ຄູແບ່ງນັກຮຽນໃຫ້ເປັນ 4 ກຸ່ມ ແຕ່ລະກຸ່ມໃຫ້ຜູ້ຕາງໜ້າຈົກສະຫຼາກເອົາຄຳຖາມເພື່ອຄົ້ນຄວ້າ ແມ່ນກຸ່ມໃດຈະມີຄຳຕອບຫຼາຍ ແລະຖືກຕ້ອງ. ຄຳຖາມຄົ້ນຄວ້າມີດັ່ງນີ້:

1) **ເວົ້າສໍ່ສຽດ** : ແມ່ນເວົ້າແນວໃດ? ໃຫ້ຍົກຕົວຢ່າງ
2) **ເວົ້າຫຼອກ** : ແມ່ນເວົ້າແນວໃດ? ----//-------
3) **ເວົ້າຍົກຍໍ** : ແມ່ນເວົ້າແນວໃດ?------//-------
4) **ເວົ້າປີ້ນຄວາມ(ກັບຄຳ)**: ແມ່ນເວົ້າແນວໃດ? ໃຫ້ຍົກຕົວຢ່າງ.

ໃຫ້ເວລາຄົ້ນຄວ້າ 15 ນາທີ ແລະຂຶ້ນສະເໜີກຸ່ມລະ 2 ນາທີ.

**ຄູສາຫຼຸບວ່າ**: ທັງໝົດມີເຈຕະນາເວົ້າບໍ່ດີ ເພື່ອໃຫ້ຜູ້ອື່ນເສຍຫາຍ ເປັນການບໍ່ເຄົາລົບເຊິ່ງກັນ ແລະກັນ. ເປັນບາບອະກຸສົນ ໃນທີ່ສຸດບໍ່ມີໃຜນັບຖືຍ້ອນຜິດສິນຂໍ້ **ມຸສາ** ບໍ່ໃຫ້ເວົ້າຕົວະ.ຯ

*( ເໝາະສຳລັບ ປໍ 4-5 )*

# ເບນຈະສິນ ສິກຂາບົດທີ 5:

**ສຸຣາເມຣະຍະມັດຊະປະມາທັດຖານາ ເວຣະມະນີ ສິກຂາປະທັງ ສະມາທິຍາມິ.**

**= ຂ້າພະເຈົ້າ ຂໍຮັບເອົາສິນ ຄືເວັ້ນຈາກ ການເສບຂອງມຶນເມົາ ດື່ມເຫຼົ້າ ແລະເມໄຣ ອັນເປັນທີ່ຕັ້ງແຫ່ງຄວາມປະໝາດ.**

## 1. <u>ສາລະສຳຄັນ</u>

ການບັນຍັດສິນຂໍ້ນີ້ ເພື່ອໃຫ້ຄົນຮູ້ຈັກຮັກສາສະຕິຂອງຕົນໃຫ້ບໍລິບູນ ເພາະເຫຼົ້າ ຫຼືສິ່ງເສບຕິດທີ່ເຮັດໃຫ້ຜູ້ດື່ມ ຫຼືຜູ້ເສບເກີດຄວາມມຶນເມົາ ແລ້ວຍ່ອມເຮັດໃຫ້ເສຍສະຕິ ເປັນທີ່ຕັ້ງແຫ່ງຄວາມປະໝາດ ທັງເປັນເຫດບັ່ນທອນສຸຂະພາບ ແລະຄຸນຄວາມດີທີ່ມີຢູ່ໃຫ້ໜ້ອຍລົງ.

ເມື່ອເສບຫຼືດື່ມເຂົ້າໄປແລ້ວ ເຮັດໃຫ້ສະຕິເລື່ອນລອຍ ເຮັດອັນໃດກໍຜິດພາດ ຂາດການຄວບຄຸມຕົວເອງ ກ້າເຮັດໃນສິ່ງບໍ່ເຄີຍເຮັດ ກ້າເວົ້າໃນສິ່ງທີ່ບໍ່ເຄີຍເວົ້າ ພ້ອມທັງເປັນເຫດໃຫ້ຜິດສິນອີກ 4 ຂໍ້ຂ້າງຕົ້ນ **ສິນຂໍ້ 5 ນີ້ ນັບວ່າມີຄວາມສຳຄັນທີ່ສຸດໃນເບນຈະສິນ.**

## 2. <u>ຊະນິດຂອງສິ່ງເສບຕິດ ແລະຂອງມຶນເມົາອັນຄວນເວັ້ນ</u>

**2.1. ນ້ຳເມົາ** ມີ 2 ຊະນິດ ຄື:

(1) ສຸຣາ ນ້ຳເມົາທີ່ກັ່ນແລ້ວ ພາສາລາວ ຮຽກວ່າ: ເຫຼົ້າ.

(2) ເມໄຣ ນ້ຳເມົາທີ່ບໍ່ໄດ້ກັ່ນ ເປັນຂອງໝັກດອງເພື່ອເອົານ້ຳ ເຊັ່ນ: ນ້ຳຕານເມົາ, ເຫຼົ້າດິບ ຫຼືເຫຼົ້າສາໂທ, ເຫຼົ້າອາງຸ່ນ (ເຫຼົ້າແວງ) ແລະອື່ນໆ.

# ນອກຈາກນີ້ ຍັງມີຂອງມຶນເມົາເສບຕິດຕ່າງໆ ທີ່ເປັນສິ່ງເສບຕິດນອກຈາກເຄື່ອງດື່ມທີ່ມຶນເມົາຕ່າງໆ ເຊັ່ນ: ຝິ່ນ, ຊາສູບ, ເຮໂຣອິນ ເປັນຕົ້ນ.

## 2.2. ຊະນິດຂອງສິ່ງເສບຕິດທີ່ໃຫ້ໂທດຮ້າຍແຮງ:

ໃນປັດຈຸບັນນີ້ ມີສິ່ງເສບຕິດໃຫ້ໂທດຮ້າຍແຮງ ກຳລັງລະບາດຢູ່ໃນໝູ່ ຂອງປະຊາຊົນ ເທົ່າທີ່ທາງຣັດຖະການໄດ້ພົບແລ້ວ ຄື:

(1) ສຸຣາ ນ້ຳເມົາທີ່ກັ່ນແລ້ວ.

(2) ເມໄຣ ນ້ຳເມົາທີ່ຍັງບໍ່ໄດ້ກັ່ນ.

(3) ຝິ່ນ ເປັນຢາງໄມ້ຊະ ນິດໜຶ່ງ (ຕົ້ນຝິ່ນ).

(4) ຊາສູບ ເປັນຕົ້ນໄມ້ຊະນິດໜຶ່ງ (ຕົ້ນຊາ).

(5) ມໍຟີນ ເປັນຜະລິດຕະພັນເຮັດ ຈາກຝິ່ນ.

(6) ເຮໂຣອິນ ເປັນຜະລິດຕະພັນຈາກມໍຟີນ.

(7) ໂຄເຄນ ເປັນຜະລິດຕະພັນຈາກມໍຟີນ.

(8) ແລັກເກີ, ທິນເນີ ເຮັດຈາກສານເຄມີ.

(9) ຢາບ້າ (ຢາມ້າ) ເປັນຜົນຜະລິດຈາກສານເສບຕິດ ຫຼາຍຢ່າງ.

(10) ກາວຈອດຢາງລົດ ເຮັດຈາກສານເຄມີ.

## 2.3. ຜູ້ຜິດສິນ ມີວິທີການເສບຂອງມຶນເມົາຊະນິດຕ່າງໆ ຄື:

(1) ສຸຣາ, ເມໄຣ ເສບທາງການດື່ມ.

(2) ມໍຟີນ, ເຮໂຣອິນ, ຢາບ້າ ເສບໂດຍວິທີສູບ ແລະສີດເຂົ້າໄປໃນຮ່າງກາຍ.

(3) ຝິ່ນ ເສບໂດຍວິທີສູບ ແລະກິນ.

(4) ໂຄເຄນ, ຢາອີ ເສບໂດຍວິທີໃສ່ໃນເຄື່ອງດື່ມ ໂດຍສ່ວນໃຫຍ່.

(5) ຊາສູບ ເສບໂດຍວິທີສູບບັ້ງ (ບັ້ງສູບຊາ) ເໝືອນຢາສູບ ຫຼືໃສ່ກອກສູບ.

(6) ແລັກເກີ, ທິນເນີ, ກາວ ເສບໂດຍວິທີສູດດົມເຂົ້າທາງດັງ.

# 3. <u>ໂທດຂອງການເສບສິ່ງເສບຕິດ</u>

## 3.1. ໂທດຂອງການດື່ມນ້ຳເມົາ.

ໃນພຣະບາລີ ທ່ານສະແດງໂທດຂອງການດື່ມນ້ຳເມົາໄວ້ 6 ຢ່າງ ຄື:

(1) ເປັນເຫດໃຫ້ເສຍຊັບ.

(2) ເປັນເຫດກໍ່ວິວາດຜິດຖຽງກັນ.

(3) ເປັນເຫດໃຫ້ ເກີດໂຣກໄພໄຂ້ເຈັບ.

(4) ເປັນເຫດໃຫ້ເສຍຊື່ສຽງ.

(5) ເປັນເຫດປະພຶດມາລະຍາດທີ່ໜ້າລັງກຽດ.

(6) ເປັນເຫດບັນທອນກຳລັງປັນຍາ.

## 3.2. ໂທດຂອງການເສບຝິ່ນ.

ການເສບຝິ່ນນັ້ນ ມີໂທດຫຼາຍ ເມື່ອກ່າວແລ້ວແບ່ງອອກ ເປັນ 4 ສະຖານ:

(1) ເປັນເຫດໃຫ້ເສຍຄວາມສຸກຂອງຮ່າງກາຍ.

(2) ເປັນເຫດກໍ່ວິວາດໃຫ້ເສຍຊັບ.

(3) ເປັນເຫດໃຫ້ເສຍຄວາມດີ.

(4) ເປັນເຫດໃຫ້ເສຍຊື່ສຽງ.

## 3.3. ໂທດຂອງການເສບຊາສູບ.

ຊາສູບ ເປັນສິ່ງເສບຕິດໃຫ້ໂທດເໝືອນກັນ ເພາະຊາ ຍ່ອມເຮັດໃຫ້ມັນສະໝອງ (ມັດຖຸລິງ) ແລະ ເສັ້ນປະສາດໃຫ້ເສຍໄປ <u>ຕາລາຍ</u> ເຫັນອັນໃດກໍ່ຜິດໄປຈາກຄວາມເປັນຈິງ ເຊັ່ນ: ເຫັນເຊືອກເປັນງູ <u>ຫູກາຍ</u> ຟັງອັນໃດກໍ່ຜິດໄປຈາກຄວາມ ຈິງ ເຊັ່ນ: ໄດ້ຍິນສຽງກອງເປັນສຽງປືນ ຫຼືສຽງຟ້າຮ້ອງ ນິກຈະເຮັດອັນໃດກໍ່ຢັບຢັ້ງບໍ່ໄດ້ ຄວາມຄິດຟັ່ນເຟືອນ ມັກເຮັດໃຫ້ຢ້ານກົວໄປຕ່າງໆ ນາໆ ເໝືອນຄົນບ້າ.

### 3.4. ໂທດຂອງການເສບຕິດຕ່າງໆ.

(1) ຢາບ້າ ເຮັດໃຫ້ປະສາດຫຼອນ ບໍ່ຮູ້ສຶກຕົວ ເກີດຄວາມຫວາດລະແວງ ຈິດໃຈວອກແວກ.

(2) ໂຄເຄນ, ມໍຟີນ, ຢາອີ ເຮັດໃຫ້ອາລົມເຄັ່ງຕຶງ ເປັນເຫດໃຫ້ເສຍສະຕິ ອາດເຮັດໃຫ້ສູນເສຍປະເວນີໃນຊົ່ວຂະນະອາລົມ.

(3) ແລັກເກີ, ທິນເນີ, ກາວ ເຮັດໃຫ້ມັນສະໝອງຝໍ່, ຄວາມຈຳເຊື່ອມ, ສາຍຕາຟາງ, ທຳລາຍລະບົບທາງເດີນຫາຍໃຈ.

## 4. <u>ຫຼັກວິນິໃສສຸຣາປານະ.</u>

**ການດື່ມເຫຼົ້າ ມີອົງ 4 ຄື:**

4.1. ນ້ຳເມົາ (ມະຫະນີຍັງ).

4.2. ຈິດຄິດຈະດື່ມນ້ຳເມົາ (ປາຕຸກັມມະຍະຕາຈິດຕັງ).

4.3. ພະຍາຍາມດື່ມນ້ຳເມົາ (ຕັດໂຊ ວາຍາໂມ).

4.4. ນ້ຳເມົານັ້ນລ່ວງລ້ຳຄໍລົງ (ປີຕັບປະເວສະນັງ).

## ກອນອ່ານ: " ສຸຣາພາເຊ ".

ຍາມເມື່ອຍົກຍ່າງຍ້າຍ ກວັດແກວ່ງໄປມາ
ແຂນຂາທັງຕີນມື ກໍຄ່ອງຄືຄົນແທ້
ແຕ່ວ່າສຸລາເຂົ້າ ຄົນເຮົາພັດເປັນຕ່າງ
ເບິ່ງຄືຍ່າງບໍ່ໝັ້ນ ເຊຊ້າຍພ່ອງຂວາ

ຍາມເມື່ອວາຈາຕ້ານ ສຽງແຮງພົ້ນລື່ນ
ເດີກດື່ນມິດອຶ້ງຕຶ້ງ ເມົາບ້າວ່າແມ່ນໂຈນ
ກາຍເປັນຄົນໂສຖິ້ມ ຊາວເມືອງເຂົາປ້ອຍດ່າ
ຮ່າບໍ່ກິນຂີ້ເຫຼົ້າ ຜີເປົ້າບໍ່ຢາກເອົາ ແດ່ບໍ່ ?

ກຽດສັກສີຂອງເຈົ້າ ຍາມເມົາລົດຕ່ຳ ລົງແລ້ວ
ຄົນບໍ່ຢຳຢ່ອນຢ້ານ ໝາບ້ານພັດເຫົ່າຫອນ
ມັນຢາກສອນຄົນໃຫ້ ເຊົາກິນສາ ໝາຊິຮາກ
ຄັນວ່າຢາກແຕ່ເຫຼົ້າ ໝາຊິເວົ້າແທນຄົນ ນັ້ນແລ້ວ

ອັນໜຶ່ງ ໃຈທີ່ເຄີຍໃສເຫຼື້ອມ ປັນຍາໄວຂາວສະອາດ
ຄວາມສະຫຼາດແຕ່ກີ້ ຫາຍສັ້ງບໍ່ຢາກມີ
ກາຍອິນຊີໝອງເສົ້າ ປັນຍາເບົາເວົ້າບໍ່ຄ່ອງ
ມັນສະໝອງຕິບຕື້ ຄືນມື້ນັບບໍ່ເປັນ ນັ້ນແລ້ວ

ເຮົາແມ່ນເດັກໜຸ່ມນ້ອຍ ຍຸກໃໝ່ສີວິໄລ
ບໍ່ເຮັດຕາມນິດໃສ (ຄົນແກ່) ຜູ້ເພິ່ນເມົາແຕ່ຄາວນັ້ນ
ເຮັດໃຫ້ເຮົາສະໝອງສັ້ນ ຕາມບໍ່ທັນຍຸກໃໝ່
ແກ້ມໃສໆ ດັ່ງພວກນ້ອງ ຢ່າກິນເຫຼົ້າຊິດ່າງດຳ ນັ້ນແລ້ວ.ຯ.

(ໂດຍ:ສ. ວົງສະຫວ່າງ )

## ກາບ: " ສຸຣາ "

ສຸຣາເຫຼົ້າ ກິນເມົາຮາກແຕກ
ຮ້ອງແກກໆ ດັ່ງກ້ອງກໍ່ກວນ
ພວກເຂົາມ່ວນ ໃນແຕ່ຝູງເມົາ
ພາກັນເອົາ ໂວຫານອ້ອຍຕ້ອຍ
ປາກບໍ່ຄ່ອຍ ດັ່ງກວ່າສຽງຄົນ
ວ່າບໍ່ຈົບ ຮັ່ງມີກວ່າໝູ່
ມັກເວົ້າຂູ່ ເຊິ່ງກັນ ແລະກັນ
ສຸດທ້າຍມັນ ຕີກັນຫົວຍະ
ບໍ່ມີພຣະ ອົງໃດໂຜດໄດ້
ເຂົາເວົ້າໃຫຍ່ ເກີນກວ່າຄຳສອນ
ອຸທາຫອນ ຍົກມາລ້າໆ
ໃນສິນຫ້າ ຂໍ້ນີ້ຜິດແຮງ
ລີ້ນກໍແຂງ ພັນກັນອຸ້ມລຸ້ມ
ຈິດບໍ່ຕູ້ມ ເຫຼືອໄວ້ແຕ່ກາຍ
ຄົນບໍ່ຕາຍ ເປັນເຜດກັບບ່ອນ
ເຫຼົ້າບັ່ນທອນ ຊີວິດວິນຍານ
ເປັນອາການ ອ່ອນເພຍເປ້ຍລ່ອຍ
ວຽກບໍ່ຄ່ອຍ ບັນຫລຸມາກຜົນ
ກາຍເປັນຄົນ ສະຕິບໍ່ທ່ຽງ

บ่ดุ่มดั่ງ ທາງໂລກທາງທັມ
ໃຫ້ຄະລຳ ບໍ່ກິນບໍ່ດື່ມ
ບໍ່ໃຫ້ຊຶມ ເຂົ້າມັນສະໝອງ
ບໍ່ທົດລອງ ເອົາເຂົ້າມາໃກ້
ເຮົາຄິດໄດ້ ເຫັນແລ້ວພ່າຍໜີ ແທ້ເນີ !ຯ

(ໂດຍ: ສ.ດາວຫຼຽມນ້ອຍ)

## ເພງ: "ບໍ່ເອົາຂີ້ເມົາ "

-ເຮົາເປັນຄົນຍຸກໃໝ່ ໃຫ້ເອົາໃຈໃສ່ຊີວິດວິນຍານ
ສຸຂະພາບເປັນສິ່ງສຳຄັນ ເຮົາມາພ້ອມກັນອອກແຮງຢ່າຄ້ານ
ອອກແຮງຕ້ານສິ່ງເສບຕິດ ທີ່ມັນເປັນພິດຊຶມເຊື້ອມານານ
ຊຶມໄປຕິດລູກຕິດຫຼານ (ໆ) ກາຍເປັນວິນຍານຂອງຄົນຂີ້ເມົາ
-ເຮົາເປັນຄົນສະຫຼາດ ເຮົາຕ້ອງສາມາດກຳຈັດຄວາມເມົາ
ຢ່າໄດ້ໄປຫຼົງລະເລີງ ໄປຕິດກອງເພີງຂອງຄົນຍຸກເກົ່າ
ກິນເຫຼົ້າໂງຫົວບໍ່ຂຶ້ນ ທັງມື້ທັງຄືນດຶກດື່ນບໍ່ເຊົາ
ກາຍເປັນຂ້າທາດຂອງເຂົາ (ໆ) ຍ້ອນປັນຍາເບົາຂີ້ເມົາທັງປີ.
-ເມົາເມົາເມົາເຮົານີ້ບໍ່ເອົາ ຂີ້ເມົາເປັນເພື່ອນ
ຈະຮັກຫຼືວ່າຈະຊັງ ບໍ່ສ້າງຄວາມຫວັງກັບຄົນມັກເມົາ
ຄົນເມົາຄືຄົນເສຍທາດ ໄຮ້ຄວາມສາມາດຂາດຄຸນນະທັມ
ບໍ່ມີໃຜຈະເຊື້ອໃຈ (ໆ) ເດີນໄປເຊໄປກາຍເປັນໂຈຣະກຳ.

( ໂດຍ:ສ.ວົງສະຫວ່າງ )

## ນິທານ: " ອຳນາດສຸຣາ "

ຕັ້ງແຕ່ກີ້ແຕ່ກ່ອນ ຍັງມີກອງທັບທະຫານຂອງພະເຈົ້າ **ເມືອງສະໂນ** ເກັ່ງກ້າສາມາດຫຼາຍຢ່າງ ທັງຕີເສິກກໍເກັ່ງ ວາງແຜນ ນຳພາເຄື່ອນທັບກໍເກັ່ງ ເຮັດໃຫ້ອຳນາດ ແລະຊື່ສຽງຂອງພະເຈົ້າເມືອງສະໂນແຜ່ໄປທົ່ວສາລະທິດ ຄວາມຊ່າລືຂອງກອງທັບເມືອງສະໂນ ເປັນທີ່ຢ້ານກົວຂອງບັນດາເມືອງເລັກເມືອງນ້ອຍ ໂດຍສະເພາະ**ເມືອງສາເກດ** ເປັນເມືອງນ້ອຍມີທະຫານບໍ່ຫຼາຍຢ້ານໄດ້ເປັນຫົວເມືອງຂຶ້ນກັບເມືອງສະໂນ ຈຶ່ງວາງຍຸດທະວິທີ ໂດຍແຕ່ງເຄື່ອງບັນນາການໄປຖວາຍພະເຈົ້າເມືອງສະໂນ ໃນເຄື່ອງບັນນາການນັ້ນມີເຫຼົ້າຊັ້ນດີ ແລະປຸກທີ່ສຸດ ເມື່ອນຳໄປຖວາຍຈຶ່ງກາບທູນວ່າ:

-<u>ພະຍາເມືອງສາເກດ</u>: " ຂໍຖວາຍບັນນາການ ແລະເຫຼົ້າຊັ້ນດີຈາກເມືອງສາເກດໃຫ້ພະອົງຈົ່ງຮັບບັນນາການດ້ວຍເຖີ້ນ ".

-<u>ພະເຈົ້າເມືອງສະໂນ</u>:" ໂອ໋ ! ບັນນາການນີ້ເຮົາຮັບໄດ້! ແຕ່ເຫຼົ້ານີ້ເຮົາຢ້ານມີຢາເບື່ອ (ຢາພິດ) ຢູ່ນຳໃດ໋! "

-<u>ພະຍາເມືອງສາເກດ</u>: " ຮັບດ້ວຍເກົ້າຂະນ້ອຍ! ເຫຼົ້ານີ້ເປັນສູດພິເສດຂອງສຳນັກເມືອງສາເກດແຕ່ບັນພະບຸລຸດ ຜະລິດຂື້ນເພື່ອໃຫ້ກອງທັບກິນແລ້ວເກັ່ງກ້າສາມາດ ເວລາອອກຮົບບໍ່ເຄີຍຢ້ານສັດຕູ ຖ້າພະອົງບໍ່ສະເທວີຍ ກໍໃຫ້ທະຫານລອງກິນເບິ່ງຂະນ້ອຍ! ".

-<u>ພະເຈົ້າເມືອງສະໂນ</u>: " ດີຄືກັນ! ເອົາໃຫ້ທະຫານກິນລອງເບິ່ງກ່ອນ! ຖ້າມີສັບພະຄຸນດີຄືເວົ້າ ຈະໃຫ້ພວກອຳມາດຮຽນເອົາສູດ ແລ້ວມາຜະລິດເອງ ເພື່ອໃຫ້ພວກກອງທັບກິນກ່ອນອອກຕີເສິກ! ".

-<u>ພະຍາເມືອງສາເກດ</u>: " ບໍ່ສະເພາະອອກຕີເສິກທໍ່ນັ້ນ ເວລາຕີເສິກຊະນະກັບມາກໍດື່ມສະຫຼອງໄຊ ມີສຸຣາແລະນາລີເຂົ້າຮ່ວມນຳກັນຍິ່ງມ່ວນຊື່ນ ພວກທະຫານມີຂວັນ ແລະກຳລັງໃຈດີຂຶ້ນ ແມ່ນແຕ່ຢູ່ໃນວັງກໍດື່ມກິນກັນຢ່າງມ່ວນຊື່ນ ປະຊາຊົນພົນລະເມືອງ ຖ້າຫາກໄດ້ດື່ມເຫຼົ້ານີ້ແລ້ວ ບໍ່ມີຄວາມທຸກໃດໆ ເກີດຂຶ້ນ! ".

-<u>ພະເຈົ້າເມືອງສະໂນ:</u> " ດີຫຼາຍ! ເອົາເຫຼົ້ານີ້ໄປໃຫ້ພວກທະຫານທີ່ຊ້ອມຮົບຢູ່ນີ້ ກິນເບິ່ງດູ໊! ຈະມີຄວາມເກັ່ງກາດບໍ່? ".

ແລ້ວພວກອຳມາດ ກໍເອົາເຫຼົ້ານັ້ນໄປໃຫ້ພວກທະຫານກິນ ຜູ້ລະຈອກສອງຈອກ ໃນການຊ້ອມຮົບມື້ນີ້ ມີສຽງດັງຟົດຟື້ນບໍ່ຈັກສຽງ ໂຮ່ຮ້ອງກ້ອງກັງວານ!..ພວກທະຫານມີຄວາມຫືກເຫີມຫຼາຍ ພະເຈົ້າເມືອງສະໂນຈຶ່ງໃຫ້ອຳມາດຮຽນເອົາສູດເຫຼົ້າຈາກເມືອງສາເກດ ມາຜະລິດໃຫ້ທະຫານ ແລະປະຊາຊົນພົນລະເມືອງຂອງຕົນເອງກິນ ການຜະລິດເຫຼົ້າຂອງອຳມາດໃນເມືອງສະໂນ ບໍ່ພໍກັບຄວາມຕ້ອງການ ຈຶ່ງໄດ້ອະນຸຍາດໃຫ້ປະຊາຊົນນຳສູດໄປຜະລິດ ແລະຂາຍໃຫ້ທົ່ວໆໄປ ຕອນທຳອິດໃຜໆ ກໍຍ້ອງຍໍວ່າເຫຼົ້ານີ້ດີມີກຳລັງໃຈຕໍ່ສູ້ຢ່າງບໍ່ອິດເມື່ອຍ....! ຫຼາຍເດືອນຫຼາຍປີຜ່ານໄປ ປະຊາຊົນພົນທະຫານບໍ່ມີຄວາມຄິດໃນການຕໍ່ສູ້ບໍ່ຜະລິດສະບຽງອາຫານ ມີແຕ່ກິນເຫຼົ້າມ່ວນຊື່ນໄປວັນໆ ສະໝອງໃນການສ້າງສາບ້ານເມືອງກໍຫຼຸດລົງ ກຳລັງກາຍ, ກຳລັງໃຈຫຼຸດລົງ, ຂີ້ຄ້ານມັກງ່າຍ, ສໍ້ລາດບັງຫຼວງ, ບໍ່ມີເຫດຜົນມັກປ້ອຍດ່າ ວ່າຄວາມກັນຕະຫຼອດ ບັນຫາໃນສັງຄົມວຸ້ນວາຍບໍ່ມີໃຜແກ້ໄຂໄດ້ ມີແຕ່ມ່ວນຊື່ນໃນວົງສຸຣາທໍ່ນັ້ນ.

ພະຍາເມືອງສາເກດ ໃຫ້ພວກອຳມາດໄປສອດແນມຕິດຕາມເບິ່ງ ພົນທະຫານ ແລະປະຊາຊົນໃນເມືອງສະໂນ ຕິດສຸຣາຫຼາຍແລ້ວຫຼືບໍ່? ເມື່ອເຫັນວ່າເຂົາຕິດສຸຣາຢ່າງໂງຫົວບໍ່ຂຶ້ນ ຈຶ່ງໄດ້ໂອກາດດີຍົກທັບເຂົ້າໄປບຸກຕີເມືອງສະໂນ ແລ້ວກໍໄດ້ຢ່າງງ່າຍດາຍ. (ຈົບ)

**ນິທານເລື່ອງນີ້ສອນໃຫ້ຮູ້ວ່າ**: ອຳນາດຂອງສິ່ງມຶນເມົາເຮັດໃຫ້ຄົນດື່ມກິນແລ້ວ ບໍ່ມີສະຕິຂາດການຊົງຕົວ ບໍ່ມີເຫື່ອແຮງ ປັນຍາຫຼຸດລົງ, ບໍ່ມີເຫດຜົນໃນການກະທຳ ດັ່ງນັ້ນ ຈຶ່ງມີສິນຂໍ້ທີ່ 5 ຄືສຸຣາເມລະຍະປະມາ: ບໍ່ໃຫ້ເສບສຸຣາ ແລະສິ່ງມຶນເມົາ ເພາະເປັນເຫດໃຫ້ຄົນເຮົາປະມາດ ແລະເຮັດຜິດສິນໃນທຸກໆ ຂໍ້ໄດ້ ເປັນທີ່ເສຍຫາຍຕໍ່ປະເທດຊາດບ້ານເມືອງ ແລະຕົນເອງ.ຯ.

## ກິດຈະກຳ: " ລະຄອນຄົນເມົາ "

ແບ່ງນັກຮຽນເປັນກຸ່ມໆ ລະ 10 ຄົນ ໃຫ້ແຕ່ລະກຸ່ມຄົ້ນຄວ້າແຕ່ງບົດລະຄອນ ກ່ຽວກັບສິ່ງມຶນເມົາທີ່ເຄີຍພົບເຫັນຜ່ານມາ ແລ້ວຂຶ້ນນຳສະເໜີເລົ່າເລື່ອງ ຫຼືສະແດງກໍໄດ້ ເວລາຄົ້ນຄວ້າ 20 ນາທີ ຂຶ້ນນຳສະເໜີກຸ່ມລະ 3 ນາທີ.

## ເກມ: " ຂີ້ເມົາລອດຮົ້ວ "

ຄູນຳນັກຮຽນລົງໄປທີ່ເດີ່ນໂຮງຮຽນ ແລ້ວແບ່ງກຸ່ມໆລະ 10 ຄົນ ແຕ່ລະກຸ່ມກຽມອຸປະກອນສ້າງຮົ້ວຈຳລອງ ຄື ເອົາເຊືອກຟາງຍາວປະມານ 10 m ສອງເສັ້ນ. ແຕ່ລະເສັ້ນມັດໃສ່ຫລັກ ເຮັດເປັນຮົ້ວສອງຮາວ ຫ່າງກັນປະມານສອງຄືບ ຮາວລຸ່ມຫ່າງຈາກດິນພຽງຫົວເຂົ່າຂອງເດັກທີ່ຫຼິ້ນເກມນີ້ ແລ້ວເອົາເຊືອກຟາງອີກເສັ້ນໜຶ່ງຖັກໃສ່ຮາວເທິງ ແລະຮາວລຸ່ມເປັນຕາສາມຫຼ່ຽມ ພໍໃຫ້ຄົນສາມາດລອດຕາສາມຫຼ່ຽມນັ້ນໄດ້ໂດຍບໍ່ຂູນກັບຮົ້ວ (ດັ່ງຮູບ).



ໃຫ້ແຕ່ລະຄົນທົດລອງລອດເບິ່ງ ຈັບເວລາໄວ້ເພື່ອສົມທຽບໃສ່ລອດຕອນເມົາ ແລ້ວຄູແນະນຳໃຫ້ນັກຮຽນປິ່ນວຽນເພື່ອໃຫ້ເມົາ (ວິນຫົວ)ໂດຍເຮັດໄດ້ 2 ວິທີຄື:

1) ວິທີຢືນກົ່ງວາແຂນອອກ ປິ່ນຂວາໃຫ້ໄດ້ 10 ຮອບ ພາຍໃນ 10 ວິນາທີ ແລ້ວໄປລອດຮົ້ວ ໂດຍບໍ່ໃຫ້ຂູນຮົ້ວ **ໃຫ້ແຕ່ລະກຸ່ມຈັບເວລາ ແມ່ນໃຜໃນກຸ່ມຈະລອດຮົ້ວໄດ້ໄວກວ່າກັນ.**
2) ວິທີຢືນແບບຄວາຍ ຄືເອົາມືຊ້າຍແຕະພື້ນດິນ ມືຂວາຈັບແຂນຊ້າຍແລ້ວຍ່າງອ້ອມມືຊ້າຍໃຫ້ໄດ້ 10 ຮອບພາຍໃນ 15 ວິນາທີ ແລ້ວໄປລອດຮົ້ວໂດຍບໍ່ໃຫ້ຂູນຮົ້ວ (ຈັບເວລາໃຜຈະໄວກວ່າ).

**ຄູສະຫຼຸບວ່າ**: ຖ້າຄົນເມົາຫຼືວິນຫົວຍ້ອນເຫດຜົນຕ່າງໆ ເຊັ່ນ: ກິນ, ດື່ມ, ຊີດຂອງມືພິດ, ປິ່ນວຽນແລ້ວມຶນເມົາຜິດຈາກປົກກະຕິບໍ່ສາມາດຊົງຕົວໃຫ້ທ່ຽງໄດ້ ຍ້ອນເລືອດລົມໃນຮ່າງກາຍມີອັນປ່ຽນຈາກພາວະປົກກະຕິ, ຖ້າຮ້າຍແຮງກໍຄວບຄຸມສະຕິອາລົມບໍ່ໄດ້ ກາຍເປັນຄົນບໍ່ມີສິນຄືບໍ່ປົກກະຕິນັ້ນເອງ ເວລາເວົ້າ ແລະເຮັດສິ່ງໃດໜຶ່ງມັກຜິດພາດຢູ່ສະເໝີ ດັ່ງນັ້ນຈຶ່ງມີສິນຂໍ້ **ສຸຣາເມ** ໄວ້ໃຫ້ຄົນເຮົາໄດ້ປະຕິບັດ.ຯ

*( ກິດຈະກຳ ເໝາະສຳລັບມໍ 1 ຂຶ້ນໄປ )*

## ຜູ້ຖືສິນ ບໍ່ປະຕິບັດຕົນໃຫ້ງາມຕາມປະຕິຍານ

**1) ສິນຂາດ** ຄື ສິນຂອງຜູ້ທີ່ສະມາທານສິນແລ້ວ ແຕ່ບໍ່ຮັກສາສິນນັ້ນໃຫ້ດີ ກະທຳຜິດເປັນປະຈຳ ເຮັດ ໃຫ້ຂາດຕົ້ນຂາດປາຍ ຫາບ່ອນບໍລິສຸດຈິງໆ ໄດ້ຍາກ ເໝືອນຜ້າທີ່ຂາດແຄມຮອບທັງຜືນ ຫຼືຂາດກາງຜືນເລີຍ.

**2) ສິນທະລຸ** ຄື ສິນຂອງຜູ້ທີ່ມັກກະທຳຜິດສິນຂໍ້ກາງໆ ແຕ່ສິນຂໍ້ຕົ້ນ ແລະຂໍ້ປາຍຍັງດີຢູ່ ເໝືອນຜ້າທີ່ທະລຸຂາດກາງຜືນ.

**3) ສິນດ່າງ** ຄື ສິນຂອງຜູ້ທີ່ມັກກະທຳຜິດເທື່ອດຽວ 2 ຫຼື 3 ຂໍ້ ເໝືອນ ງົວດ່າງທີ່ມີລາຍໄປ ທົ່ວທັງຕົວ.

**4) ສິນພ້ອຍ** ຄື ສິນຂອງຜູ້ມັກກະທຳຜິດສິນຄັ້ງລະຂໍ້ ຫຼືສອງຂໍ້ ເຊິ່ງມີສິນບໍລິສຸດແດ່ ແລະ ບໍ່ ບໍລິສຸດແດ່ ສະຫຼັບກັນໄປ.

## ປະໂຫຍດຈາກການຮັກສາສິນ (ອານິສົງສິນ)

ຜູ້ທີ່ສະມາທານ ແລະຮັກສາສິນ ຍ່ອມໄດ້ຮັບປະໂຫຍດ (ອານິສົງ) ດັ່ງນີ້:

### 1. ປະໂຫຍດໃນປັດຈຸບັນ.........

(1) ບໍ່ປະສົບຄວາມເດືອດຮ້ອນໃນພາຍໜ້າ.

(2) ຍ່ອມປະສົບຄວາມສຳເລັດໃນການທຳມາຫາກິນ.

(3) ຊື່ສຽງກຽດຕິຍົດຂອງຜູ້ມີສິນ ຍ່ອມແຜ່ຫຼາຍໄປໃນໝູ່ຄົນດີ (ນໍຣະຊົນ).

(4) ເປັນຜູ້ອົງອາດ ບໍ່ເກີ້ເຂີນ ເມື່ອເຂົ້າໄປໃນໝູ່ຂອງຜູ້ມີສິນ.

(5) ເປັນຜູ້ບໍ່ຫຼົງ ຄື ກ່ອນຕາຍມີສະຕິ ຕາຍໄປຢ່າງສະຫງົບ ບໍ່ດີ້ນລົນທົນທວາຍ.

### 2. ປະໂຫຍດໃນຊາດໜ້າ..........

ເມື່ອຕາຍໄປແລ້ວ ຍ່ອມເຂົ້າສູ່ສຸຄະຕິໂລກສະຫວັນ ບໍ່ຕ້ອງຕົກນະຮົກ (ແດນ ແຫ່ງຄວາມບໍ່ດີ).

### 3. ປະໂຫຍດຢ່າງສູງ

ທຸກເທື່ອໃນຕອນທ້າຍຂອງການສະມາທານສິນ ພຣະຜູ້ໃຫ້ສິນຈະບອກເປັນພາສາບາລີຢູ່ສະເໝີ (ຄຳມ້ວນ ສິນ) ວ່າ:

**ອິມານິ ປັນຈະ ສິກຂາປະທານິ** = ສິນຫ້າທີ່ຂ້າພະເຈົ້າກ່າວນຳໃຫ້ນີ້;

**ສີເລນະ ສຸຄະຕິງ ຍັນຕິ** = ຄົນຈະມີຄວາມສຸກໄດ້ ກໍເພາະສິນ;

**ສີເລນະ ໂພຄະສຳປະທາ** = ຄົນຈະມີຊັບສົມບັດໄດ້ ຈະຕ້ອງມີສິນ ສົມບັດນັ້ນຈຶ່ງໝັ້ນຄົງຢູ່ນຳ.

**ສີເລນະ ນິບພຸຕິງ ຍັນຕິ** = ຄົນຈະໄປນິບພານໄດ້ ກໍເພາະມີສິນບໍລິສຸດ.

**ຕັດສະມາ ສີລັງ ວິໂສທະເຍ** = ເພາະສະນັ້ນ ພຸດທະບໍລິສັດ ຈົ່ງສຳຣະສິນຂອງຕົນໃຫ້ສະອາດ.

# ບົດທີ 3:

## ວິຣັດ ແລະເບນຈະກັນລະຍານະທັມ

### 1. ຄວາມໝາຍ ແລະອົງປະກອບຂອງວິຣັດ.

ການປະພຶດ ສຶກສາ ແລະປະຕິບັດໃນອົງສິນທັງ 5 ປະການນັ້ນ ຕ້ອງຕັ້ງໃຈ ແລະເອົາໃຈໃສ່ຢ່າງຈິງຈັງ ໂດຍມີ **<u>ວິຣັດ</u>** (ຂໍ້ເວັ້ນ) 3 ຢ່າງ ໂດຍຕັ້ງໃຈອະທິດຖານ ເອົາຢ່າງໃດຢ່າງໜຶ່ງເປັນເຄື່ອງມືໃນຄວາມລະມັດລະວັງ ປ້ອງກັນການປະ ພຶດຜິດໃນເບນຈະສິນນັ້ນ ຄື:

1.1. **ສະມາທານວິຣັດ** = ການງົດເວັ້ນ ດ້ວຍການສະມາທານສິນຈາກພຣະສົງ.

1.2. **ສັມປັຕຕະວິຣັດ** = ການງົດເວັ້ນ ດ້ວຍຄວາມຕັ້ງໃຈ ເມື່ອປະສົບກັບ ເຫດການປັຈຈຸບັນ.

1.3. **ສະມຸຈເສດວິຣັດ** =ການງົດເວັ້ນ ໄດ້ຢ່າງເດັດຂາດ ມີຢູ່ສະເພາະໃນພຣະອະຣິຍະບຸກຄົນເທົ່ານັ້ນ ເຊິ່ງຖືວ່າເປັນການອັດຊ່ອງທາງ ທີ່ຕົນເອງຈະເກີດ ຄວາມເສຍຫາຍ ດັ່ງນີ້:

**ສິນຫ້າຂໍ້ທີ 1:** ປ້ອງກັນທາງທີ່ຕົນຈະເສຍຫາຍ ຍ້ອນຄວາມໂຫດຮ້າຍ.

**ສິນຫ້າຂໍ້ທີ 2:** ປ້ອງກັນທາງທີ່ຕົນຈະເສຍຫາຍ ຍ້ອນຄວາມມືໄວ ໂລບ ມາກໃນວັດຖຸ.

**ສິນຫ້າຂໍ້ທີ 3:** ປ້ອງກັນທາງທີ່ຕົນຈະເສຍຫາຍ ຍ້ອນຄວາມໃຈຊົ່ວ ໂລບ ມາກໃນກາມ.

**ສິນຫ້າຂໍ້ທີ 4:** ປ້ອງກັນທາງທີ່ຕົນຈະເສຍຫາຍ ຍ້ອນຄວາມຂາດສັດຈະວາຈາ.

**ສິນຫາຂໍ້ທີ 5:** ປ້ອງກັນທາງທີ່ຕົນຈະເສຍຫາຍ ຍ້ອນຄວາມຂາດສະຕິ- ສັມປະຊັນຍະ.

### 2. ຄວາມໝາຍຂອງເບນຈະກັນລະຍານະທັມ (ເບນຈະທັມ).

ເບນຈະທັມ ໝາຍເຖິງ ຫຼັກປະຕິບັດສຳຫຼັບການກະທຳຄວາມດີ 5 ປະ ການ
ເປັນຫຼັກປະຕິບັດເບື້ອງຕົ້ນສຳ ລັບບຸກຄົນທົ່ວໄປ ເພື່ອຄວາມສະຫງົບສຸກ ຂອງຕົນເອງ ແລະສັງຄົມທີ່ຄວນປະພຶດຄູ່ກັນໄປກັບການປະພຶດປະຕິບັດ ໃນເບນຈະສິນ ຮຽກວ່າ: ເບນຈະກັນລະຍານະທັມ ຫຼື ເບນຈະທັມ ກໍໄດ້.

ເບນຈະທັມ= ທັມ 5 ປະການ ເບນຈະກັນລະຍານະທັມ = ທັມອັນດີງາມ 5 ປະການ.

### 3. ອົງປະກອບຂອງເບນຈະທັມ (ເບນຈະກັນລະຍານະທັມ).

3.1. **ເມຕຕາ-ກະຣຸນາ =** ຄວາມຮັກ-ຄວາມສົງສານ ໝາຍເຖິງ ຄວາມຮັກແພງປາຖະໜາໃຫ້ ຜູ້ອື່ນມີຄວາມສຸກກາຍສະບາຍໃຈ ແລະມີຄວາມສົງສານ ຄິດຊ່ວຍເຫຼືອໃຫ້ຜູ້ອື່ນໄດ້ພົ້ນທຸກຢູ່ສະເໝີ ເມື່ອເຫັນເຂົາຕົກທຸກໄດ້ຍາກ.

3.2. **ສັມມາອາຊີວະ** = ການທຳມາຫາລ້ຽງຊີບໃນທາງທີ່ຖືກຕ້ອງ ໝາຍເຖິງ ການປະກອບອາຊີບເຮັດໜ້າທີ່ ການງານໃນທາງບໍລິສຸດ ບໍ່ຜິດຕໍ່ກົດໝາຍ ແລະສິລະທັມ.

3.3. **ກາມະສັງວອນ =** ມີຄວາມສຳລວມໃນກາມະຄຸນ ໝາຍເຖິງ ມີຄວາມພໍໃຈແລະຍິນດີໃນຄູ່ຄອງຂອງຕົນ ມີຄວາມລະມັດລະວັງໃນການປະພຶດຜິດຕໍ່ລູກ ເມຍຂອງຄົນອື່ນ.

**3.4. ສັຈຈະວາຈາ =** ຄຳເວົ້າທີ່ຈິງໃຈ ໝາຍເຖິງການເວົ້າດ້ວຍຄວາມຈິງ ເວົ້າໃນສິ່ງທີ່ຄວນເວົ້າມີຄວາມຈິງໃຈ ເວົ້າແນວໃດເຮັດແນວນັ້ນ ບໍ່ຫຼອກລວງ ຄິດຮ້າຍຕໍ່ຜູ້ອື່ນ ມີຄວາມຫວັງດີຕໍ່ຜູ້ອື່ນເຮັດໃຫ້ເປັນທີ່ເຊື່ອຖືຂອງຄົນທົ່ວໄປ.

**3.5. ສະຕິ-ສັມປະຊັນຍະ=** ຄວາມລະນຶກໄດ້-ຄວາມຮູ້ເນື້ອຄີງ ໝາຍເຖິງ ມີຄວາມຮອບຄອບ ລະມັດລະວັງ ບໍ່ປະໝາດ ລະນຶກຮູ້ສຶກໂຕຢູ່ຕະຫຼອດເວລາ ວ່າສິ່ງໃດຄວນເຮັດ ສິ່ງໃດບໍ່ຄວນເຮັດ ແລະສິ່ງໃດຄວນເວົ້າ ສິ່ງໃດບໍ່ຄວນເວົ້າ.

***<u>ໝາຍເຫດ:</u>*** *ໃນວິຣັດນີ້ ແນະນຳສະເພາະຄູເພື່ອເປັນການຂະຫຍາຍຄວາມໃຫ້ກວ້າງອອກ.*

## 4. <u>ການທຽບຄູ່ລະຫວ່າງ</u> <u>ເບນຈະສິນ</u> <u>ກັບ</u> <u>ເບນຈະທັມ</u>:

ການທີ່ບຸກຄົນເຮົາບໍ່ປະພຶດຜິດຄາດເຄື້ອນໄປຈາກເບນຈະສິນ (ສິນ 5) ຂໍ້ໃດຂໍ້ໜຶ່ງໃນ 5 ນັ້ນ ກໍ່ຕ້ອງໄດ້ມີທັມໄປປະຄັບປະຄອງ ຄວບຄຸມຈິດໃຈ ດ້ວຍຫຼັກ ທັມ 5 ປະການ ທີ່ມາຄຽງຄູ່ກັບສິນ 5 ມີດັ່ງນີ້:

| **<u>ສິນ</u>** | | **<u>ທັມ</u>** |
|---|---|---|
| 1) ປານາຕິປາຕາ.. | = | ເມຕຕາ-ກະຣຸນາ (ມີຄວາມສົງສານຢາກຊ່ວຍເຫຼືອ). |
| 2) ອະທິນນາທານາ.. | = | ສັມມາອາຊີວະ (ລ້ຽງຊີວິດໃນທາງທີ່ຊອບ). |
| 3) ກາເມສຸມິຈສາຈານ | = | ກາມະສັງວອນ (ສັງລວມລະວັງທາງເພດບໍ່ລ່ວງເກີນ). |
| 4) ມຸສາວາທ | = | ສັຈຈະວາຈາ (ຮັກສາຄຳສັນຍາໃນຕົນ ແລະຕໍ່ຄົນອື່ນ). |
| 5) ສຸຣາເມໄຣ | = | ສະຕິ-ສັມປະຊັນຍະ (ມີຄວາມລະນຶກໄດ້ ແລະຮູ້ເນື້ອຄີງສະເໝີ). |

## 5. ປະໂຫຍດຈາກການປະພຶດເບນຈະທັມ

1) ເຮັດໃຫ້ຊີວິດຂອງຕົນເອງ ແລະຜູ້ອື່ນມີຄວາມສຸກ.
2) ຊີວິດມີຄວາມສະຫງົບສຸກ ຍ້ອນປະກອບອາຊີບສຸຈະຣິດ.
3) ເຮັດໃຫ້ຊີວິດຄອບຄົວ ມີຄວາມຮັກແພງ ເຄົາລົບ ນັບຖື ແລະປອງດອງກັນ.
4) ໄດ້ຮັບຄວາມເຊື່ອຖືໄວ້ວາງໃຈ ຈາກບຸກຄົນອື່ນ.
5) ເຮັດໃຫ້ການດຳລົງຊີວິດ ຢູ່ໃນຄວາມບໍ່ປະໝາດ.

.

<u>ຕົວຢ່າງ:</u>

**<u>ແຜນການສອນ</u>**

**ຫົວຂໍ້**: ປານາຕິບາດ **ຊັ້ນຮຽນ**, ປໍ4 **ຊື່ຜູ້ສອນ**...........

| ຈຸດປະສົງ | ເນື້ອໃນ | ອຸປະກອນ | ເວລາ | ກ/ກ. ການຮຽນ-ການສອນ | ປະເມີນ |
|---|---|---|---|---|---|
| -ເພື່ອປູກຝັງຄວາມເມດຕາເບື້ອງຕົ້ນ. | ນິທານ: ລີງນ້ອຍຜູ້ອາພັບ ຖືກນາຍພານຂ້າແມ່ ແລ້ວຈັບເອົາມາໄວ້ໃນເຮືອນ,ກຳສະໜອງນາຍພານ ລູກຊາຍຂອງລາວຫລົງທາງເຂົ້າປ່າເລິກ,ນາຍພານສຳນຶກບາບໄດ້ຈຶ່ງເອົາໄປປ່ອຍ ເຮັດໃຫ້ລີງນ້ອຍຕ້ອງພະຈົນໄພແຕ່ຜູ້ດຽວ............... | ປື້ມນິທານ ຄູນນະທັມ. | 10ນາທີ | ນາຍຄູ, ເລົ່ານິທານໃຫ້ເດັກຟັງ, ເດັກກໍນັ່ງຟັງ.<br>ຖາມເດັກວ່າ<br>ນາຍພານເອົາຫຍັງຂ້າລີງ? | ເດັກຕອບໄດ້ຈັກ%?<br>ຕິດຕາມເບິ່ງຄວາມສົນໃຈຂອງເດັກເປັນແນວໃດ? |
| ................................. | .......................................... | ............ | ........... | ....................................... | .................. |
| -ເພື່ອໃຫ້ເດັກໄດ້ສຳພັດ ກັບຊີວິດຂອງສັດ,ຕິດຕາມພຶດຕິກຳເວລາມັນພົບພໍ້ອັນຕະລາຍ. | ໄປສຳພັດຊີວິດສັດນອກຫ້ອງຮຽນ ເພື່ອເອົາປະສົບການ ຈາກທຳມະຊາດຂອງສັດ. | ປື້ມບັນທຶກ ສໍດຳ(ບິກ) | 15 ນາທີ | **<u>ຂັ້ນນຳ</u>**: ແບ່ງເປັນກຸ່ມໆ ລະສອງຄົນ ແຕ່ລະກຸ່ມກຽມປື້ມແລະສໍ.<br>ນາຍຄູນຳພາເດັກອອກນອກຫ້ອງໄປສຳພັດກັບສັດເລັກສັດນ້ອຍທີ່ຢູ່ໃກ້ ຕົວເຊັ່ນ ໝົດ,ຕັກແຕນ, ບົ້ງ......ພ້ອມທັງບອກຊື່ຂອງສັດແລະອັນຕະລາຍຈາກມັນ. | ເບິ່ງເດັກສົນໃຈບໍ່? |
| -ເພື່ອໃຫ້ເດັກໄດ້ນຳສະເໜີສິ່ງທີ່ຕົນເອງໄດ້ສຳພັດມາ. | ແຕ່ລະກຸ່ມຂຶ້ນສະເໜີຮູບແຕ້ມສັດຂອງຕົນທີ່ສຳພັດມາ ພ້ອມອະທິບາຍ | ເຈ້ຍຮູບທີ່ກຸ່ມຕົນເອງ | 15ນາທີ | ແນະນຳແຕ້ມຮູບສັດ ແລະ ຊຽນພຶດຕິກຳການສະແດງອອກ | ເດັກແຕ້ມຮູບ |

| | | | | | |
|---|---|---|---|---|---|
| | ອາການຂອງມັນ ເມື່ອພົບພໍ້ອັນຕະລາຍ. | ແຕ້ມ | | ຂອງມັນ ເພື່ອນຳສະເໜີຢູ່ໃນຫ້ອງຮຽນ. | ເປັນບໍ່? ສາມາດນຳສະເໜີໄດ້ບໍ່? |
| ……………………………… | …………………………………… | ……… | ………… | ………………………………… | …………….. |
| -ເພື່ອໃຫ້ເດັກທ່ອງຈຳໄດ້ຂໍ້ສິນທີ່ໜຶ່ງ | **ປານາຕິປາຕາ ເວລະມະນີ ສິກຂາປະທັງ ສະມາທິຍາມິ=** ຂ້າພະເຈົ້າຂໍສຶກສາຂໍ້ງົດເວັ້ນການຂ້າ, ບຽດບຽນ,ທຳຮ້າຍ ທັງຕົນເອງ ແລະຜູ້ອື່ນ. | | 5ນາທີ | <u>**ຂັ້ນສອນ**:</u> ເດັກທຸກຄົນທ່ອງສິນຫ້າຕາມຄູ. ສິນຫ້າຂໍ້ທີ່ໜຶ່ງໃຫ້ງົດເວັ້ນການຂ້າສັດ ຕັດຊີວິດຂອງຜູ້ອື່ນ,ບໍ່ບຽດບຽນ,ບໍ່ທຳຮ້າຍ, ທຸກຊີວິດມີສິດອັນຊອບທັມທີ່ຈະຢູ່ໃນໂລກໜ່ວຍນີ້ຈົນກວ່າຈະໝົດອາຍຸ, ຖ້າຜູ້ໃດເຮັດໃຫ້ເຂົ້າຕ້ອງຕາຍໂດຍເຈດຕະນາ ຜູ້ນັ້ນ ບໍ່ມີສິນ ແຕ່ມີບາບຕິດໂຕໄປ. | ເດັກທ່ອງສິນຂໍ້ທີ່ໜຶ່ງນີ້ໄດ້ບໍ່? -ແຕ່ລະຄົນທ່ອງເບິ່ງດູ໊? |
| ……………………………… | …………………………………… | ………… | ………. | ……………………………………….. | …………… |
| -ເພື່ອໃຫ້ເດັກໄດ້ສະແດງອອກທາງຄວາມຄຶດຂອງຕົນ | ແຕ້ມຮູບສັດຕາມໃຈ ແລະຄຳບັນຍາຍ | ເຈັ້ຍແຕ້ມຮູບ<br>ສໍສີ | ວຽກບ້ານ | <u>**ຂັ້ນສາຫລຸບ**:</u> ນາຍຄູຖາມ:<br>ທຸກຄົນຮັກຕົນເອງບໍ່?<br>ສັດທຸກໂຕເດ໋! ມັນຮັກຊີວິດບໍ່?<br>ຖ້າເຮົາເຮັດໃຫ້ເຂົາຕາຍຜິດສິນບໍ່?<br>-ໃຫ້ແຕ້ມຮູບສັດຕາມໃຈພວກຫລານ, ພ້ອມຂຽນຄຳອະທິບາຍຄວາມຮັກຊີວິດຂອງມັນເປັນແນວໃດ?. | ແມ່ນໃຜແຕ້ມງາມ ແລະອະທິບາຍໄດ້ດີ?<br>-ເອົາຮູບນັ້ນຕິດໄວ້ໃນຫ້ອງຮຽນເລີຍ. |